ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຳນັກງານຕັ້ງຢູ່ອາລານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

17 - 23
ກັນຍາ
2023
ປີທີ 12
ສະບັບທີ 938
ລາຍສັບປະດາ

## ຄະນະປະຈຳສະພາແຫ່ງຊາດ ພິຈາລະນາຫຼາຍບັນຫາສຳຄັນຂອງຊາດ



(ສພຊ) ເພື່ອພິຈາລະນາ ແລະ ຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຄະນະປະຈຳສະພາແຫ່ງຊາດ ມີປະສິດທິພາບ ແລະ ປະສິດທິຜົນ; ໃນລະຫວ່າງວັນທີ 13-14 ກັນຍາ 2023 ທີ່ສະພາແຫ່ງຊາດ ນະຄອນຫຼວງວຽງຈັນ ໄດ້ດຳເນີນກອງປະຊຸມຄະນະປະຈຳສະພາແຫ່ງຊາດປະຈຳເດືອນສິງຫາ 2023 ໂດຍການເປັນປະທານຂອງທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານຄະນະປະຈຳສະພາແຫ່ງຊາດ; ເຂົ້າຮ່ວມມີບັນດາທ່ານຮອງປະທານຄະນະປະຈຳສະພາແຫ່ງຊາດ, ກຳມະການຄະນະປະຈຳສະພາແຫ່ງຊາດ ແລະ ແຂກຖືກເຊີນ ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງ.

ໃນກອງປະຊຸມ, ໄດ້ຮັບຟັງການລາຍງານບົດສະຫຼຸບຕີລາຄາຜົນສຳເລັດການກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX; ແຜນການກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX; ບົດລາຍງານການກະກຽມດຳເນີນກອງປະຊຸມຮ່ວມລະຫວ່າງ ຄະນະປະຈຳສະພາແຫ່ງຊາດ ກັບຄະນະລັດຖະບານ, ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ, ອົງການກວດກາແຫ່ງລັດ, ອົງການກວດສອບແຫ່ງລັດ ແລະ ສູນກາງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າແຫ່ງຊາດລາວ ແລະ ອົງການຈັດຕັ້ງມະຫາຊົນ; ບົດລາຍງານການກະກຽມກອງປະຊຸມຍົກສູງຄຸນນະພາບທາງດ້ານເນື້ອໃນໃຫ້ແກ່ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ບົດລາຍງານກ່ຽວກັບການຄຸ້ມຄອງພາຫະນະ; ການຮຽບຮຽງກົດໝາຍ ຈຳນວນ 10 ສະບັບ ທີ່ຜ່ານການພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX; ບົດລາຍງານຄວາມຄືບໜ້າຂອງຮ່າງກົດໝາຍທີ່ຈະນຳເຂົ້າພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX; ຄວາມຄືບໜ້າການຂຽນປຶ້ມປະຫວັດສະພາແຫ່ງຊາດ; ບົດລາຍງານການສະເໜີແຕ່ງຕັ້ງຮອງປະທານສານປະຊາຊົນທ້ອງຖິ່ນ ແລະ ການສະເໜີແຕ່ງຕັ້ງຄະນະກຳມະການສອບເສັງຜູ້ພິພາກສາຊັ້ນສີ່ ຂອງສານປະຊາຊົນ; ຜົນການຄົ້ນຄວ້າໜັງສືສະເໜີຂອງລັດຖະບານ ກ່ຽວກັບການສະ

ອ່ານຕໍ່ໜ້າ 2

## ຂ່າວໜ້າໃນ



ຮອງປະທານ ກຜງສ... (ໜ້າ 3)



ພຶດຕິກຳເດັກຕິດສື່ອອນລາຍ... (ໜ້າ 10)




ຮຽນຮູ້ກົດໝາຍຕ້ານການກໍ່ການຮ້າຍ... (ໜ້າ 12)

## ຄະນະຜູ້ແທນຂັ້ນສູງສະພາແຫ່ງຊາດ ອຳນາດປະຊາຊົນກູບາ ຢ້ຽມຢາມ ລາວ



(ສພຊ) ຕ້ອນຮັບຄະນະຜູ້ແທນຂັ້ນສູງ ສະພາແຫ່ງຊາດ ອຳນາດປະຊາຊົນ ແຫ່ງສາທາລະນະລັດ ກູບາ ນຳໂດຍ ສະຫາຍ ນາງ ແອນນາ ມາເລຍ ມາລີ ມາຊາໂດ ກຳມະການສູນກາງພັກກອມມູນິດກູບາ, ຮອງປະທານສະພາແຫ່ງຊາດອຳນາດປະຊາຊົນ, ຮອງປະທານສະພາແຫ່ງລັດ ສາທາລະນະລັດ ກູບາ ຢ້ຽມຢາມ ຢູ່ ສປປ ລາວ ຢ່າງເປັນທາງການ ໃນລະຫວ່າງວັນທີ 10-13 ກັນຍາ 2023.

ໃນໄລຍະຢ້ຽມຢາມ ຢູ່ ສປປ ລາວ ຄະນະໄດ້ຢ້ຽມຂ່ຳນັບ ແລະ ພົບປະເຮັດວຽກກັບບັນດາການນຳຂັ້ນສູງ ຂອງ ສປປ ລາວ ດັ່ງນີ້:

ໃນວັນທີ 11 ກັນຍາ

ອ່ານຕໍ່ໜ້າ 3

## ເຜີຍແຜ່ແນະນຳການປະເມີນຄວາມໄວ້ວາງໃຈ



(ສພຊ) ເພື່ອຮັບປະກັນການປະເມີນຄວາມໄວ້ວາງໃຈໃນການປະຕິບັດໜ້າທີ່ບຸກຄະລາກອນທີ່ສະພາແຫ່ງຊາດເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງໃຫ້ສຳເລັດຕາມແຜນການ, ມີປະສິດທິພາບ, ປະສິດທິຜົນ ໃຫ້ເປົ້າໝາຍທີ່ຖືກປະເມີນ ແລະ ການຈັດຕັ້ງຕ່າງໆທີ່ກ່ຽວຂ້ອງ ຮັບຮູ້ເຂົ້າໃຈລາຍລະອຽດກ່ຽວກັບການຂຽນບົດລາຍງານການປະຕິບັດໜ້າທີ່ຂອງຕົນໃຫ້ຖືກຕ້ອງຕາມແບບຟອມທີ່ໄດ້ກຳນົດໄວ້ມີເນື້ອໃນກະທັດຮັດ, ຄົບຖ້ວນ ແລະ ຈະແຈ້ງ. ດັ່ງນັ້ນ, ໃນວັນທີ 11 ກັນຍາຜ່ານມາ, ທີ່ສະພາແຫ່ງຊາດ ໄດ້ຈັດກອງປະຊຸມການເຜີຍແຜ່ແນະນຳການປະເມີນຄວາມໄວ້ວາງໃຈ ໃນການປະຕິບັດໜ້າທີ່ຂອງບຸກຄະລາກອນທີ່ສະພາແຫ່ງຊາດເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ ໂດຍການເປັນປະທານຂອງທ່ານ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ, ເຂົ້າຮ່ວມມີບັນດາຮອງປະທານສະພາແຫ່ງຊາດ, ຮອງປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ 18 ເຂດ, ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ຮອງຫົວໜ້າຫ້ອງວ່າການສູນກາງພັກ, ຮອງຫົວໜ້າຄະນະຈັດຕັ້ງສູນກາງພັກ, ຕາງໜ້າຫົວໜ້າຫ້ອງວ່າການສຳນັກງານປະທານປະເທດ, ຕາງໜ້າຫ້ອງການສານປະຊາຊົນສູງສຸດ ແລະ ພະນັກງານກ່ຽວຂ້ອງຈຳນວນໜຶ່ງ.

ກອງປະຊຸມໄດ້ຮັບຟັງ

ອ່ານຕໍ່ໜ້າ 2

## ກວດກາເນື້ອໃນຮອບດ້ານ ຮ່າງກົດໝາຍວ່າດ້ວຍການທ່ອງທ່ຽວ



(ສພຊ) ໃນລະຫວ່າງວັນທີ 11-12 ກັນຍາ 2023, ທີ່ເມືອງວັງວຽງ ແຂວງວຽງຈັນ ສະພາແຫ່ງຊາດ ໄດ້ມີກອງປະຊຸມກວດກາເນື້ອໃນຮອບດ້ານຮ່າງກົດໝາຍວ່າດ້ວຍການທ່ອງທ່ຽວ (ສະບັບປັບປຸງ) ໂດຍການເປັນປະທານຂອງທ່ານ ພົທ. ສຸວອນ ເລືອງບຸນມີ ຮອງປະທານສະພາແຫ່ງຊາດ; ມີບັນດາປະທານ-ຮອງປະທານກຳມາທິການ, ຮອງຫົວໜ້າຫ້ອງວ່າການສຳນັກງານປະທານປະເທດ; ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ຮອງລັດຖະມົນຕີກະຊວງຍຸຕິທຳ, ຄະນະທີ່ປຶກສາທາງດ້ານກົດໝາຍ, ຫົວໜ້າ-ຮອງຫົວໜ້າກົມ ແລະ ພະນັກງານທີ່ກ່ຽວຂ້ອງຂອງສະພາແຫ່ງຊາດເຂົ້າຮ່ວມ.

ອ່ານຕໍ່ໜ້າ 3

## ປຶກສາຫາລື ແລະ ທາບທາມຄຳເຫັນ ໃສ່ຮ່າງມະຕິ ແລະ ຮ່າງປຶ້ມຄູ່ມື



(ສພຊ) ກອງປະຊຸມປຶກສາຫາລື ແລະ ທາບທາມຄຳຄິດເຫັນໃສ່ຮ່າງມະຕິຂອງຄະນະປະຈຳສະພາແຫ່ງຊາດ ແລະຮ່າງປຶ້ມຄູ່ມືກ່ຽວກັບການຄຸ້ມຄອງວຽກງານສາຍດ່ວນ ແລະ ຕູ້ຮັບຄຳສະເໜີ ໄດ້ຈັດຂຶ້ນໃນວັນທີ 12-15 ກັນຍາ 2023 ທີ່ເມືອງວັງວຽງ ແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ ນາງ ປິ່ງຄຳ ລາຊະສິມມາ ເລຂາທິການສະພາແຫ່ງຊາດ, ເຂົ້າຮ່ວມມີທ່ານ ສີງຄຳ ວົງພະຈັນ ຮອງເລຂາທິການສະພາແຫ່ງຊາດ, ມີບັນດາຄະນະ

ອ່ານຕໍ່ໜ້າ 3

## ສພຊ ຈັດກອງປະຊຸມພົບປະແບບໂຕະມົນ ຮ່ວມກັບທີມງານນັກການທູດເອີຣົບ ປະຈຳ ສປປ ລາວ




(ສພຊ) ວັນທີ 12 ກັນຍາ 2023 ສະພາແຫ່ງຊາດ (ສພຊ) ໄດ້ຈັດກອງປະຊຸມພົບປະແບບໂຕະມົນຮ່ວມກັບທີມງານນັກການທູດເອີຣົບ ປະຈຳ ສປປ ລາວ. ກອງປະຊຸມຄັ້ງນີ້

ອ່ານຕໍ່ໜ້າ 4

## ຄະນະປະຈຳ...

(ຕໍ່ຈາກໜ້າ 1)

ເໜີຂໍທັບປ່ຽນທີ່ດິນປ່າໄມ້ ຂອງໂຄງການກໍ່ສ້າງເສັ້ນທາງຍຸດທະສາດປ້ອງກັນຊາດ ຢູ່ເຂດເມືອງພູວົງ ແຂວງອັດຕະປື; ບົດລາຍງານຄວາມຄືບໜ້າໃນການແກ້ໄຂບັນຫາເຄັ່ງຮ້ອນຂອງເສດຖະກິດ-ການເງິນ, ບັນຫາເງິນເຟີ້, ອັດຕາແລກປ່ຽນ, ລາຄາສິນຄ້າ ແລະ ໜີ້ສິນຕ່າງປະເທດ; ບົດລາຍງານການກະກຽມເນື້ອໃນກອງປະຊຸມຮ່ວມລະຫວ່າງຄະນະປະຈຳສະພາແຫ່ງຊາດກັບສູນກາງແນວລາວສ້າງຊາດ ກ່ຽວກັບການຍົກສູງຄຸນນະພາບການປະຕິບັດສິດ ແລະ ໜ້າທີ່ຂອງອົງການແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ ໃນການຕິດຕາມກວດກາການເຄື່ອນໄຫວຂອງສະພາແຫ່ງຊາດ; ການອອກນິຕິກຳໃຕ້ກົດໝາຍກ່ຽວກັບການແກ້ໄຂປາກົດ ການຫຍໍ້ທໍ້ທາງສາສະໜາ; ບົດລາຍງານຜົນການເຄື່ອນໄຫວເກັບກຳຂໍ້ມູນວຽກງານບຸກຄະລາກອນ ເພື່ອກະກຽມການເລືອກຕັ້ງສະມາຊິກສະພາຢູ່ບັນດາແຂວງຈຳນວນໜຶ່ງ; ບົດລາຍງານການກະກຽມກອງປະຊຸມກາງສະໄໝ ການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດຊຸດທ IX, ສະພາປະຊາຊົນແຂວງ ຊຸດທີ II; ການກະກຽມວຽກງານປະເມີນຄວາມໄວ້ວາງໃຈ ຕໍ່ການປະຕິບັດໜ້າທີ່ຂອງບຸກຄະລາກອນ ທີ່ສະພາແຫ່ງຊາດເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ; ບົດລາຍງານຜົນສຳເລັດການດຳເນີນກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງສະພາປະຊາຊົນຂັ້ນແຂວງທົ່ວປະເທດ ໂດຍສະເພາະຜົນການປະເມີນຄວາມໄວ້ວາງໃຈໃນການປະຕິບັດໜ້າທີ່ບຸກຄະລາກອນ ທີ່ສະພາປະຊາຊົນຂັ້ນແຂວງ ເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ ແລະ ຜົນການປະເມີນການຈັດຕັ້ງປະຕິບັດ 4 ກົດໝາຍ ໃນຂົງເຂດສະພາແຫ່ງຊາດ.



ຈາກນັ້ນ, ກອງປະຊຸມໄດ້ເອົາໃຈໃສ່ຄົ້ນຄວ້າປະກອບຄຳເຫັນຢ່າງມີຈຸດສຸມ, ກົງໄປກົງມາ ໃສ່ບັນດາບົດລາຍງານຕ່າງໆທີ່ນຳມາພິຈາລະນາໃນກອງປະຊຸມຄັ້ງນີ້ ເພື່ອຮັບປະກັນການຕົກລົງບັນຫາຢ່າງມີຄວາມເປັນເອກະພາບ, ສາມາດເປັນບ່ອນອີງໃນການຈັດຕັ້ງປະຕິບັດ ແລະ ນຳຜົນປະໂຫຍດລວມມາສູ່ປະເທດຊາດ ແລະ ປະຊາຊົນບັນດາເຜົ່າຢ່າງແທ້ຈິງ.

ໃນວັນທີ 15 ກັນຍາ 2023 ກອງປະຊຸມຍັງຈະໄດ້ສືບຕໍ່ຮັບຟັງການລາຍງານການຈັດສັນງົບປະມານການລົງທຶນຂອງລັດ ປະຈຳປີ 2024; ລາຍງານການຈັດສັນງົບປະມານການລົງທຶນຂອງລັດ ປະຈຳປີ 2023 ທີ່ຍັງຄ້າງ ຮອດປັດຈຸບັນ; ລາຍງານການຮ່າງມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການເຂົ້າຮ່ວມແຕ່ຫົວທີຂອງສະພາແຫ່ງຊາດ ໃນການສ້າງ, ພິຈາລະນາຮັບຮອງ ແລະ ຈັດຕັ້ງປະຕິບັດ ແຜນງົບປະມານແຫ່ງລັດ ແລະ ແຜນການລົງທຶນຂອງລັດ; ໜັງສືສະເໜີຂອງລັດຖະບານ ກ່ຽວກັບການຂໍເລື່ອນເວລາໃນການຈັດຕັ້ງປະຕິບັດ ມາດຕາ 36, 39 ແລະ 100 ຂອງກົດໝາຍວ່າດ້ວຍການປະກັນໄພ (ສະບັບປີ 2019); ໜັງສືສະເໜີຂອງລັດຖະບານ ກ່ຽວກັບການສະເໜີຂໍດັດແກ້ ມະຕິຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 062/ຄປຈ, ລົງວັນທີ 4 ເມສາ 2014 ເພື່ອຂະຫຍາຍເວລາຂອງການຍົກເວັ້ນການປະຕິບັດກົດໝາຍທີ່ຕິດພັນກັບການຈ່າຍເງິນປັນຜົນຂອງໂຄງການເຂື່ອນໄຟຟ້ານ້ຳງຽບ 1; ການສະເໜີຂໍການພິຈາລະນາ ໃຫ້ສັດຕະຍາບັນແກ່ສົນທິສັນຍາ ວ່າດ້ວຍການຊ່ວຍເຫຼືອ ເຊິ່ງກັນ ແລະ ກັນ ທາງດ້ານຍຸຕິທຳ ໃນບັນຫາແພ່ງ ລະຫວ່າງ ສປປ ລາວ ແລະ ສສ.ຫວຽດນາມ; ລາຍງານການກະກຽມຕ້ອນຮັບການມາຢ້ຽມຢາມ ແລະ ເຮັດວຽກຂອງທ່ານເລຂາທິການໃຫຍ່ໄອປາ ພ້ອມດ້ວຍຄະນະ ໃນລະຫວ່າງວັນທີ 17-21 ກັນຍາ 2023 ທີ່ ສປປ ລາວ; ລາຍງານຂໍທິດຊີ້ນຳກ່ຽວກັບການກະກຽມເປັນເຈົ້າພາບຈັດກອງປະຊຸມສຸດຍອດລັດຖະສະພາກຳປູເຈຍ-ລາວ-ຫວຽດນາມ (CLV) ຄັ້ງທີ 1 ໃນລະຫວ່າງວັນທີ 4-8 ທັນວາ 2023 ທີ່ນະຄອນຫຼວງວຽງຈັນ ແລະ ການຕິດຕາມກວດກາຮ່ວມ 3 ສະພາແຫ່ງຊາດ ລາວ-ຫວຽດນາມ-ກຳປູເຈຍ ແລະ ການລາຍງານຜົນສຳເລັດ ຂອງການໄປຢ້ຽມຢາມ ສປ ຈີນ ແລະ ມົງໂກລີ ຢ່າງເປັນທາງການໃນລະຫວ່າງວັນທີ 3-10 ກັນຍາ 2023.



**(ນາງ ສຸພາວັນ ທອມສະນິດ)**

## ເລື່ອງ ເດັ່ນ ຂ່າວ ເດັດ

***# ຄັດໂດຍ: ທອມສະນິດ***

*❒ ໃນແຕ່ລະປີ ກະຊວງສຶກສາທິການ ແລະ ກິລາ ໄດ້ສົ່ງນັກສຶກສາທີ່ປະກອບເອກະສານຜ່ານກະຊວງໃນທຸກລະດັບໄປຮຽນຕ່າງປະເທດ ປະມານ 3.000 ກວ່າຄົນ ເຊິ່ງສະຖິຕິນັກສຶກສາໄປຮຽນຕ່າງປະເທດ ແຕ່ປີ 2018 ເຖິງ ເດືອນກໍລະກົດ ປີ 2023 ມີ 37 ປະເທດ, ມີນັກສຶກສາທັງໝົດ 23.310 ຄົນ, ຍິງ 11.504 ຄົນ, ສະເລ່ຍແຕ່ລະປີ ໄປຮຽນລະດັບປະລິນຍາຕີຫຼາຍກວ່າ 900 ຄົນ, ປະລິນຍາໂທ 435 ຄົນ, ປະລິນຍາເອກຫຼາຍກວ່າ 85 ຄົນ. ນອກນັ້ນ, ຍັງມີເໜືອປະລິນຍາເອກ, ຊ່ຽວຊານຂັ້ນ 1, ຂັ້ນ 2, ຊັ້ນສູງ, ຊັ້ນກາງ ແລະ ສາຍສາມັນສຶກສາ.*

***ໜສພ. ປະເທດລາວ 12/09/2023***

*❒ ສະພາບໂພຊະນາການຂອງເດັກໃນ ສປປ ລາວ 1 ໃນ 3 ຄົນ ຂອງເດັກນ້ອຍບໍ່ເຕີບໃຫຍ່ດີຍ້ອນຂາດໂພຊະນາການ, 33% ຂອງເດັກນ້ອຍຂາດສານອາຫານແບບລວງສູງບໍ່ໄດ້ມາດຕະຖານ ຫຼື ຂາດສານອາຫານຊຳເຮື້ອ, ຢ່າງໜ້ອຍ 1 ໃນ 10 ຂອງເດັກນ້ອຍຂາດສານອາຫານກະທັນຫັນ, 9% ຂອງເດັກນ້ອຍຂາດສານອາຫານແບບຈ່ອຍຜອມ, 1 ໃນ 2 ຂອງເດັກນ້ອຍຂາດວິຕາມິນ ແລະ ແຮ່ທາດທີ່ຈຳເປັນຕໍ່ຮ່າງກາຍ, 44% ຂອງເດັກນ້ອຍມີພາວະເລືອດຈາງ, ຢ່າງໜ້ອຍ 1 ໃນ 4 ຂອງເດັກນ້ອຍບໍ່ໄດ້ຮັບອາຫານຕາມມາດຕະຖານປະລິມານອາຫານຕ່ຳສຸດທີ່ຍອມຮັບໄດ້ເພື່ອໃຫ້ພວກເຂົາມີສຸຂະພາບດີ, 26% ຂອງເດັກນ້ອຍບໍ່ໄດ້ຮັບປະລິມານອາຫານຕ່ຳສຸດທີ່ຍອມຮັບໄດ້, 1 ໃນ 2 ຫລື 42% ຂອງແມ່ຍິງໄວໜຸ່ມອາຍຸລະຫວ່າງ 15-19 ປີ ມີພາວະເລືອດຈາງ, ຢ່າງໜ້ອຍ 4 ໃນ 10 ຫລື 40% ຂອງແມ່ຍິງຖືພາ ມີພາວະເລືອດຈາງ, 1 ໃນ 2 ຫຼື 40% ຂອງແມ່ຍິງໄວຈະເລີນພັນອາຍຸ 15-49 ປີ ມີພາວະເລືອດຈາງ.*

***ໜສພ. ປະເທດລາວ 12/09/2023***

## ເຜີຍແຜ່...

(ຕໍ່ຈາກໜ້າ 1)

ການສະເໜີບົດຄຳແນະນຳ ຂອງຄະນະຮັບຜິດຊອບການປະເມີນ ເຊິ່ງມີບັນດາເອກະສານດັ່ງນີ້ ມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການປະເມີນຄວາມໄວ້ວາງໃຈ ໃນການປະຕິບັດໜ້າທີ່ບຸກຄະລາກອນທີ່ສະພາແຫ່ງຊາດເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ ສະບັບເລກທີ 39/ຄປຈ, ລົງວັນທີ 24/2/2023; ຄຳແນະນຳຂອງຄະນະຮັບຜິດຊອບການປະເມີນຜົນ ກ່ຽວກັບການຂຽນບົດລາຍງານ ແລະ ຮ່າງບົດລາຍງານຂອງເປົ້າໝາຍທີ່ຖືກປະເມີນ.

ໂອກາດດັ່ງກ່າວ, ທ່ານປະທານກອງປະຊຸມ ໃຫ້ຮູ້ວ່າ: ສະພາແຫ່ງຊາດຊາດ ຊຸດທີ IX ຈະຈັດຕັ້ງການປະເມີນ 2 ຄັ້ງຄື: ຄັ້ງທີ 1 ກາງສະໄໝ (ຈະຈັດການປະເມີນໃນເດືອນພະຈິກ 2023 ນີ້) ແລະ ຄັ້ງທີ 2 ແມ່ນຈະປະເມີນໃນທ້າຍສະໄໝ (ປະມານກາງປີ 2025). ໃນນີ້, ຂໍແຈ້ງໃຫ້ຜູ້ແທນກອງປະຊຸມຮັບຊາບຕື່ມ ກ່ຽວກັບການປະເມີນຄວາມໄວ້ວາງໃຈຕໍ່ການປະຕິບັດໜ້າທີ່ວຽກງານຂອງການນຳຂັ້ນຕ່າງໆ ທີ່ໄດ້ດຳເນີນສຳເລັດແລ້ວໃນໄລຍະຜ່ານມາ (ໃນປີນີ້) ປະກອບມີ: ບັນດາສະຫາຍກຳມະການກົມການເມືອງສູນກາງພັກ, ກຳມະການສູນກາງສົມບູນ-ສຳຮອງສູນກາງພັກ, ອົງການຂັ້ນສູນກາງ, ຄະນະພັກກະຊວງ, ຄະນະພັກແຂວງ ແລະ ຄະນະພັກເມືອງ; ປະທານ-ຮອງປະທານສະພາປະຊາຊົນຂັ້ນແຂວງ, ນະຄອນຫຼວງ ແລະ ບັນດາປະທານຄະນະກຳມະການ, ເລຂາທິການສະພາປະຊາຊົນຂັ້ນແຂວງ, ນະຄອນຫຼວງ; ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນ ແລະ ບັນດາຫົວໜ້າພະແນກການຂອງແຂວງ ແລະ ເຈົ້າເມືອງ ແມ່ນໄດ້ສຳເລັດການປະເມີນແລ້ວ.



**(ກຸກກີກ ບຸດດາໄຊ)**

## ຄະນະຜູ້ແທນ...

(ຕໍ່ຈາກໜ້າ 1)

2023 ສະຫາຍ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ ແຫ່ງ ສປປ ລາວ ໄດ້ຕ້ອນຮັບ ແລະ ພົບປະສອງຝ່າຍກັບຄະນະຜູ້ແທນຂັ້ນສູງສະພາແຫ່ງຊາດອຳນາດປະຊາຊົນກູບາ ດ້ວຍບັນຍາກາດອົບອຸ່ນຖານສະຫາຍອ້າຍນ້ອງ. ສອງຝ່າຍ ໄດ້ແຈ້ງສະພາບການພົ້ນເດັ່ນ ຂອງແຕ່ລະປະເທດໃຫ້ກັນຊາບ, ຕີລາຄາຄືນການພົວພັນຮ່ວມມືທີ່ເປັນມູນເຊື້ອອັນດີງາມມາແຕ່ດົນນານລະຫວ່າງສອງປະເທດລາວ-ກູບາ ກໍຄືການພົວພັນຮ່ວມມື ລະຫວ່າງ ສອງສະພາແຫ່ງຊາດໃນໄລຍະຜ່ານມາ ພ້ອມທັງໄດ້ປຶກສາຫາລືທິດທາງແຜນການພົວພັນຮ່ວມມືໃນຕໍ່ໜ້າ, ເປັນຕົ້ນແມ່ນການສືບຕໍ່ຈັດຕັ້ງປະຕິບັດບົດບັນທຶກຄວາມເຂົ້າໃຈວ່າດ້ວຍການຮ່ວມມືທີ່ສອງປະທານສະພາ ລາວ ແລະ ກູບາ ໄດ້ລົງນາມຮ່ວມກັນ ໃນປີ 2019 ໃຫ້ມີປະສິດທິຜົນຍິ່ງກວ່າເກົ່າ. ສອງຝ່າຍ ໄດ້ເປັນເອກະພາບກັນຈະສືບຕໍ່ການແລກປ່ຽນຄະນະຜູ້ແທນຂັ້ນຕ່າງໆນຳກັນ, ແລກປ່ຽນຂໍ້ມູນຂ່າວສານ, ແລກປ່ຽນບົດຮຽນເຊິ່ງກັນແລະກັນ ໃນການຈັດຕັ້ງປະຕິບັດພາລະບົດບາດຂອງອົງການນິຕິບັນຍັດ, ສືບຕໍ່ຊຸກຍູ້ ແລະ ສົ່ງເສີມໃຫ້ຂະແໜງການທີ່ກ່ຽວຂ້ອງຂອງລັດຖະບານ ຂອງສອງປະເທດ ຈັດຕັ້ງປະຕິບັດບັນດາສັນຍາ, ສົນທິສັນຍາ ແລະ ຂໍ້ຕົກລົງຕ່າງໆ ທີ່ໄດ້ລົງນາມຮ່ວມກັນໃຫ້ໄດ້ຮັບປະສິດຜົນສູງ ໂດຍສະເພາະຂະແໜງການທີ່ສອງປະເທດມີທ່າແຮງ ເຊັ່ນ: ການສຶກສາ-ກິລາ, ສາທາລະນະສຸກ, ຕຸລາການ ແລະ ອື່ນໆ; ນອກຈາກນີ້, ສອງຝ່າຍ ເຫັນດີເປັນເອກະພາບສືບຕໍ່ສະໜັບສະໜູນເຊິ່ງກັນແລະກັນ ໃນເວທີລັດຖະສະພາພາກພື້ນ ແລະ ສາກົນ ເພື່ອສັນຕິພາບ, ມິດຕະພາບ ແລະ ການຮ່ວມມືເພື່ອການພັດທະນາ ແລະ ນຳເອົາຜົນປະໂຫຍດມາສູ່ປະຊາຊົນສອງຊາດ.

ໃນວັນດຽວກັນ, ຄະນະຜູ້ແທນຂັ້ນສູງສະພາແຫ່ງຊາດອຳນາດປະຊາຊົນກູບາ ໄດ້ເຂົ້າຢ້ຽມຂໍ່ານັບສະຫາຍ ບຸນທອງ ຈິດມະນີ ກຳມະການກົມການເມືອງສູນກາງພັກ, ຜູ້ປະຈຳການເລຂາທິການສູນກາງພັກ, ຮອງປະທານປະເທດ ແຫ່ງ ສປປ ລາວ ແລະ ສືບຕໍ່ເຂົ້າຢ້ຽມຂໍ່ານັບ ສະຫາຍ ປອ. ໄຊສົມພອນ ພົມວິຫານກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ແຫ່ງ ສປປ ລາວ ເຊິ່ງການນຳຂັ້ນສູງ ຂອງ 2 ປະເທດ ໄດ້ຕີລາຄາສູງຕໍ່ມູນເຊື້ອການພົວພັນຮ່ວມມືລະຫວ່າງ 2 ພັກ, 2 ລັດ ແລະ ປະຊາຊົນສອງຊາດ ລາວ-ກູບາ ໃນໄລຍະຜ່ານມາ ແລະ ເຫັນດີເປັນເອກະພາບ ໃນການສືບຕໍ່ເສີມຂະຫຍາຍສາຍພົວພັນດັ່ງກ່າວໃຫ້ນັບມື້ນັບມີປະສິດທິຜົນ.

ວັນທີ 12 ກັນຍາ 2023 ສະຫາຍ ແອນນາ ມາເລຍ ມາລິມາຊາໂດ ພ້ອມດ້ວຍຄະນະຜູ້ແທນຂັ້ນສູງ ໄດ້ເດີນທາງດ້ວຍຂະບວນລົດໄຟດ່ວນລາວ-ຈີນ ໄປຢ້ຽມຢາມ ຢູ່ແຂວງຫຼວງພະບາງ; ຈາກນັ້ນ, ຄະນະຜູ້ແທນດັ່ງກ່າວ ໄດ້ເຂົ້າຢ້ຽມພົບປະສະຫາຍ ຄຳຂັນ ຈັນທະວິສຸກ ກຳມະການສູນກາງພັກ, ເຈົ້າແຂວງຫຼວງພະບາງ ແລະ ສືບຕໍ່ຢ້ຽມຊົມສະຖານທີ່ທ່ອງທ່ຽວ, ພື້ນຖານດ້ານເສດຖະກິດ ແລະ ວັດທະນະທຳ ຂອງແຂວງຈຳນວນໜຶ່ງ.

ວັນທີ 13 ກັນຍາ 2023 ຄະນະຜູ້ແທນຂັ້ນສູງສະພາແຫ່ງຊາດອຳນາດປະຊາຊົນກູບາ ສືບຕໍ່ຢ້ຽມຢາມເຂດໂລຈິກສຕິກນະຄອນຫຼວງວຽງຈັນ, ຢ້ຽມຊົມຫໍພິພິຕະພັນໄມ້ຮ່ວມສະໄໝ ແລະ ພື້ນຖານວັດທະນະທຳ ຈຳນວນໜຶ່ງ ໃນນະຄອນຫຼວງວຽງຈັນ.

## ກວດກາ...

(ຕໍ່ຈາກໜ້າ 1)

ໃນກອງປະຊຸມ, ໄດ້ຮັບຟັງການລາຍງານໂດຍຫຍໍ້ກ່ຽວກັບການປັບປຸງກົດໝາຍວ່າດ້ວຍການທ່ອງທ່ຽວ (ສະບັບປັບປຸງ) ຈາກທ່ານ ນາງ ທຸມມາລີ ວົງພະຈັນ ປະທານກຳມາທິການວັດທະນະທຳ-ສັງຄົມ; ຫຼັງຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ພ້ອມກັນສຸມໃສ່ຄົ້ນຄວ້າຢ່າງມີຈຸດສຸມ ແລະ ກົງໄປກົງມາຕໍ່ກັບເນື້ອໃນຂອງຮ່າງກົດໝາຍສະບັບດັ່ງກ່າວ ເຮັດໃຫ້ຮ່າງກົດໝາຍມີຄວາມຮັດກຸມ, ຈະແຈ້ງ, ສອດຄ່ອງກັບແນວທາງນະໂຍບາຍຂອງລັດ, ລັດຖະທຳມະນູນ, ກົດໝາຍອື່ນ, ສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ ແລະ ແທດເໝາະກັບສະພາບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ; ທັງເພື່ອເປັນການລະດົມສະຕິປັນຍາຈາກພາກສ່ວນທີ່ກ່ຽວຂ້ອງກັບການສ້າງ ແລະ ປັບປຸງກົດໝາຍ ກ່ອນນຳສະເໜີກອງປະຊຸມຄະນະປະຈຳສະພາແຫ່ງຊາດ ພິຈາລະນາກ່ອນນຳເຂົ້າກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX.

ໃນຕອນທ້າຍຂອງກອງປະຊຸມ, ທ່ານ ພທ. ສຸວອນ ເລືອງບຸນມີ ໃຫ້ຮູ້ວ່າ: ກອງປະຊຸມກວດກາເນື້ອໃນຮອບດ້ານຂອງຮ່າງກົດໝາຍວ່າດ້ວຍການທ່ອງທ່ຽວ (ສະບັບປັບປຸງ) ໃນຄັ້ງນີ້ ໄດ້ດຳເນີນເປັນເວລາ 2 ວັນເຕັມ ເຊິ່ງເຕັມໄປດ້ວຍຄວາມຮັບຜິດຊອບສູງຂອງບັນດາທ່ານຜູ້ແທນທີ່ເຂົ້າຮ່ວມກອງປະຊຸມ ແລະ ດຳເນີນດ້ວຍບັນຍາກາດຟົດຟື້ນ ກົງໄປກົງມາ ດ້ວຍເຫດ ແລະ ຜົນ ເຮັດໃຫ້ກອງປະຊຸມໃນຄັ້ງນີ້ສາມາດບັນລຸຜົນສຳເລັດໂດຍພື້ນຖານຜ່ານການຄົ້ນຄວ້າ, ປະກອບຄຳເຫັນຂອງບັນດາທ່ານຜູ້ແທນເຫັນວ່າສາມາດເຫັນດີເປັນເອກະພາບຕໍ່ການປັບປຸງຂອງຄະນະຮັບຜິດຊອບ ແລະ ກອງເລຂາ. ພ້ອມນັ້ນ, ກໍຍັງມີຫຼາຍມາດຕາ ທີ່ພວກເຮົາຍັງມີຄຳເຫັນແຕກຕ່າງກັນ ເຊິ່ງຈະໄດ້ສືບຕໍ່ນຳໄປຄົ້ນຄວ້າ, ປັບປຸງກ່ອນຈະນຳເຂົ້າພິຈາລະນາຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX.

**(ມິດຕາ ຄຸນປາກດີ)**

## ປຶກສາ...

(ຕໍ່ຈາກໜ້າ 1)

ກົມພາຍໃນສະພາແຫ່ງຊາດ, ບັນດາທ່ານຮອງເລຂາທິການສະພາປະຊາຊົນແຂວງຈາກ 18 ແຂວງທົ່ວປະເທດ ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງ ເຊິ່ງກອງປະຊຸມຄັ້ງນີ້ໄດ້ຮັບການສະໜັບສະໜູນໂດຍໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ (steps).

ທັງນີ້, ກໍເພື່ອເປັນການປຶກສາຫາລື ແລະ ຮັບຟັງຄວາມຄິດເຫັນຈາກຄະນະເລຂາທິການສະພາປະຊາຊົນແຂວງ ແລະ ຄະນະກົມພາຍໃນສະພາແຫ່ງຊາດ ໃນການຈັດຕັ້ງປະຕິບັດການຮັບຄຳສະເໜີຂອງປະຊາຊົນ ຜ່ານທາງສາຍດ່ວນ ໃນໄລຍະດຳເນີນກອງປະຊຸມສະພາປະຊາຊົນແຂວງ ແລະ ກອງປະຊຸມສະພາແຫ່ງຊາດໃນໄລຍະຜ່ານມາ ມີຂໍ້ສະດວກ, ຂໍ້ຫຍຸ້ງຍາກ ຄືແນວໃດ; ເພື່ອທາບທາມຄຳຄິດເຫັນໃສ່ 2 ຮ່າງນິຕິກຳຄື: ມະຕິວ່າດ້ວຍການຄຸ້ມຄອງວຽກງານສາຍດ່ວນຂອງສະພາແຫ່ງຊາດ ແລະ ປຶ້ມຄູ່ມື ກ່ຽວກັບວຽກງານສາຍດ່ວນ ໃຫ້ມີເນື້ອໃນສົມບູນຄົບຖ້ວນ; ເພື່ອເປັນການຮຽບຮຽງຄືນ ແລະ ປັບປຸງດ້ານເນື້ອໃນຂອງ 2 ຮ່າງນິຕິກຳສະບັບດັ່ງກ່າວ ໃຫ້ສາມາດນຳໄປຈັດພິມເປັນປຶ້ມ ແລະ ເຜີຍແຜ່ວຽກງານສາຍດ່ວນຂອງສະພາແຫ່ງຊາດ ໄດ້ຮັບຮູ້ຢ່າງທົ່ວເຖິງ.

ໃນກອງປະຊຸມ, ທ່ານ ນາງ ປິ່ງຄຳ ລາຊະສິມມາ ໄດ້ມີຄຳເຫັນກ່າວເປີດກອງປະຊຸມວ່າ: ດັ່ງທີ່ຮູ້ນຳກັນແລ້ວວ່າວຽກງານສາຍດ່ວນ ເປັນວຽກງານໜຶ່ງທີ່ສຳຄັນ ໃນການຮັບຄຳສະເໜີຂອງພົນລະເມືອງ, ການຈັດຕັ້ງ ຫຼື ນິຕິບຸກຄົນ ຜ່ານທາງໂທລະສັບສາຍດ່ວນ, ສື່ເອເລັກໂຕຣນິກ ແລະ ຕູ້ຮັບຄຳສະເໜີ ກ່ຽວກັບບັນຫາເສດຖະກິດ, ວັດທະນະທຳ-ສັງຄົມ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຍຸຕິທຳ ແລະ ການປະຕິບັດສິດ, ໜ້າທີ່ຂອງສະມາຊິກພັກ, ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ເຊິ່ງກົມກວດກາເປັນເສນາທິການໃຫ້ແກ່ຄະນະເລຂາທິການສະພາແຫ່ງຊາດ ປະຕິບັດວຽກງານສາຍດ່ວນໃນໄລຍະດຳເນີນກອງປະຊຸມສະພາແຫ່ງຊາດ. ນອກຈາກນັ້ນ, ຄະນະເລຂາທິການສະພາປະຊາຊົນຂັ້ນແຂວງ ກໍຍັງເປັນເສນາທິການໃຫ້ແກ່ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ແລະ ສະພາປະຊາຊົນຂັ້ນແຂວງ ໃນເວລາດຳເນີນກອງປະຊຸມ ໝາຍຄວາມວ່າ ຄະນະເລຂາທິການສະພາແຫ່ງຊາດມີສາຍກ່ຽວພັນທີ່ຕັດຂາດອອກຈາກກັນບໍ່ໄດ້ ໃນການປະຕິບັດໜ້າທີ່ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ດັ່ງທີ່ກົດໝາຍ ແລະ ມະຕິຂອງຄະນະປະຈຳສະພາແຫ່ງຊາດກຳນົດໄວ້ ເຊິ່ງໃນປີ 2017 ສະພາແຫ່ງຊາດ ຊຸດທີ VIII ກໍໄດ້ທາບທາມເອກະສານນີ້ນຳບັນດາກົມ, ສູນ ຂອງກົງຈັກຂອງສະພາແຫ່ງຊາດ ໃນເວລານັ້ນຄົບຖ້ວນ 25 ກົມ, 2 ສູນມາແລ້ວ. ສຳລັບມື້ນີ້ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ຄະນະເລຂາທິການສະພາແຫ່ງຊາດ ຈຶ່ງໄດ້ນຳເອົາຮ່າງມະຕິຂອງຄະນະປະຈຳສະພາແຫ່ງຊາດ ແລະ ຮ່າງປຶ້ມຄູ່ມື ກ່ຽວກັບການຄຸ້ມຄອງວຽກງານສາຍດ່ວນ ເພື່ອໃຫ້ຜູ້ແທນກອງປະຊຸມໄດ້ມີຄຳຄິດຄຳເຫັນໃສ່ຮ່າງນິຕິກຳດັ່ງກ່າວແນໃສ່ໃຫ້ມີຄວາມເປັນເອກະພາບທາງດ້ານເນື້ອໃນ, ໂຄງປະກອບ, ຫຼັກການ, ວິທີການ, ກົນໄກການປະສານງານກັບພາກສ່ວນກ່ຽວຂ້ອງ ໃນການຕິດຕາມກວດກາຜົນການແກ້ໄຂຄຳສະເໜີ ໃຫ້ມີຄວາມຖືກຕ້ອງ ແລະ ທັນກັບສະພາບການ.

**(ກົງທະນູຄຳ ພິພັດເສລີ)**



# ຮອງປະທານ ກຜງສ ຕ້ອນຮັບຊ່ຽວຊານອາວຸໂສທະນາຄານໂລກ



(ສພຊ) ວັນທີ 11 ກັນຍາ 2023 ທີ່ສະພາແຫ່ງຊາດ, ທ່ານ ບຸນຕາ ເທບພະວົງ ຮອງປະທານກຳມາທິການແຜນການ, ການເງິນ ແລະ ການກວດສອບ (ກຜງສ) ສະພາແຫ່ງຊາດ ໄດ້ຕ້ອນຮັບທ່ານ ແມັກແວວ ດາປາດສ (Maxwell Bruku Dapaah) ຊ່ຽວຊານອາວຸໂສຈາກທະນາຄານໂລກ ພ້ອມດ້ວຍຄະນະ ທີ່ໄດ້ເດີນທາງມາຮ່ວມເຮັດວຽກນຳສະພາແຫ່ງຊາດ ໃນຄັ້ງນີ້.

ໂອກາດດັ່ງກ່າວ, ທ່ານ ບຸນຕາ ເທບພະວົງ ໄດ້ກ່າວສະແດງຄວາມຍິນດີຕ້ອນຮັບຢ່າງອົບອຸ່ນຕໍ່ທ່ານ ແມັກແວວ ດາປາດສ ພ້ອມດ້ວຍຄະນະ ໃນໂອກາດເດີນທາງມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປ ລາວ ໃນຄັ້ງນີ້, ເພື່ອປຶກສາຫາລືກ່ຽວກັບວຽກງານການສ້າງແຜນງົບປະມານໄລຍະກາງ ແລະ ການສ້າງບົດສະເໜີງົບປະມານທີ່ຄຳນຶງເຖິງບົດບາດຍິງ-ຊາຍ ພ້ອມນີ້, ທັງສອງຝ່າຍໄດ້ມີການແລກປ່ຽນບົດຮຽນ ແລະ ປຶກສາຫາລືຮ່ວມກັນ ໃນຫົວຂໍ້ທີ່ທັງສອງຝ່າຍມີຄວາມສົນໃຈຮ່ວມກັນ.

ຈາກນັ້ນ, ທ່ານ ແມັກແວວ ດາປາດສ ໄດ້ສະແດງຄວາມຂອບໃຈຢ່າງສູງຕໍ່ທ່ານ ບຸນຕາ ເທບພະວົງ ທີ່ໄດ້ສະຫຼະເວລາອັນມີຄຸນຄ່າໃຫ້ການຕ້ອນຮັບຢ່າງອົບອຸ່ນໃນຄັ້ງນີ້ ແລະ ໄດ້ຮັບຟັງຫົວຂໍ້ທີ່ທາງຄະນະມີຄວາມສົນໃຈຈາກຮອງປະທານ ພ້ອມດ້ວຍຄະນະກົມ, ຄະນະພະແນກ ທີ່ເຮັດວຽກກ່ຽວຂ້ອງ ພ້ອມທັງໄດ້ຮັບເອົາບັນດາຂໍ້ສະເໜີຂອງສະພາແຫ່ງຊາດລາວ ແລະ ພ້ອມຈະໃຫ້ການຮ່ວມມື, ຊອກຫາວິທີທາງຕ່າງໆຮ່ວມກັນ.

ໃນຕອນທ້າຍ, ທ່ານ ຮອງປະທານ ກຜງສ ໄດ້ສະແດງຄວາມຂອບໃຈຢ່າງຈິງໃຈມາຍັງທ່ານ ແມັກແວວ ດາປາດສ ພ້ອມດ້ວຍຄະນະ ທີ່ໄດ້ມາຢ້ຽມຢາມ ແລະ ໃຫ້ການສະໜັບສະໜູນ ສປປ ລາວ ຕະຫຼອດມາ ອວຍພອນໃຫ້ທ່ານ ພ້ອມດ້ວຍຄະນະ ປະສົບຜົນສຳເລັດໃນໜ້າທີ່ວຽກງານອັນມີກຽດ ແລະ ປະສົບຜົນສຳເລັດໃນການເຄື່ອນໄຫວຢ້ຽມຢາມ ແລະ ເຮັດວຽກໃນ ສປປ ລາວ ຄັ້ງນີ້ ໃຫ້ບັນລຸຕາມຈຸດປະສົງ ແລະ ເປົ້າໝາຍທີ່ກຳນົດໄວ້.

**(ໄຊໂສພາພອນ ມິ່ງມຸງຄຸນ)**

# ຮອງປະທານ ກປຊສ ເຜີຍແຜ່ຜົນສຳເລັດ ກອງປະຊຸມສະໄໝສາມັນເທື່ອທີ 5



(ສພຊ) ໃນລະຫວ່າງ ວັນທີ 10-12 ກັນຍາ 2023 ທ່ານ ພົຈວ. ສົມວັນ ທຳມາໄຊ ຮອງປະທານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ (ກປຊສ) ທັງເປັນສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 18 ແຂວງໄຊສົມບູນ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດຊຸດ ທີ IX ແລະ ສະພາປະຊາຊົນ ຊຸດທີ II ຢູ່ເມືອງທ່າໂທມ ແຂວງໄຊສົມບູນ ໂດຍໄດ້ສົມທົບກັບສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະ ສະມາຊິກສະພາປະຊົນຂັ້ນແຂວງໄຊສົມບູນ ເຊິ່ງໄດ້ເຄື່ອນໄຫວເຜີຍແຜ່ ຢູ່ 5 ຈຸດ ຄື: ຈຸດທີ 1 ຢູ່ບ້ານສິບຸນເຮືອງ, ບ້ານນ້ຳພາງ, ບ້ານຊຽງຕັ້ນ, ບ້ານນາຫີນບູນ, ບ້ານແດນມີໄຊ (ສະຖານທີ່ປະຊຸມຫ້ອງການບ້ານສິບຸນເຮືອງ); ຈຸດທີ 2 ບ້ານທິດມູນ, ບ້ານຄອນຊະນະ, ບ້ານໂພນຮົ່ມ (ສະຖານທີ່ຫ້ອງການບ້ານທິດມູນ); ຈຸດທີ 3 ບ້ານປາກຍອງ, ບ້ານວັງໄຮ(ສະຖານທີ່ຫ້ອງປະຊຸມຫ້ອງການບ້ານວັງໄຮ) ຈຸດທີ 4 ບ້ານຍາມຈະເລີນ, ບ້ານໄຊຈະເລີນ, ບ້ານພຽງສະຫວາດ (ສະຖານທີ່ຫ້ອງການບ້ານພຽງສະຫວາດ) ແລະ ຈຸດທີ 5 ສະໂມສອນໃຫຍ່ຫ້ອງວ່າການເມືອງທ່າໂທມ ແຂວງໄຊສົມບູນ ໂດຍການເຂົ້າຮ່ວມຂອງທ່ານ ຄຳເຜີຍ ແສງສະຫວ່າງ ຮອງເຈົ້າເມືອງທ່າໂທມ; ມີບັນດາທ່ານຄະນະປະຈຳພັກເມືອງ, ຜູ້ມີສິດເລືອກຕັ້ງ, ກຳມະການພັກເມືອງ, ຫົວໜ້າ-ຮອງຫົວໜ້າຫ້ອງ, ພະນັກງານບຳນານ, ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ອົງການປົກຄອງບ້ານເທດສະບານເມືອງ ແລະ ປະຊາຊົນບັນດາເຜົ່າ ຮັບຟັງທັງໝົດ 556 ທ່ານ, ຍິງ 257 ທ່ານ.

ໃນໂອກາດນີ້, ທ່ານ ພົຈວ. ສົມວັນ ທຳມາໄຊ ກໍໄດ້ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ພ້ອມດ້ວຍສະມາຊິກສະພາປະຊາຊົນແຂວງ ກໍໄດ້ສືບຕໍ່ຜັດປ່ຽນກັນເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 5 ສະພາປະຊາຊົນແຂວງ ຊຸດທີ II; ຜ່ານການຮັບຟັງການເຜີຍແຜ່ ບັນດາຜູ້ເຂົ້າຮ່ວມແມ່ນມີຄວາມເຂົ້າໃຈຕໍ່ບັນດາເອກະສານ ແລະ ມີຄວາມເອກະພາບສູງ ຕໍ່ການເຜີຍແຜ່ໃນຄັ້ງນີ້; ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມຮັບຟັງກໍໄດ້ສະເໜີຂໍງົບປະມານໃນການກໍ່ສ້າງໂຮງຮຽນແຕ່ລະບ້ານ, ສ້າງກັນເຈື່ອນລຽບຕາມແຄມນ້ຳເຂດທຳການຜະລິດກະສິກຳຂອງປະຊາຊົນ, ປັບປຸງລະບົບນ້ຳລິນແຕ່ລະບ້ານໃຫ້ໃຊ້ໄດ້ເປັນປົກກະຕິ, ວຽກການສຶກສາ, ວຽກງານສາທາລະນະສຸກ ແລະ ອື່ນໆອີກຈຳນວນໜຶ່ງ; ພ້ອມນັ້ນ, ຄະນະ ຍັງໄດ້ນຳເອົາບັນດາຄຳສະເໜີຂອງພໍ່ແມ່ປະຊາຊົນໄປໃຫ້ສະພາປະຊາຊົນແຂວງໄຊສົມບູນ ນຳໄປພິຈາລະນາປະສານສົມທົບກັບພາກສ່ວນກ່ຽວຂ້ອງພິຈາລະນາແກ້ໄຂຕາມສະພາບເງື່ອນໄຂ.

## ສພຊ...

(ຕໍ່ຈາກໜ້າ 1)

ຈັດຂຶ້ນພາຍໃຕ້ການເປັນປະທານຮ່ວມຂອງ ທ່ານ ສັນຍາ ປຣະເສີດ ປະທານກຳມາທິການການຕ່າງປະເທດ ພ້ອມດ້ວຍຄະນະກຳມາທິການຕ່າງໆ ແລະ ທ່ານ ອີນ່າ ມາກຊຸຍລີໂອນິດ ເອກອັກຄະລັດຖະທູດຂອງສະຫະພາບເອີຣົບ ພ້ອມດ້ວຍບັນດາເອກອັກຄະລັດຖະທູດຂອງປະເທດໃນສະຫະພາບເອີຣົບປະຈຳສປປລາວເຂົ້າຮ່ວມ.

ກອງປະຊຸມດັ່ງກ່າວ, ໄດ້ຮັບຟັງລາຍງານຫຍໍ້ກ່ຽວກັບຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດລາວ ຊຸດທີ IX, ຮັບຟັງການນຳສະເໜີກ່ຽວກັບການຈັດຕັ້ງປະຕິບັດແຜນຍຸດທະສາດ 2021-2025 ຂອງທີມເອີຣົບ ໃນ ສປປ ລາວ. ພ້ອມດຽວກັນນັ້ນ, ກອງປະຊຸມຍັງໄດ້ປຶກສາຫາລື ແລະ ແລກປ່ຽນຄຳຄິດຄຳເຫັນເຊິ່ງກັນແລະກັນ ກ່ຽວກັບການຮ່ວມມື, ການສະໜັບສະໜູນແລະການຊ່ວຍເຫຼືອເພື່ອການພັດທະນາເສດຖະກິດ-ສັງຄົມ ໃນ ສປປ ລາວ ລວມທັງການສ້າງຄວາມເຂັ້ມແຂງໃຫ້ສະພາແຫ່ງຊາດໃນການຈັດຕັ້ງປະຕິບັດພາລະບົດບາດທາງດ້ານນິຕິບັດຍັດ ແລະ ໜ້າທີ່ອື່ນໆ.

ໃນກອງປະຊຸມ, ທ່ານ ສັນຍາ ປຣະເສີດ ໄດ້ຕີລາຄາສູງຕໍ່ການພົວພັນຮ່ວມມືລະຫວ່າງ ສປປ ລາວ ແລະ ສະຫະພາບເອີຣົບ ໃນໄລຍະຜ່ານມາ ໂດຍສະເພາະແມ່ນການຊ່ວຍເຫຼືອຂອງສະຫະພາບເອີຣົບ ຕໍ່ ສປປ ລາວ ໃນຫຼາຍຂົງເຂດວຽກງານທີ່ເຫັນວ່ານັບມື້ນັບເພີ່ມຂຶ້ນຢ່າງຕໍ່ເນື່ອງ. ທ່ານເຊື່ອວ່າການຮ່ວມມືລະຫວ່າງສະພາແຫ່ງຊາດລາວ ແລະ ສະຫະພາບເອີຣົບ ພາຍໃຕ້ການຈັດຕັ້ງປະຕິບັດຍຸດທະສາດເອີຣົບ ໃນ ສປປ ລາວ ຕາມ 3 ຂົງເຂດບູລິມະສິດ ຈະເປັນການສະໜັບສະໜູນທີ່ສຳຄັນຕໍ່ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຂອງ ສປປ ລາວ ໃຫ້ມີຜົນສຳເລັດດີຂຶ້ນ.

ໃນຕອນທ້າຍ, ທ່ານ ປະທານກຳມາທິການການຕ່າງປະເທດ ສະພາແຫ່ງຊາດລາວ ໄດ້ຮຽກຮ້ອງໃຫ້ທີມງານນັກການທູດເອີຣົບປະຈຳ ສປປ ລາວ ສືບຕໍ່ໃຫ້ການສະໜັບສະໜູນທາງດ້ານທຶນຮອນແກ່ສະພາແຫ່ງຊາດ ໂດຍສະເພາະແມ່ນການສ້າງຄວາມເຂັ້ມແຂງໃຫ້ແກ່ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ພະນັກງານ-ວິຊາການ ຂອງສະພາແຫ່ງຊາດລາວ ໃນການຈັດຕັ້ງປະຕິບັດພາລະບົດບາດ ແລະ ໜ້າທີ່ອື່ນໆ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນດີຂຶ້ນກວ່າເກົ່າ.

# ສຳພາດປະທານສະພາປະຊາຊົນແຂວງບໍ່ແກ້ວ

ໃນໂອກາດທີ່ເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ທ່ານ ຈອມສີ ລັດຕະນະປັນ ປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 5 ແຂວງບໍ່ແກ້ວ, ປະທານສະພາປະຊາຊົນແຂວງບໍ່ແກ້ວ ໄດ້ຕາງໜ້າໃຫ້ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 5 ແຂວງບໍ່ແກ້ວ ໃຫ້ການສຳພາດຕໍ່ກົມສື່ມວນຊົນ ກ່ຽວກັບບາງບັນຫາມວນຊົນໃຫ້ຄວາມສົນໃຈມີດັ່ງນີ້:



ບັນຫາທີ່ພົ້ນເດັ່ນໃນການຈັດຕັ້ງ ແລະ ເຄື່ອນໄຫວວຽກງານສະພາປະຊາຊົນແຂວງບໍ່ແກ້ວ ເຊິ່ງທ່ານໃຫ້ຮູ້ວ່າ: ອັນພື້ນຖານແມ່ນສະພາປະຊາຊົນແຂວງບໍ່ແກ້ວ ໄດ້ເອົາໃຈໃສ່ຍົກສູງປະສິດທິພາບໃນການຈັດຕັ້ງພາລະບົດບາດ, ສິດ ແລະ ໜ້າທີ່ໃຫ້ສູງຂຶ້ນ ໂດຍສະເພາະແມ່ນການປັບປຸງບັນດາພາລະບົດບາດ, ສິດ ແລະ ໜ້າທີ່ຂອງແຕ່ລະກົງຈັກການຈັດຕັ້ງພາຍໃນສະພາປະຊາຊົນແຂວງ ໃຫ້ຄົບຖ້ວນ, ຈະແຈ້ງ ແລະ ສອດຄ່ອງກັບກົດໝາຍ, ສະພາບຕົວຈິງຂອງທ້ອງຖິ່ນຕົນ ເພື່ອເປັນບ່ອນອີງ ແລະ ເປັນເຄື່ອງມືທີ່ສຳຄັນໃຫ້ແກ່ການເຄື່ອນໄຫວວຽກງານສະພາປະຊາຊົນແຂວງໃຫ້ມີຄວາມເຂັ້ມແຂງ ເຊິ່ງສະແດງອອກ: ການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງບໍ່ແກ້ວ ຊຸດທີ II ຜ່ານມາ ແມ່ນໄດ້ນຳເອົາບັນຫາຕ່າງໆເຂົ້າມາຄົ້ນຄວ້າ, ພິຈາລະນາ ໄດ້ທັງໝົດ 22 ບັນຫາ ແລະ ກອງປະຊຸມໄດ້ພິຈາລະນາ, ຮັບຮອງອອກເປັນມະຕິກອງປະຊຸມໄດ້ 13 ສະບັບ ໃນນີ້, ມີຂໍ້ຕົກລົງຂອງເຈົ້າແຂວງ (ສະບັບສ້າງໃໝ່) ຈຳນວນ 3 ສະບັບຄື: ຂໍ້ຕົກລົງວ່າດ້ວຍການສ້າງເມືອງຫ້ວຍຊາຍສະອາດ; ຂໍ້ຕົກລົງວ່າດ້ວຍກອງທຶນສົ່ງເສີມ ແລະ ພັດທະນາວຽກງານກິລາ-ກາຍະກຳແຂວງ ແລະ ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງ ແລະ ປະຕິບັດມາດຕະການຕໍ່ຜູ້ລະເມີດລະບຽບກົດໝາຍໃນຂົງເຂດກະສິກຳ-ປ່າໄມ້; ການລົງຕິດຕາມ, ກວດກາແລະຊຸກຍູ້ການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ຢູ່ 3 ເມືອງເປົ້າໝາຍ(ເມືອງຕົ້ນເຜິ້ງ, ເມືອງເມິງ ແລະ ເມືອງຜາອຸດົມ) ເຊິ່ງເຫັນໄດ້ວ່າ ການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ມີຄວາມຄືບໜ້າຫຼາຍ ເປັນຕົ້ນແມ່ນສາມາດແກ້ໄຂໜີ້ສິນພາຍໃນໄດ້ຈຳນວນໜຶ່ງຕາມແຜນອະນຸມັດ, ສາມາດຂຶ້ນທະບຽນຄຸ້ມຄອງຫົວໜ່ວຍວິສາຫະກິດທົ່ວແຂວງໄດ້ຈຳນວນ 1.955 ຫົວໜ່ວຍ, ການຂະຫຍາຍລະບົບຄຸ້ມຄອງເກັບລາຍຮັບສ່ວຍສາອາກອນແບບ (TaxRis) ໃຫ້ເມືອງຫ້ວຍຊາຍ, ເມືອງຕົ້ນເຜິ້ງ ແລະ ເຂດເສດຖະກິດພິເສດສາມຫຼ່ຽມຄຳ, ການສົ່ງອອກສິນຄ້າທຽບໃສ່ແຜນປີປະຕິບັດໄດ້ລື່ນແຜນ 17,47% ແລະ ສາມາດມ້າງລາຍຄະດີຢາເສບຕິດໄດ້ທັງໝົດ 115 ເລື່ອງ, ມີຜູ້ຖືກຫາ 150 ຄົນ, ຄົນຕ່າງປະເທດ 11 ຄົນ, ຂອງກາງທີ່ຍຶດໄດ້ ມີຢາບ້າ 13 ລ້ານກວ່າເມັດ, ຢາໄອ໋ 699 ຫໍ່, ເຮໂລອິນ 400 ແທ່ງ, ເຄຕາມີນ 391 ຫໍ່, ລົດໃຫຍ່ 6 ຄັນ, ລົດຈັກ 8 ຄັນ ແລະ ປະເພດອາວຸດ ຈຳນວນໜຶ່ງ. ການຕ້ອນຮັບ ແລະ ໃຫ້ຄຳປຶກສາທາງດ້ານກົດໝາຍ ໃຫ້ແກ່ພົນລະເມືອງໄດ້ 81 ຄັ້ງ, ມີ 137 ເທື່ອຄົນ, ຄົ້ນຄວ້າ ແລະ ແກ້ໄຂຄຳສະເໜີ, ຄຳຮ້ອງຂໍຄວາມເປັນທຳຂອງພົນລະເມືອງໄດ້ທັງໝົດ 61 ເລື່ອງ ໃນນັ້ນ, ໄດ້ຮັບການແກ້ໄຂ 54 ເລື່ອງ, ພວມສືບຕໍ່ແກ້ໄຂ 7 ເລື່ອງ.

ບັນຫາທີ່ເຄັ່ງຮ້ອນຢູ່ແຂວງບໍ່ແກ້ວ ແມ່ນການຊຸກຍູ້ຂະບວນການຜະລິດພາຍໃນທົດແທນການນຳເຂົ້າແລະເພື່ອສົ່ງອອກ, ການແກ້ໄຂບັນຫາການຄ້າຂາຍເຖື່ອນ, ລັກລອບໜີພາສີນຳເຂົ້າ, ການຄຸ້ມຄອງນຳໃຊ້ເງິນຕາຕ່າງປະເທດ ແລະ ການສົ່ງເສີມການນຳໃຊ້ເງິນກີບຕິດພັນກັບການສ້າງສະຕິຕໍ່ກົດໝາຍ, ການປະກອບສ່ວນຂອງສັງຄົມ ໃນການປະຢັດ, ຕ້ານການຟຸມເຟືອຍ ຍັງບໍ່ທັນເຮັດໄດ້ດີ ແລະ ເດັດຂາດ. ບັນຫາລະບົບພື້ນຖານໂຄງລ່າງເສັ້ນທາງຄົມມະນາຄົມ-ຂົນສົ່ງຈາກແຂວງຫາເມືອງ (ເມືອງປາກທາ, ເມືອງຜາອຸດົມ ແລະ ເມືອງເມິງ) ຍັງບໍ່ທັນສະດວກດີ ທີ່ຈະເປັນເງື່ອນໄຂເອື້ອອຳນວຍຄວາມສະດວກໃນການຂົນສົ່ງສິນຄ້າ-ໂດຍສານ, ການທ່ອງທ່ຽວ, ດຶງດູດດ້ານການຄ້າ ແລະ ການລົງທຶນ ທັງພາຍໃນ ແລະ ຕ່າງປະເທດ, ບັນຫາການຈັດສັນພູມລຳເນົາ, ຈັດສັນອາຊີບ, ການພັດທະນາສີມືແຮງງານພາຍໃນຍັງເຮັດແບບລວມໆບໍ່ມີຈຸດສຸມ ບັນຫາເຫຼົ່ານີ້ ແມ່ນສິ່ງຜົນກະທົບຕໍ່ການດຳລົງຊີວິດປະຈຳວັນ, ແນວຄິດຈິດໃຈຂອງພະນັກງານ, ທະຫານ, ຕຳຫຼວດ ແລະ ປະຊາຊົນ ເປັນຕົ້ນ: ຄ່າຄອງຊີບ, ຄ່າໄຟຟ້າ, ຄ່ານ້ຳປະປາ, ນ້ຳມັນເຊື້ອໄຟ ຖີບຕົວສູງຂຶ້ນ ແຕ່ຄ່າເງິນກີບພັດອ່ອນຄ່າລົງ ຈຶ່ງຮຽກຮ້ອງໃຫ້ພັກ-ລັດ ການຈັດຕັ້ງແຕ່ລະຂັ້ນຕ້ອງໄດ້ຮີບຮ້ອນຊອກວິທີແກ້ໄຂຢ່າງເປັນລະບົບ ແລະ ທັນເວລາ.

ຕໍ່ກັບບັນຫາດັ່ງກ່າວ ວິທີແກ້ໄຂ ກ່ອນອື່ນໝົດຕ້ອງເລີ່ມຈາກຄະນະພັກ, ອົງການປົກຄອງແຕ່ລະຂັ້ນຖືສຳຄັນ, ຊີ້ນຳໂດຍກົງ ແລະ ລົງເລິກເຮັດວຽກງານການເມືອງ-ແນວຄິດເປັນປົກກະຕິ, ຕໍ່ເນື່ອງ, ບູລະນະລະບົບອຳນາດລັດ ຕາມທິດສ້າງລັດປົກຄອງດ້ວຍກົດໝາຍໃຫ້ມີປະສິດທິພາບ, ສັກສິດ ຕິດພັນກັບການເສີມຂະຫຍາຍສິດເປັນເຈົ້າ ແລະ ມີສ່ວນຮ່ວມຂອງປະຊາຊົນ, ການປະຕິບັດແນວທາງປ້ອງກັນຊາດ-ປ້ອງກັນຄວາມສະຫງົບທົ່ວປວງຊົນຮອບດ້ານ ແລະ ເສີມຂະຫຍາຍກຳລັງແຮງຂອງພາກສ່ວນເສດຖະກິດ ແລະ ກຳລັງແຮງສັງຄົມເຂົ້າໃສ່ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ແລະ ການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ໃຫ້ແຂງແຮງ ພ້ອມທັງເປັນເຈົ້າການພົວພັນຮ່ວມມືກັບຕ່າງປະເທດໃນແຕ່ລະດ້ານ ເພື່ອຊຸກຍູ້ການເຊື່ອມໂຍງ ແລະ ເຊື່ອມຈອດ ໃນການພັດທະນາ, ນຳເອົາຜົນປະໂຫຍດມາສູ່ປະຊາຊົນ ເພື່ອຍົກສູງຄຸນນະພາບຊີວິດການເປັນຢູ່ຂອງທົ່ວສັງຄົມໃຫ້ດີຂຶ້ນ ແລະ ຍືນຍົງ. ສຳລັບສະພາປະຊາຊົນແຂວງ ພວກເຮົາແມ່ນຈະສືບຕໍ່ສຸມໃສ່ຄົ້ນຄວ້າ, ປຶກສາຫາລືບັນຫາສຳຄັນພື້ນຖານຂອງແຂວງ ຮ່ວມກັບອົງການປົກຄອງແຂວງ ກຳນົດເນື້ອໃນທີ່ຈະນຳເຂົ້າລາຍງານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາປະຊາຊົນແຂວງບໍ່ແກ້ວ ຊຸດທີ II ໃຫ້ລະອຽດຄົບຖ້ວນ ສາມາດສ່ອງແສງ ແລະ ຕອບບັນຫາຕໍ່ຄວາມຮຽກຮ້ອງຕ້ອງການໃນການພັດທະນາ, ການແກ້ໄຂຊີວິດການເປັນຂອງສັງຄົມ ໃຫ້ແທດເໝາະກັບສະພາບຕົວຈິງໃນໄລຍະໃໝ່.

# ສຳເລັດກອງປະຊຸມ ສະໄໝສາມັນເທື່ອທີ 5 ຂອງສະພາປະຊາຊົນ ແຂວງໄຊສົມບູນ ຊຸດທີ II




(ສພຊ) ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາປະຊາຊົນແຂວງໄຊສົມບູນ ຊຸດທີ II ໄດ້ອັດລົງດ້ວຍຜົນສຳເລັດອັນຈົບງາມ ໃນຕອນບ່າຍຂອງວັນທີ 8 ກັນຍາຜ່ານມາ ພາຍຫຼັງທີ່ໄດ້ດຳເນີນມາແຕ່ວັນທີ 6 ກັນຍາ 2023 ທີ່ສະໂມສອນເມືອງອະນຸວົງ ໂດຍການເປັນປະທານຂອງທ່ານ ແດງ ປະທຸມທອງ ປະທານສະພາປະຊາຊົນແຂວງໄຊສົມບູນ; ເຂົ້າຮ່ວມຂອງທ່ານ ຈະເລີນ ເຍຍປາວເຮີ ກຳມະການສູນກາງພັກ, ຮອງປະທານຄະນະປະຈຳສະພາແຫ່ງຊາດ; ມີການນຳຂັ້ນສູງຂອງແຂວງ, ຄະນະປະຈຳສະພາປະຊາຊົນແຂວງ, ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 18, ອະດີດການນຳພັກ-ລັດຂອງແຂວງ, ສະມາຊິກສະພາປະຊາຊົນແຂວງ, ຫົວໜ້າພະແນກການ, ອົງການ, ກົມກອງ ອ້ອມຂ້າງແຂວງ ແລະ ຕາງໜ້າຈາກພາກສ່ວນຕ່າງໆ ເຂົ້າຮ່ວມ.

ທ່ານ ແດງ ປະທຸມທອງ ໄດ້ກ່າວມີຄຳເຫັນອັດກອງປະຊຸມວ່າ: ຕະຫຼອດໄລຍະ 3 ວັນເຕັມຂອງການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາປະຊາຊົນ ແຂວງໄຊສົມບູນ ຊຸດທີ II ບັນດາສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 18 ແລະ ສະມາຊິກສະພາປະຊາຊົນແຂວງ ໄດ້ເຊີດຊູຄວາມຮັບຜິດຊອບສູງໃນການຄົ້ນຄວ້າ, ປະກອບຄຳຄິດ-ຄຳເຫັນ ໃສ່ທຸກເນື້ອໃນທີ່ນຳມາພິຈາລະນາ ບົນພື້ນຖານການເສີມຂະຫຍາຍສິດປະຊາທິປະໄຕ ແລະ ມີຄວາມເປັນເອກະພາບສູງ ໃນການພິຈາລະນາຮັບຮອງເອົາບັນຫາສຳຄັນຕ່າງໆ ທີ່ນຳມາຄົ້ນຄວ້າຢູ່ໃນກອງປະຊຸມໃນຄັ້ງນີ້ ຄື: ໄດ້ພິຈາລະນາຮັບຮອງເອົາບົດລາຍງານ ໂດຍສັງເຂບຂອງເຈົ້າແຂວງ ກ່ຽວກັບການຈັດຕັ້ງປະຕິບັດວຽກງານພົ້ນເດັ່ນຂອງແຂວງໄຊສົມບູນ ໄລຍະກາງສະໄໝຂອງແຜນການ 5 ປີ (2021-2025), ທິດທາງແຜນການທ້າຍສະໄໝ, ການຈັດຕັ້ງປະຕິບັດ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2023, ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ໄລຍະກາງສະໄໝຂອງແຜນການ 5 ປີ ( 2021-2025 ), ທິດທາງແຜນການທ້າຍສະໄໝ, ການຈັດຕັ້ງປະຕິບັດ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2023, ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ໄລຍະກາງສະໄໝຂອງແຜນການ 5 ປີ (2021-2025), ທິດທາງແຜນການທ້າຍສະໄໝ, ການຈັດຕັ້ງປະຕິບັດ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2023, ການລາຍງານການຈັດຕັ້ງປະຕິບັດ ຄຳລັດ 414/ລບ ປະຈຳ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2023, ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2023, ບົດລາຍງານຜົນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ, ການສະເໜີ (ຮ່າງ) ຂໍ້ຕົກລົງຂອງທ່ານເຈົ້າແຂວງໄຊສົມບູນ ຈຳນວນ 2 ສະບັບ, ບົດລາຍງານຂອງສານປະຊາຊົນແຂວງ ກ່ຽວກັບການຈັດຕັ້ງປະຕິບັດວຽກງານໄລຍະກາງສະໄໝຂອງແຜນການ 5 ປີ (2021-2025), ທິດທາງແຜນການທ້າຍສະໄໝ, ການຈັດຕັ້ງປະຕິບັດ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2023, ບົດລາຍງານຂອງອົງການໄອຍະການປະຊາຊົນແຂວງ ກ່ຽວກັບການຈັດຕັ້ງປະຕິບັດວຽກງານໄລຍະກາງສະໄໝຂອງແຜນການ 5 ປີ (2021-2025), ທິດທາງແຜນການທ້າຍສະໄໝ, ການຈັດຕັ້ງປະຕິບັດ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2023 ແລະ ການປະເມີນຜົນການປະຕິບັດໜ້າທີ່ຂອງບຸກຄະລາກອນທີ່ດຳລົງຕຳແໜ່ງ ທີ່ສະພາປະຊາຊົນແຂວງໄຊສົມບູນ ເລືອກຕັ້ງ ແລະ ຮັບຮອງການແຕ່ງຕັ້ງ.

ພ້ອມນີ້, ກອງປະຊຸມຍັງໄດ້ຮັບຟັງການອະທິບາຍຊີ້ແຈງບັນຫາຕ່າງໆ ຕໍ່ຄຳຊັກຖາມຂອງສະມາຊິກສະພາປະຊາຊົນແຂວງ ຈາກຂະແໜງການທີ່ກ່ຽວຂ້ອງ ເຊິ່ງການອອກມະຕິກອງປະຊຸມໃນຄັ້ງນີ້ ຈະເປັນບ່ອນອີງໃຫ້ແກ່ອົງການປົກຄອງແຂວງ ເພື່ອສືບຕໍ່ນຳພາ-ຊີ້ນຳບັນດາຂະແໜງການນຳໄປຈັດຕັ້ງປະຕິບັດ ແລະ ແກ້ໄຂບັນຫາເຄັ່ງຮ້ອນຂອງສັງຄົມໃນປັດຈຸບັນ ໃຫ້ມີຜົນສຳເລັດຕົວຈິງ ພິເສດ ແມ່ນໄດ້ຮັບຟັງການໂອ້ລົມຂອງ ທ່ານ ຈະເລີນ ເຍຍປາວເຮີ ເພື່ອເປັນທິດຊີ້ນຳໃນການນຳໄປສືກສາຄົ້ນຄວ້າ ຈັດຕັ້ງປະຕິບັດໃນຕໍ່ໜ້າ.

(ແສງຕາວັນ ລັດຕະນະວົງ)

# ການເຄື່ອນໄຫວຂອງສະພາປະຊາຊົນແຂວງຈຳປາສັກ

(ສພຊ) ໃນທ້າຍເດືອນສິງຫາ-ເດືອນກັນຍານີ້, ສະພາປະຊາຊົນແຂວງຈຳປາສັກໄດ້ເຄື່ອນໄຫວວຽກງານຫຼາຍດ້ານ ເປັນຕົ້ນແມ່ນການດຳເນີນກອງປະຊຸມປະຈຳເດືອນສິງຫາ 2023 ຢູ່ທີ່ຫ້ອງປະຊຸມຂອງສະພາປະຊາຊົນແຂວງ ໂດຍພາຍໃຕ້ການເປັນປະທານຂອງທ່ານ ສາຍທອງ ໄຊຍະວົງ ປະທານຄະນະປະຈຳສະພາປະຊາຊົນແຂວງຈຳປາສັກ; ມີບັນດາທ່ານຮອງປະທານຄະນະປະຈຳ, ຄະນະກຳມະການ, ຄະນະເລຂາທິການ ແລະ ວິຊາການຂອງສະພາປະຊາຊົນແຂວງເຂົ້າຮ່ວມ.

ກອງປະຊຸມໄດ້ຄົ້ນຄວ້າພິຈາລະນາຫຼາຍບັນຫາສຳຄັນຄື: ຮັບຟັງການຜ່ານຮ່າງບົດສະຫຼຸບການເຄື່ອນໄຫວຈັດຕັ້ງປະຕິບັດວຽກງານຂອງຄະນະປະຈຳສະພາປະຊາຊົນແຂວງ ປະຈຳເດືອນສິງຫາ 2023 ແລະ ແຜນການເຄື່ອນໄຫວປະຈຳເດືອນກັນຍາ 2023; ຮ່າງບົດສະຫຼຸບຕີລາຄາຄືນການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາປະຊາຊົນແຂວງຈຳປາສັກ ຊຸດທີ II; ພ້ອມນັ້ນ, ຄະນະປະຈຳສະພາປະຊາຊົນແຂວງ ໄດ້ຄົ້ນຄວ້າປະກອບຄຳເຫັນເພື່ອປັບປຸງເນື້ອໃນຂອງເອກະສານຕ່າງໆທີ່ນຳເຂົ້າມາຄົ້ນຄວ້າພິຈາລະ ໂດຍສະເພາະເນື້ອໃນຮ່າງບົດສະຫຼຸບຕີລາຄາຄືນການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາປະຊາຊົນແຂວງຈຳປາສັກ ຊຸດທີ II ທີ່ເຫັນໄດ້ຈຸດດີ ແລະ ຈຸດອ່ອນບາງດ້ານທີ່ສາມາດຖອດຖອນໄດ້ເພື່ອປັບປຸງແກ້ໄຂໃນຕໍ່ໜ້າ. ນອກນີ້, ກອງປະຊຸມຍັງໄດ້ຄົ້ນຄວ້າປຶກສາຫາລືເອກະສານສຳຄັນ ທີ່ອົງການປົກຄອງແຂວງທີ່ສະເໜີຕໍ່ສະພາປະຊາຊົນແຂວງ ແລະ ຮັບຟັງການລາຍງານຜົນການຕິດຕາມກວດກາໃນສາມຂົງເຂດວຽກງານຈາກສາມຄະນະກຳມະການຂອງສະພາປະຊາຊົນແຂວງ ແລະ ແຜນການເຄື່ອນໄຫວເຜີຍແຜ່ເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາປະຊາຊົນແຂວງຈຳປາສັກ ຊຸດທີ II ແລະ ວຽກງານປົນອ້ອມອີກຈຳນວນໜຶ່ງ.

ໃນຕອນທ້າຍ, ທ່ານ ສາຍທອງ ໄຊຍະວົງ ໄດ້ມີຄຳເຫັນສະຫຼຸບ ແລະ ຊີ້ນຳຕໍ່ກອງປະຊຸມ ເພື່ອສືບຕໍ່ຈັດຕັ້ງປະຕິບັດວຽກງານ ແລະ ແຜນການເຄື່ອນໄຫວໃນເດືອນຕໍ່ໜ້າ ເຊິ່ງ



ທ່ານໄດ້ເນັ້ນໃຫ້ບັນດາຄະນະກຳມະການ ແລະ ຄະນະເລຂາທິການ ສືບຕໍ່ກະກຽມຄວາມພ້ອມໃນການຈັດຕັ້ງປະຕິບັດວຽກງານຂອງຕົນ ຕາມພາລະບົດບາດ, ສິດ ແລະໜ້າທີ່ ທີ່ກຳນົດໄວ້ໃນລັດຖະທຳມະນູນ, ກົດໝາຍ ແລະ ແຜນການເຄື່ອນໄຫວຂອງຕົນ. ພ້ອມກັນສຸມໃສ່ວຽກງານໂຄສະນາເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ຂອງສະພາປະຊາຊົນແຂວງຈຳປາສັກ ຊຸດທີ II ໃຫ້ສັງຄົມ ແລະ ປະຊາຊົນໄດ້ຮັບຮູ້ຢ່າງກວ້າງຂວາງ.

ນອກນີ້, ສະພາປະຊາຊົນແຂວງຈຳປາສັກ ໄດ້ກອງປະຊຸມຄົ້ນຄວ້າປຶກສາຫາລືກ່ຽວກັບການຮ່າງຂໍ້ຕົກລົງຂອງເຈົ້າແຂວງຈຳປາສັກ ວ່າດ້ວຍຫົວໜ່ວຍທົດແທນຄ່າເສຍຫາຍທີ່ໄດ້ຮັບຜົນກະທົບຈາກໂຄງການພັດທະນາ ເຂດພັດທະນາເສດຖະກິດໃໝ່ ສີພັນດອນ ຢູ່ເມືອງໂຂງ ແຂວງຈຳປາສັກ ໂດຍການເປັນປະທານຂອງທ່ານ ແກ້ວລັດຕະນະ ສີຫາວົງ ຮອງປະທານຄະນະປະຈຳສະພາປະຊາຊົນແຂວງ, ມີຫົວໜ້າພະແນກແຜນການ ແລະ ການລົງທຶນ, ບັນດາທ່ານປະທານ-ຮອງປະທານ 3 ຄະນະກຳມະການຂອງສະພາປະຊາຊົນແຂວງ, ຄະນະຄຸ້ມຄອງເຂດເສດຖະກິດພິເສດແຂວງຈຳປາສັກ, ຕາງໜ້າພະແນກການ-ກົມກອງ, ວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມ ເພື່ອເຮັດໃຫ້ການສ້າງນິຕິກຳກົດການຮ່າງຂໍ້ຕົກລົງຂອງເຈົ້າແຂວງຈຳປາສັກດັ່ງກ່າວ ໃຫ້ມີປະສິດທິພາບ, ມີຄວາມໂປ່ງໃສ, ມີຄວາມເປັນເອກະພາບໃນຂອບເຂດທີ່ຈະນຳໃຊ້ ແນໃສ່ຮັບປະກັນໃນເນື້ອໃນຂອງຮ່າງຂໍ້ຕົກລົງສະບັບດັ່ງກ່າວ ມີຄຸນນະພາບ, ຮັດກຸມ, ເຂົ້າໃຈງ່າຍ, ສາມາດຈັດຕັ້ງປະຕິບັດໄດ້ ແລະ ສອດຄ່ອງກັບສະພາບຄວາມເປັນຈິງຂອງການຂະຫຍາຍຕົວຂອງເສດຖະກິດ-ສັງຄົມ ປະກອບສ່ວນໃນການສ້າງລັດທີ່ປົກຄອງດ້ວຍກົດໝາຍຂອງປະຊາຊົນ, ໂດຍປະຊາຊົນ ແລະ ເພື່ອປະຊາຊົນ.

ສະພາປະຊາຊົນແຂວງຈຳປາສັກ ຍັງໄດ້ຈັດພິທີປະກາດພະນັກງານອອກພັກຜ່ອນ-ຮັບອຸດໜູນບຳນານ ແລະ ບຳເນັດ ຟດຍການເຂົ້າຮ່ວມເປັນປະທານຂອງທ່ານ ສົມສີ ມະນີນິນ ຮອງປະທານຄະນະປະຈຳສະພາປະຊາຊົນແຂວງ; ມີບັນດາທ່ານໃນຄະນະປະຈຳ, ຄະນະກຳມະການຂອງສະພາປະຊາຊົນແຂວງ, ຕາງໜ້າພະແນກພາຍໃນແຂວງ ແລະ ແຂກຖືກເຊີນຈາກກົມກອງອ້ອມຂ້າງ, ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ວິຊາການຂອງສະພາປະຊາຊົນແຂວງເຂົ້າຮ່ວມ.

ໃນພິທີ, ທ່ານ ແສງອາທິດ ຂັນດາຣາ ຮອງຫົວໜ້າພະແນກພາຍໃນແຂວງ ໄດ້ຜ່ານຂໍ້ຕົກລົງຂອງເຈົ້າແຂວງ ສະບັບເລກທີ 776 ແລະ ສະບັບເລກທີ 777/ຈຂ.ຈສ ລົງວັນທີ 27 ມິຖຸນາ 2023, ວ່າດ້ວຍການອະນຸມັດໃຫ້ພະນັກງານ-ລັດຖະກອນອອກພັກຜ່ອນ-ຮັບອຸດໜູນບຳນານ ມີ 2 ທ່ານຄື: ທ່ານ ສາຍໃຈ ໄຊມົນຕີ ຫົວໜ້າຂະແໜງຈັດຕັ້ງ ແລະ ທ່ານ ສີໃສ ໄຊອາສາ ວິຊາການຂະແໜງບໍລິຫານ ແລະ ພິທີການ ຜ່ານຂໍ້ຕົກລົງຂໍ້ຕົກລົງຂອງເຈົ້າແຂວງ ສະບັບເລກທີ 88/ຈຂ.ຈສ, ລົງວັນທີ 31 ມັງກອນ 2023 ວ່າດ້ວຍການອະນຸມັດໃຫ້ພະນັກງານ-ລັດຖະກອນອອກພັກຜ່ອນ-ຮັບອຸດໜູນບຳເນັດ 1 ທ່ານຄື: ທ່ານ ນາງ ພູມ ນະຫວັນ ຄຳລີຊາ ຮອງເລຂາທິການສະພາປະຊາຊົນແຂວງ.

(ສົມວິຈິດ ໄຊມົນຕີ)



# ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 5 ຢູ່ເມືອງຫ້ວຍຊາຍ ແຂວງບໍ່ແກ້ວ



(ສພຊ) ລະຫວ່າງວັນທີ 1-5 ກັນຍາ 2023 ທ່ານ ວິລະພັນ ສີລິທຳ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 5 ແຂວງບໍ່ແກ້ວ, ຫົວໜ້າກົມກໍ່ສ້າງພະນັກງານຄະນະຈັດຕັ້ງສູນກາງພັກ ພ້ອມດ້ວຍຄະນະເລຂາທິການສະພາປະຊາຊົນແຂວງ ແລະ ຄະນະບໍລິຫານງານພັກເມືອງຕົ້ນເຜີ້ງ ຜູ້ຊີ້ນຳບັນດາບ້ານ ໄດ້ເຄື່ອນໄຫວເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງບໍ່ແກ້ວ ຊຸດທີ II ໃຫ້ແກ່ພະນັກງານຫຼັກແຫຼ່ງອ້ອມຂ້າງເມືອງ ແລະ ພໍ່ແມ່ປະຊາຊົນ 5 ບ້ານ ພາຍໃນເມືອງຕົ້ນເຜີ້ງ ຄື: ບ້ານໃຫຍ່ນ້ຳເກິ່ງເກົ່າ, ບ້ານສີດອນແຍງ, ບ້ານສີທາດ, ບ້ານຖຸນບົງ ແລະ ບ້ານໃຫຍ່ສີເມືອງງາມ, ມີທ່ານ ຄຳແຍງ ຄອນໄຊຍະກິດ ເຈົ້າເມືອງຕົ້ນເຜີ້ງ ແລະ ບັນດາການນຳເມືອງ, ພະນັກງານຫຼັກແຫຼ່ງອ້ອມຂ້າງເມືອງ, ຄະນະພັກ-ການປົກຄອງບ້ານ, ການຈັດຕັ້ງບ້ານ ແລະ ພໍ່ແມ່ປະຊາຊົນເຂົ້າຮ່ວມ.

ທ່ານ ວິລະພັນ ສີລະທຳ ໄດ້ໃຫ້ຮູ້ວ່າ: ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ພິຈາລະນາຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 6 ເດືອນຕົ້ນປີ ແລະ ທິດທາງແຜນການທ້າຍປີ 2023 ຂອງລັດຖະບານ, ພິຈາລະນາຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ແຜນເງິນຕາ 6 ເດືອນຕົ້ນປີ 2023, ພິຈາລະນາຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບວິໄສທັດຮອດປີ 2040 ແລະ ຍຸດທະສາດພັດທະນາແຮ່ທາດ ຮອດປີ 2030, ພິຈາລະນາຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບວິໄສທັດຮອດປີ 2040 ແລະ ຍຸດທະສາດການຄຸ້ມຄອງນ້ຳ-ຊັບພະຍາກອນນ້ຳແຫ່ງຊາດ ຮອດປີ 2030, ພິຈາລະນາຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ, ພິຈາລະນາຮັບຮອງເອົາການແຕ່ງຕັ້ງສະມາຊິກຜູ້ພິພາກສາຂອງສານປະຊາຊົນສູງສຸດ, ພິຈາລະນາຮັບຮອງເອົາຜົນຂອງການປະເມີນການຈັດຕັ້ງປະຕິບັດກົດໝາຍຂົງເຂດຍຸຕິທຳ 4 ສະບັບ, ພິຈາລະນາຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານກອງປະຊຸມສະໄໝສາມັນເທື່ອທີ 4-5, ພິຈາລະນາຮັບຮອງເອົາບັນດາກົດໝາຍ ຈຳນວນ 10 ສະບັບ ກົດໝາຍສ້າງໃໝ່ 4 ສະບັບ ກົດໝາຍປັບປຸງ 6 ສະບັບ. ສ່ວນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາປະຊາຊົນແຂວງບໍ່ແກ້ວ ໄດ້ພິຈາລະນາຮັບຮອງເອົາອົງການກາແດງແຂວງບໍ່ແກ້ວ ເປັນອົງການທຽບເທົ່າພະແນກການຂັ້ນແຂວງ ດ້ວຍຄະແນນສຽງຂອງສະມາຊິກສະພາປະຊາຊົນແຂວງ 100%, ພິຈາລະນາຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດຂອງແຂວງ ໄລຍະກາງສະໄໝຂອງແຜນການ 5 ປີ (2021-2025) ແລະ ທິດທາງແຜນການໄລຍະທ້າຍສະໄໝ; ການຈັດຕັ້ງປະຕິບັດວຽກງານ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2023, ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດ ບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ໄລຍະກາງສະໄໝຂອງແຜນການ 5 ປີ (2021-2025) ແລະ ທິດທາງແຜນການໄລຍະທ້າຍສະໄໝ; ການຈັດຕັ້ງປະຕິບັດວຽກງານ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2023; ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ໄລຍະກາງສະໄໝຂອງແຜນການ5ປີ(2021-2025) ແລະ ທິດທາງແຜນການ ໄລຍະທ້າຍສະໄໝ; ການຈັດຕັ້ງປະຕິບັດວຽກງານ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2023; ພ້ອມນີ້ ກອງປະຊຸມຍັງໄດ້ຮັບຮອງເອົານິຕິກຳໃຕ້ກົດໝາຍ ຈຳນວນ 1 ສະບັບຄື: ຂໍ້ຕົກລົງຂອງເຈົ້າແຂວງວ່າດ້ວຍການກຳນົດຫົວໜ່ວຍລາຄາ ແລະ ການທົດແທນຄ່າເສຍຫາຍຂອງປະຊາຊົນ ເມືອງປາກທາ ທີ່ຖືກຜົນກະທົບຈາກໂຄງການກໍ່ສ້າງເຂື່ອນໄຟຟ້ານ້ຳຂອງ ເມືອງປາກແບງ (ເຂດອ່າງເກັບນ້ຳໜ້າເຂື່ອນ). ພ້ອມນັ້ນຍັງໄດ້ຮັບຟັງການລາຍງານຂອງອົງການປົກຄອງແຂວງ, ອົງການໄອຍະການປະຊາຊົນແຂວງ, ສານປະຊາຊົນແຂວງ ແລະ ການປະກອບຄຳຄິດຄຳເຫັນຂອງຄະນະປະຈຳສະພາປະຊາຊົນແຂວງຕໍ່ບົດລາຍງານອົງການປົກຄອງແຂວງ, ອົງການໄອຍະການປະຊາຊົນແຂວງ, ສານປະຊາຊົນແຂວງ ແລະ ຮັບຟັງຄຳຊີ້ແຈງຂອງອົງການດັ່ງກ່າວຕໍ່ຄຳຖາມເຈາະຈີ້ມຂອງສະມາຊິກສະພາປະຊາຊົນແຂວງ.

ໂອກາດດຽວກັນນີ້, ຍັງໄດ້ຮັບຟັງຄຳສະເໜີຕໍ່ບັນຫາຕ່າງໆຈາກອົງການປົກຄອງເມືອງ, ຄະນະພັກ-ອຳນາດການປົກຄອງບ້ານ ແລະ ພໍ່ແມ່ປະຊາຊົນ ເປັນຕົ້ນແມ່ນບັນຫາການປັບປຸງເສັ້ນຮ່ອມ ທາງຊອຍ ພາຍໃນເທສະບານເມືອງຕົ້ນເຜີ້ງ, ບັນຫາສິ່ງປູກສ້າງ ແລະ ປ້າຍໂຄສະນາຕ່າງໆ ກວມເຂດສະຫງວນທາງ-ຂອບທາງໃນເທສະບານເມືອງ ເຮັດໃຫ້ກີດຂວາງການສັນຈອນ, ເສັ້ນທາງແຄບ ແລະ ການສັນຈອນແອອັດ, ສະເໜີງົບປະມານການປັບປຸງຮ່ອງລະບາຍນ້ຳ, ຕິດຕັ້ງໄຟເບືອງທາງ ແລະ ແກ້ໄຂບັນຫາສິ່ງປຸກສ້າງກວມເຂດເສົາໄຟຟ້າ ຢູ່ບ້ານໃຫຍ່ນ້ຳເກິ່ງ, ບັນຫາການຂຸດຄົ້ນແຮ່ຊາຍຢູ່ບ້ານສີທາດ ແລະ ບ້ານສີດອນແຍງ ຂອງນັກລົງທຶນ ເຊິ່ງມີຜົນຕໍ່ການເຊາະເຈື່ອນຂອງຕາຝັ່ງ ແລະ ປະຊາຊົນຢາກຮູ້ກຳນົດເວລາສິ້ນສຸດການຂຸດຄົ້ນ ແລະ ຜົນປະໂຫຍດທີ່ບ້ານຈະໄດ້ຮັບຈາກການຂຸດຄົ້ນ, ບັນຫາຂີ້ຝຸ່ນ ລະອອງຊາຍຈາກການບັນທຸກແຮ່ຊາຍເກີນບໍລິມາດທີ່ກຳນົດຕາມທ້ອງຖະໜົນ, ບັນຫາຊາວໜຸ່ມ ມີການຊຸມແຊວ ແລະ ມົ້ວສຸມສິ່ງເສບຕິດຮູບແບບໃໝ່ ເນື່ອງນັບສັງຄົມ, ບັນຫາທີ່ດິນປ່າສະຫງວນຂອງບ້ານຖຸນບົງທີ່ຖືກໂຄງການປ່າສະຫງວນພູກົ່ວລົມ ເຊິ່ງນັກລົງທຶນສະເໜີສ້າງທາງປູຢາງເພື່ອເປັນຄ່າຊົດເຊີຍໃຫ້ທາງບ້ານ ແຕ່ຈົນເຖິງປັດຈຸບັນຍັງບໍ່ມີການລົງມືສ້າງທາງຕາມສັນຍາໃນເບື້ອງຕົ້ນ, ອຳນາດການປົກຄອງບ້ານຖຸນບົງສະເໜີໃຫ້ເມືອງສ້າງສູນບຳບັດຢາເສບຕິດ ເພື່ອຫຼຸດຜ່ອນບັນຫາປາກົດການຫຍໍ້ທໍ້ພາຍໃນບ້ານ ແລະ ເນື່ອງຈາກການນຳເອົາຜູ້ຕິດຢາເສບຕິດໄປຝາກດັດສ້າງແມ່ນມີຄ່າໃຊ້ຈ່າຍສູງ, ອຳນາດການບ້ານໃຫຍ່ ສີເມືອງງາມສະເໜີງົບປະມານສົບທົບຈາກພາກລັດເພື່ອປັບປຸງຮ່ອງລະບາຍນ້ຳ ແລະ ທາງຮ່ອມ ທາງຊອຍພາຍໃນບ້ານ ແລະ ບັນຫາອື່ນໆ.



# ຄລສ ເຊກອງ ຕີລາຄາຄືນການຈັດຕັ້ງປະຕິບັດວຽກງານ ປະຈຳ 6 ເດືອນຕົ້ນປີ 2023

(ສພຊ) ໃນວັນທີ 11 ກັນຍາ 2023 ທີ່ສະໂມສອນສະພາປະຊາຊົນແຂວງເຊກອງ ໄດ້ເປີດກອງປະຊຸມສະຫຼຸບຕີລາຄາວຽກງານຄະນະເລຂາທິສະພາປະຊາຊົນແຂວງ (ຄລສ) ເຊກອງ ປະຈຳປີ 6 ເດືອນຕົ້ນປີ 2023 ແລະ ທິດທາງແຜນການ ປະຈຳ 6 ເດືອນທ້າຍປີ 2023 ໂດຍການເປັນປະທານຮ່ວມຂອງທ່ານ ນາງ ຄຳເສັງ ທຸມມະວົງສາ ຮອງປະທານສະພາປະຊາຊົນແຂວງ ແລະ ທ່ານ ນາງ ຄຳໄພ ວິລະສານ ເລຂາທິການສະພາປະຊາຊົນແຂວງເຊກອງ, ມີທ່ານ ປອ. ແພງສີ ສີລາວີ ຄະນະປະຈຳພັກແຂວງ, ຮອງປະທານສະພາປະຊາຊົນແຂວງ, ບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງ, ຄະນະກຳມະການ, ຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ຕະຫຼອດຮອດພະນັກງານ-ລັດຖະກອນພາຍໃນສະພາປະຊາຊົນແຂວງເຂົ້າຮ່ວມ.

ກອງປະຊຸມໃນຄັ້ງນີ້, ແມ່ນເພື່ອສະຫຼຸບຕີລາຄາຄືນຜົນງານ, ຈຸດດີ, ຈຸດອ່ອນ ແລະ ຂໍ້ຄົງຄ້າງໃນການເຄື່ອນໄຫວວຽກງານ ປະຈຳປີ 6 ເດືອນຕົ້ນປີ 2023 ແລະ ທິດທາງແຜນການ ປະຈຳ 6 ເດືອນທ້າຍປີ 2023ຂອງຄະນະເລຂາທິການສະພາປະຊາຊົນແຂວງເຊກອງ ໃນການເຮັດໜ້າທີ່ຕາມພາລະບົດບາດ, ສິດ ແລະ ໜ້າທີ່ເປັນເສນາທິການຮອບດ້ານໃຫ້ແກ່ສະພາປະຊາຊົນຂັ້ນແຂວງ, ຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະ ຄະນະສະມາຊິກສະພາປະຊາຊົນຂັ້ນແຂວງ.

ກອງປະຊຸມໄດ້ຮັບຟັງການຜ່ານຮ່າງບົດສະຫຼຸບການເຄື່ອນໄຫວວຽກງານຂອງຄະນະເລຂາທິການສະພາປະຊາຊົນແຂວງຄຳມ່ວນ ປະຈຳປີ 6 ເດືອນຕົ້ນປີ 2023 ແລະ ທິດທາງແຜນການ ປະຈຳ 6 ເດືອນທ້າຍປີ 2023; ມະຕິຕົກລົງຂອງສະພາປະຊາຊົນແຂວງກ່ຽວກັບການອະນຸມັດພະນັກງານ-ລັດຖະກອນ ສະພາປະຊາຊົນແຂວງ ເຂົ້າຮັບອຸດໜູນພັກຜ່ອນບຳນານ; ມະຕິຕົກລົງຂອງທ່ານເຈົ້າແຂວງ ແລະ ສະພາປະຊາຊົນແຂວງ ວ່າດ້ວຍຍ້ອງຍໍບຸກຄົນດີເດັ່ນປະຈຳປີ 2022 ແລະ ບັນດາເອກະສານກ່ຽວກັບວຽກງານປົ່ນອ້ອມອີກຈຳນວນໜຶ່ງ. ພ້ອມນັ້ນ, ກອງປະຊຸມຍັງໄດ້ປະກອບຄຳຄິດຄຳເຫັນໃສ່ຮ່າງບົດສະຫຼຸບການເຄື່ອນໄຫວວຽກງານຂອງຄະນະເລຂາທິການສະພາປະຊາຊົນຂັ້ນແຂວງ ຢ່າງມີບັນຍາກາດອັນຟົດຟື້ນ ແລະ ເປັນເຈົ້າການເຂົ້າໃສ່ເນື້ອໃນຄັ້ງນີ້ ໃຫ້ມີອັນຄົບຖ້ວນສົມບູນເລິກເຊິ່ງຖືກຕ້ອງ, ສອດຄ່ອງກັບສະພາບຄວາມເປັນຈິງ ທັງເປັນບ່ອນອີງໃຫ້ແກ່ການຈັດຕັ້ງປະຕິບັດວຽກງານໃນຕໍ່ໜ້າໃຫ້ໄດ້ຮັບປະສິດທິພາບ ແລະ ປະສິດທິຜົນດີຂຶ້ນເປັນກ້າວໆ.

ໂອກາດດັ່ງກ່າວ, ນາງ ຄຳເສັງ ທຸມມະວົງສາ ໄດ້ໂອ້ລົມຕໍ່ກອງປະຊຸມ ໂດຍທ່ານໄດ້ສະແດງຄວາມຍ້ອງຍໍ ແລະ ຊົມເຊີຍຕໍ່ຜົນງານ ທີ່ຄະນະເລຂາທິການສະພາປະຊາຊົນຂັ້ນແຂວງ ຍາດໄດ້ຜົນງານອັນພົ້ນເດັ່ນມາຫຼາຍດ້ານ ຕະຫຼອດໄລຍະທີ່ຜ່ານມາ. ພ້ອມນັ້ນ, ທ່ານຍັງໄດ້ເນັ້ນໜັກໃຫ້ບັນດາສະມາຊິກພັກ ແລະ ພະນັກງານ-ລັດຖະກອນ ຈົ່ງສືບຕໍ່ຮັກສາມູນເຊື້ອ ແລະ ເພີ່ມທະວີຄວາມສາມາດໃນການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ເປັນເສນາທິການຮອບດ້ານໃຫ້ແກ່ສະພາປະຊາຊົນຂັ້ນແຂວງ, ຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະ ຄະນະສະມາຊິກສະພາປະຊາຊົນຂັ້ນແຂວງ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານມີຜົນສຳເລັດ ແລະ ມີປະສິດທິພາບສູງຂຶ້ນກວ່າເກົ່າ.

**(ນາລີວັນ)**



# ສຳເລັດການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາປະຊາຊົນແຂວງຜົ້ງສາລີ

(ສພຊ) ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາປະຊາຊົນແຂວງ ຊຸດທີ II ໄດ້ອັດລົງດ້ວຍຜົນສຳເລັດຢ່າງຈົບງາມ ເຊິ່ງໄດ້ດຳເນີນມານັບແຕ່ວັນທີ 6-8 ກັນຍາ 2022 ລວມເປັນເວລາ 3 ວັນ ດ້ວຍຄວາມເຄັ່ງຮ້ອນ, ເຕັມໄປດ້ວຍຄວາມຮັບຜິດຊອບສູງ ແລະ ບັນລຸຜົນສຳເລັດຕາມຈຸດປະສົງລະດັບຄາດໝາຍທີ່ວາງໄວ້ ພາຍໃຕ້ເປັນປະທານກອງປະຊຸມຂອງທ່ານ ທອງສີ ເສົາສຸລິພົມ ປະທານສະພາປະຊາຊົນແຂວງ ໂດຍການເຂົ້າຮ່ວມຂອງທ່ານ ຄຳໃບ ດຳລັດ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ມີທ່ານ ຄຳຜ່ອຍ ວັນນະສານ ກຳມະການສູນກາງພັກ, ເລຂາຄະນະບໍລິຫານງານພັກແຂວງ, ເຈົ້າແຂວງຜົ້ງສາລີ; ມີບັນດາທ່ານຮອງເຈົ້າແຂວງ, ບັນດາທ່ານສະມາຊິກສະພາແຫ່ງຊາດ ຊຸດທີ IX ປະຈຳເຂດເລືອກຕັ້ງ 2 ແຂວງຜົ້ງສາລີ, ສະມາຊິກສະພາປະຊາຊົນແຂວງ, ສະມາຊິກອົງການປົກຄອງແຂວງ, ປະທານແນວລາວສ້າງຊາດແຂວງ, ອົງການຈັດຕັ້ງມະຫາຊົນຂັ້ນແຂວງ, ອົງການຈັດພັກ-ລັດຂັ້ນແຂວງ, ອະດີດການນຳແຂວງ, ອະດີດສະມາຊິກສະພາແຫ່ງຊາດ, ສະພາປະຊາຊົນແຂວງ, ຫົວໜ່ວຍທຸລະກິດ ທັງພາກລັດ ແລະ ເອກະຊົນ ເຂົ້າຮ່ວມຢ່າງພ້ອມພຽງ.




ກອງປະຊຸມໄດ້ຄົ້ນຄວ້າ, ຮັບຟັງການປະກອບຄຳຄິດຄຳເຫັນຂອງບັນດາທ່ານສະມາຊິກສະພາປະຊາຊົນແຂວງ ຕໍ່ກັບບັນດາເນື້ອໃນວຽກງານຂອງອົງການປົກຄອງແຂວງ, ວຽກງານຂອງອົງການໄອຍະການປະຊາຊົນແຂວງ, ສານປະຊາຊົນແຂວງ ແລະ ວຽກງານສະພາປະຊາຊົນແຂວງ ເຊິ່ງພິຈາລະນາ ແລະ ຮັບຮອງບັນຫາສຳຄັນພື້ນຖານຂອງແຂວງ ອອກເປັນມະຕິກອງປະຊຸມສະພາປະຊາຊົນແຂວງ ດັ່ງນີ້:

1) ມະຕິ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມໄລຍະກາງສະໄໝຂອງແຜນການ 5 ປີ ຄັ້ງທີ IX (2021-2025) ແລະ ທິດທາງແຜນການທ້າຍສະໄໝ;

2) ມະຕິ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມປະຈຳ 6 ເດືອນຕົ້ນປີ 2023 ແລະ ທິດທາງແຜນການ 6 ເດືອນທ້າຍປີ 2023;

3) ມະຕິວ່າດ້ວຍການຮັບຮອງເອົາ ບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານ ໄລຍະກາງສະໄໝຂອງແຜນການ 5 ປີຄັ້ງທີ IX (2021-2025) ແລະ ທິດທາງແຜນການທ້າຍສະໄໝ;

4) ມະຕິ ວ່າດ້ວຍການຮັບຮອງເອົາ ບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດ ແຜນງົບປະມານ ປະຈຳ 6 ເດືອນຕົ້ນປີ 2023 ແລະ ທິດທາງແຜນການ 6 ເດືອນທ້າຍປີ 2023;

5) ມະຕິ ວ່າດ້ວຍການຮັບຮອງເອົາ ບົດລາຍງານຂອງອົງການໄອຍະການປະຊາຊົນແຂວງ ກ່ຽວກັບການຈັດຕັ້ງປະຕິບັດວຽກງານໄລຍະກາງສະໄໝຂອງແຜນການ 5 ປີ (2021-2025) ແລະ ທິດທາງແຜນການທ້າຍສະໄໝ;

6) ມະຕິ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງອົງການໄອຍະການປະຊາຊົນແຂວງ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ ປະຈຳ 6 ເດືອນຕົ້ນປີ 2023 ແລະ ແຜນວຽກຈຸດສຸມ ປະຈຳ 6 ເດືອນທ້າຍປີ 2023;

7) ມະຕິ ວ່າດ້ວຍການຮັບຮອງເອົາ ບົດລາຍງານຂອງສານປະຊາຊົນແຂວງ ກ່ຽວກັບການຈັດຕັ້ງປະຕິບັດວຽກງານໄລຍະກາງສະໄໝ ຂອງແຜນການ 5 ປີ (2021-2025) ແລະ ທິດທາງແຜນການທ້າຍສະໄໝ;

8) ມະຕິ ວ່າດ້ວຍການຮັບຮອງເອົາ ບົດລາຍງານຂອງສານປະຊາຊົນແຂວງ ກ່ຽວກັບການຈັດຕັ້ງປະຕິບັດວຽກງານປະຈຳ 6 ເດືອນຕົ້ນປີ 2023 ແລະ ແຜນວຽກຈຸດສຸມ ປະຈຳ 6 ເດືອນທ້າຍປີ 2023;

9) ມະຕິ ວ່າດ້ວຍການຮັບຮອງເອົາ ບົດລາຍງານ ການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານໄລຍະກາງສະໄໝຂອງແຜນການ 5 ປີ (2021-2025) ແລະ ແຜນການ ເຄື່ອນໄຫວວຽກງານທ້າຍສະໄໝ ຂອງສະພາປະຊາຊົນແຂວງ ຊຸດທີ II;

10) ມະຕິວ່າດ້ວຍການຮັບຮອງເອົາ ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ແຕ່ກອງປະຊຸມສະໄໝສາມັນເທື່ອທີ 4 ຫາເທື່ອທີ 5 ແລະ ແຜນການເຄື່ອນໄຫວວຽກງານຮອດກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາປະຊາຊົນແຂວງ ຊຸດທີ II.

ກອງປະຊຸມໄດ້ຮັບຟັງການຊີ້ແຈງຕໍ່ຄຳຊັກຖາມ ເຊິ່ງສະມາຊິກສະພາປະຊາຊົນແຂວງ ກໍຄືປະຊາຊົນບັນດາເຜົ່າໃຫ້ຄວາມສົນໃຈຫຼາຍ ຈາກທ່ານຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ, ຫົວໜ້າພະແນກກະສິກຳ ແລະ ປ່າໄມ້ແຂວງ, ພະແນກພະລັງງານ ແລະ ບໍ່ແຮ່ແຂວງ, ອົງການກວດກາລັດແຂວງ, ພະແນກສຶກສາທິການແລະກິລາແຂວງ, ພະແນກສາທາລະນະສຸກແຂວງ, ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ. ພ້ອມນັ້ນ, ຍັງໄດ້ຈັດຕັ້ງການປະເມີນຄວາມໄວ້ວາງໃຈ ໃນການປະຕິບັດໜ້າທີ່ຂອງບຸກຄະລາກອນ ທີ່ສະພາປະຊາຊົນແຂວງເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ.

**(ສູນທອງ ວິໄລຈິດ)**

# ກອງປະຊຸມ ປະຈຳປີ ຂອງ ສສຊ ເຂດ 10



(ສພຊ) ຕອນເຊົ້າວັນທີ 12 ກັນຍາ 2023 ສະພາປະຊາຊົນແຂວງວຽງຈັນ ໄດ້ຈັດກອງປະຊຸມ ປະຈຳປີ 2022 ແລະ ທິດທາງແຜນການປະຈຳປີ 2023 ຂອງຄະນະສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 10 ແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ ບຸນສອນ ເພັດລາວັນ ປະທານຄະນະ ສສຊ ຊຸດທີ IX ປະຈຳເຂດເລືອກຕັ້ງທີ 10 ແຂວງວຽງຈັນ; ມີ ສສຊ, ສະມາຊິກສະພາປະຊາຊົນແຂວງ ຜູ້ປະຈຳການ, ຮອງເຈົ້າແຂວງວຽງຈັນ, ຫົວໜ້າ-ຮອງຫົວໜ້າພະແນກການ ແລະ ພະນັກງານຂະແໜງການທີ່ກ່ຽວຂ້ອງເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ຮັບຟັງບົດລາຍງານການຈັດຕັ້ງປະຕິບັດການເຄື່ອນໄຫວວຽກງານຂອງຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 10 ແຂວງວຽງຈັນ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023 ເພື່ອເປັນການສະຫຼຸບຕີລາຄາຄືນກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 10 ແຂວງວຽງຈັນ ປະຈຳປີ 2022 ແລະ ທິດທາງແຜນການປະຈຳປີ 2023 ໃນໄລຍະໜຶ່ງປີຜ່ານມາທີ່ສະແດງໃຫ້ເຫັນດ້ານດີຜົນສຳເລັດ, ດ້ານອ່ອນຂໍ້ຄົງຄ້າງໃນການຈັດຕັ້ງປະຕິບັດວຽກງານທີ່ສະມາຊິກສະພາແຫ່ງຊາດ ຊຸດທີ IX ປະຈຳເຂດເລືອກຕັ້ງທີ 10 ແຂວງວຽງຈັນ; ພ້ອມດຽວກັນນັ້ນ, ກອງປະຊຸມຍັງໄດ້ມີການຄົ້ນຄວ້າປະກອບຄຳເຫັນໃສ່ຮ່າງບົດດັ່ງກ່າວ ຢ່າງກົງໄປກົງມາ ແລະ ມີຈຸດສຸມເພື່ອເຮັດໃຫ້ເນື້ອໃນຄົບຖ້ວນສົມບູນ ແລະ ສອດຄ່ອງກັບການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງບັນດາທ່ານ ສສຊ ປະຈຳເຂດເລືອກຕັ້ງທີ 10 ແຂວງວຽງຈັນ.

ໃນຕອນທ້າຍ, ປະທານກອງປະຊຸມຍັງໄດ້ຮຽກຮ້ອງໃຫ້ ສສຊ ເອົາໃຈໃສ່ ແລະ ຍົກສູງຄວາມຮັບຜິດຊອບຂອງຕົນໃນການເຄື່ອນໄຫວ, ຕິດຕາມກວດກາ ແລະ ເກັບກຳຂໍ້ມູນສະພາບການທາງສຽງສັງຄົມ ເພື່ອຮັບປະກັນໃຫ້ມະຕິກອງປະຊຸມໃນຄັ້ງນີ້ ໄດ້ຮັບການຈັດຕັ້ງປະຕິບັດ ແລະ ມີຜົນສຳເລັດຕາມຄາດໝາຍທີ່ວາງໄວ້.

# ສສຊ ແລະ ສສຂ ຫົວພັນ ພົບປະຜູ້ມີສິດເລືອກຕັ້ງ

(ສພຊ) ລະຫວ່າງວັນທີ 5-9 ກັນຍາ 2023 ທ່ານ ສີຄຳ ບຸນມີໄຊ ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 8 ແຂວງຫົວພັນ,ປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ສະພາປະຊາຊົນແຂວງຫົວພັນ ພ້ອມດ້ວຍທີມງານ ໄດ້ເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ຢູ່ເມືອງຫົວເມືອງ ແລະ ເມືອງຮ້ຽມ ລວມມີ 5 ຈຸດ 5 ບ້ານ ມີຜູ້ເຂົ້າຮ່ວມທັງໝົດ 287 ຄົນ ຍິງ 142 ຄົນ.



ໃນການເຄື່ອນໄຫວຄັ້ງນີ້, ສສຊ ໄດ້ນຳເອົາຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II ເຜີຍແຜ່ໃຫ້ອຳນາດການປົກຄອງ ແລະ ປະຊາຊົນ ໄດ້ຮັບຮູ້, ເຂົ້າໃຈ ຕໍ່ເນື້ອໃນຈິດໃຈຂອງສອງກອງປະຊຸມດັ່ງກ່າວ; ພ້ອມດຽວກັນນີ້ ທ່ານຍັງໄດ້ເນັ້ນໃຫ້ອຳນາດການປົກຄອງບ້ານ, ພໍ່ແມ່ປະຊາຊົນບັນດາເຜົ່າ ເອົາໃຈໃສ່ສ້າງເສດຖະກິດຄອບຄົວ ເປັນຕົ້ນແມ່ນການປູກຝັງ, ລ້ຽງສັດ, ຕໍ່າຫູກທໍໄໝໃຫ້ເປັນສິນຄ້າ ສາມາດສ້າງລາຍຮັບເຂົ້າສູ່ຄອບຄົວ ເພື່ອເຮັດໃຫ້ຊີວິດການເປັນຢູ່ ມີການພັດທະນາຂຶ້ນເລື້ອຍໆ ແລະ ເອົາໃຈໃສ່ເປັນເຈົ້າການປະຕິບັດອາລະແຫ່ງຊາດຕື່ມອີກ.

**(ນັກຂ່າວ ສພຊ ຫົວພັນ)**






# ກົດໝາຍ ວ່າດ້ວຍຄວາມປອດໄພຂອງເຂື່ອນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 20 /ສພຊ
ນະຄອນຫຼວງວຽງຈັນ, ວັນທີ 7 ກໍລະກົດ 2022

## ກົດໝາຍ ວ່າດ້ວຍຄວາມປອດໄພຂອງເຂື່ອນ

## ພາກທີ I ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຄຸ້ມຄອງ, ຕິດຕາມ ກວດກາ ແລະ ຄວບຄຸມວຽກງານຄວາມປອດໄພຂອງເຂື່ອນ ເພື່ອເຮັດໃຫ້ການສຶກສາສຳຫຼວດ, ການອອກແບບ, ການກໍ່ສ້າງ, ການດຳເນີນງານຂອງເຂື່ອນ ແລະ ການສ້າງແຜນຮັບມືສຸກເສີນ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ຮັບປະກັນການປ້ອງກັນຜົນກະທົບຕໍ່ຊີວິດ, ສຸຂະພາບ, ຊັບສິນ ຂອງພົນລະເມືອງ, ຂອງລັດ ແລະ ສິ່ງ ແວດລ້ອມ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ ໄປຕາມທິດສີຂຽວ ແລະ ຍືນຍົງ.

**ມາດຕາ 2 ຄວາມປອດໄພຂອງເຂື່ອນ**

ຄວາມປອດໄພຂອງເຂື່ອນ ແມ່ນການຮັບປະກັນມາດຕະຖານທາງດ້ານເຕັກນິກ ກ່ຽວກັບການສຶກສາສຳຫຼວດ, ການອອກແບບ, ການກໍ່ສ້າງ ແລະ ການດຳເນີນງານຂອງເຂື່ອນ ແລະ ອ່າງເກັບນ້ຳໃຫ້ມີຄວາມປອດໄພ, ມີຄວາມທົນທານ, ໝັ້ນຄົງ, ປ້ອງກັນຜົນກະທົບດ້ານລົບຕໍ່ຊີວິດ, ສຸຂະພາບ, ຊັບສິນຂອງພົນລະເມືອງ, ຂອງລັດ, ເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ເຂື່ອນ ໝາຍເຖິງສິ່ງກໍ່ສ້າງທີ່ສ້າງດ້ວຍ ເບຕົງ, ຫີນ, ດິນ ແລະ/ຫຼື ວັດສະດຸອື່ນ ເພື່ອກັ້ນ, ກັກເກັບ, ລະບາຍນ້ຳ ຫຼື ອ່ວຍນ້ຳ ເປັນຕົ້ນ ເຂື່ອນໄຟຟ້າ, ເຂື່ອນຫາງແຮ່, ເຂື່ອນຊົນລະປະທານ, ເຂື່ອນນ້ຳປະປາ;
2. ເຂື່ອນໄຟຟ້າ ໝາຍເຖິງເຂື່ອນທີ່ກັ້ນ ແລະ ກັກເກັບນ້ຳ ເພື່ອສະໜອງນ້ຳໃຫ້ແກ່ການຜະລິດພະລັງງານໄຟຟ້າ;
3. ເຂື່ອນຫາງແຮ່ ໝາຍເຖິງເຂື່ອນທີ່ກັກເກັບນ້ຳ ແລະ ແຮ່ຫາດທີ່ຕົກເຮ່ຍ, ເຈືອປົນກັບສິ່ງເສດເຫຼືອ ຊຶ່ງບໍ່ສາມາດເກັບກູ້ໄດ້ໝົດຈາກການຜະລິດ ແລະ ການລ້າງກັ່ນ;
4. ເຂື່ອນຊົນລະປະທານ ໝາຍເຖິງ ເຂື່ອນທີ່ຕັນແລວທາງນ້ຳ ເພື່ອຍົກລະດັບນ້ຳໃຫ້ສູງຂຶ້ນ ແນໃສ່ກັກນ້ຳເປັນອ່າງເກັບນ້ຳ ແລະ ອ່ວຍນ້ຳເຂົ້າສູ່ການຜະລິດກະສິກຳ;
5. ເຂື່ອນນ້ຳປະປາ ໝາຍເຖິງເຂື່ອນທີ່ກັ້ນ ແລະ ກັກເກັບນ້ຳ ເພື່ອສະໜອງນ້ຳໃຫ້ແກ່ການຜະລິດນ້ຳປະປາ;
6. ອຸບປະຕິເຫດຂອງເຂື່ອນ ໝາຍເຖິງ ການລົ້ມເຫຼວຂອງໂຄງສ້າງໃດໜຶ່ງ ຫຼື ການດຳເນີນງານຂອງເຂື່ອນ ຊຶ່ງຈະນຳໄປສູ່ການໄຫຼຂອງນ້ຳ ອອກຈາກອ່າງເກັບນ້ຳ ໂດຍບໍ່ສາມາດຄວບຄຸມໄດ້ ເຮັດໃຫ້ເກີດນ້ຳຖ້ວມຢູ່ເບື້ອງລຸ່ມຂອງເຂື່ອນ, ສ້າງຜົນກະທົບດ້ານລົບຕໍ່ຊີວິດ, ສຸຂະພາບ, ຊັບສິນຂອງພົນລະເມືອງ, ຂອງລັດ, ເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ;
7. ເຂື່ອນທີ່ມີຄວາມສ່ຽງຕ່ຳ ໝາຍເຖິງເຂື່ອນທີ່ມີຄວາມສູງຂອງໂຕເຂື່ອນ ຕ່ຳກວ່າສິບຫ້າແມັດ, ບໍລິມາດອ່າງເກັບນ້ຳ ຕ່ຳກວ່າໜຶ່ງແສນແມັດກ້ອນ, ບໍ່ມີປະຊາກອນອາໄສຢູ່ລຸ່ມເຂື່ອນ, ບໍ່ສ້າງຄວາມເສຍຫາຍຕໍ່ເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ;
8. ເຂື່ອນທີ່ມີຄວາມສ່ຽງກາງ ໝາຍເຖິງເຂື່ອນທີ່ມີຄວາມສູງຂອງໂຕເຂື່ອນ ແຕ່ສິບຫ້າ ຫາ ສາມສິບ ແມັດ, ບໍລິມາດອ່າງເກັບນ້ຳ ແຕ່ໜຶ່ງແສນ ຫາ ສາມລ້ານແມັດກ້ອນ, ມີປະຊາກອນອາໄສຢູ່ລຸ່ມເຂື່ອນທີ່ອາດຈະໄດ້ຮັບຜົນກະທົບແຕ່ສິບຄົນລົງມາ; ສ້າງຄວາມເສຍຫາຍຕໍ່ເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມຕ່ຳ;
9.ເຂື່ອນທີ່ມີຄວາມສ່ຽງສູງ ໝາຍເຖິງເຂື່ອນທີ່ມີຄວາມສູງຂອງໂຕເຂື່ອນຫຼາຍກວ່າສາມສິບ ຫາ ສີ່ສິບຫ້າແມັດ, ບໍລິມາດອ່າງເກັບນ້ຳຫຼາຍກວ່າສາມລ້ານ ຫາ ໜຶ່ງຮ້ອຍລ້ານແມັດກ້ອນ, ມີປະຊາກອນອາໄສຢູ່ລຸ່ມເຂື່ອນ ທີ່ອາດຈະໄດ້ຮັບຜົນກະທົບ ຫຼາຍກວ່າສິບຄົນ ຫາ ໜຶ່ງຮ້ອຍຄົນ, ສ້າງຄວາມເສຍຫາຍຕໍ່ເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມປານກາງ;
10. ເຂື່ອນທີ່ມີຄວາມສ່ຽງຮ້າຍແຮງ ໝາຍເຖິງ ເຂື່ອນທີ່ມີຄວາມສູງຂອງໂຕເຂື່ອນຫຼາຍກວ່າສີ່ສິບຫ້າແມັດ, ບໍລິມາດອ່າງເກັບນ້ຳຫຼາຍກວ່າໜຶ່ງຮ້ອຍລ້ານແມັດກ້ອນຂຶ້ນໄປ, ມີປະຊາກອນອາໄສຢູ່ລຸ່ມເຂື່ອນທີ່ອາດຈະໄດ້ຮັບຜົນກະທົບ ຫຼາຍກວ່າໜຶ່ງຮ້ອຍຄົນຂຶ້ນໄປ, ສ້າງຄວາມເສຍຫາຍຕໍ່ເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ ສູງ ຫາ ຮ້າຍແຮງ;
11. ອ່າງເກັບນ້ຳ ໝາຍເຖິງ ພື້ນທີ່ເກີດຂຶ້ນຈາກການກໍ່ສ້າງເຂື່ອນ ແລະ ກໍ່ສ້າງໂຄງສ້າງອື່ນ ເພື່ອກັກເກັບນ້ຳ, ປ້ອງກັນໄພນ້ຳຖ້ວມ, ໄພແຫ້ງແລ້ງ, ຄົມມະນາຄົມ, ການທ່ອງທ່ຽວ, ການປະມົງ ແລະ ສະໜອງນ້ຳໃຫ້ແກ່ການຜະລິດພະລັງງານໄຟຟ້າ, ອຸດສາຫະກຳ, ກະສິກຳ, ສິ່ງແວດລ້ອມ ແລະ ການດຳລົງຊີວິດ.
12. ຜູ້ທີ່ໄດ້ຮັບຜົນກະທົບ ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ໄດ້ຮັບຜົນກະທົບໂດຍກົງ ແລະ ທາງອ້ອມທີ່ເກີດຈາກການກໍ່ສ້າງ, ການດຳເນີນງານ ແລະ ບຳລຸງຮັກສາເຂື່ອນ ແລະ ມີພູມລຳເນົາຢູ່ໃກ້ກັບເຂື່ອນ;
13. ຜູ້ພັດທະນາເຂື່ອນ ໝາຍເຖິງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ເປັນເຈົ້າຂອງໂຄງການ ຫຼື ຜູ້ທີ່ໄດ້ຮັບອະນຸຍາດໃຫ້ດຳເນີນການພັດທະນາເຂື່ອນ;
14. ການພັດທະນາເຂື່ອນ ໝາຍເຖິງການດຳເນີນການກ່ຽວກັບການສຶກສາຄວາມເປັນໄປໄດ້, ອອກແບບ, ກໍ່ສ້າງ, ດຳເນີນງານຂອງເຂື່ອນ ຈົນໄປເຖິງການຢຸດເຊົານຳໃຊ້ເຂື່ອນ;
15. ເຈົ້າໜ້າທີ່ຄວາມປອດໄພຂອງເຂື່ອນ ໝາຍເຖິງ ພະນັກງານ-ລັດຖະກອນທີ່ໄດ້ຮັບການແຕ່ງຕັ້ງຈາກຂະແໜງການທີ່ກ່ຽວຂ້ອງ ໃຫ້ໄປເຄື່ອນໄຫວ ແລະ ປະຕິບັດໜ້າທີ່ຢູ່ສະຖານທີ່ສະເພາະ ຫຼື ວຽກງານໃດໜຶ່ງກ່ຽວກັບຄວາມປອດໄພຂອງເຂື່ອນ;
16. ຖານຂໍ້ມູນຄວາມປອດໄພຂອງເຂື່ອນ ໝາຍເຖິງ ລະບົບເກັບຮັກສາຂໍ້ມູນ ທີ່ສັງລວມເອົາຂໍ້ມູນຍ່ອຍດ້ານຄວາມປອດໄພຂອງແຕ່ລະເຂື່ອນໄວ້ບ່ອນດຽວກັນ ຊຶ່ງເກັບຮັກສາໄວ້ຢູ່ຂະແໜງການທີ່ກ່ຽວຂ້ອງ;
17. ເຂື່ອນຂັ້ນໄດ ໝາຍເຖິງ ບັນດາເຂື່ອນທີ່ຢູ່ໃນສາຍນ້ຳດຽວກັນ ຫຼື ອ່ວຍນ້ຳມາໃສ່ກັນ ແຕ່ສອງເຂື່ອນຂຶ້ນໄປ.

**ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບວຽກງານຄວາມປອດໄພຂອງເຂື່ອນ**

ລັດ ສົ່ງເສີມ ໃຫ້ຜູ້ພັດທະນາເຂື່ອນ ຖືເອົາວຽກງານຄວາມປອດໄພຂອງເຂື່ອນ ເປັນບຸລິມະສິດ ແລະ ສຳ ຄັນ ໃນການດຳເນີນກິດຈະການ ແລະ ທຸລະກິດກ່ຽວກັບເຂື່ອນ ໂດຍມີການນຳໃຊ້ເຕັກໂນໂລຊີທີ່ທັນສະໄໝ ແລະ ເປັນມິດກັບສິ່ງແວດລ້ອມ ພ້ອມທັງນຳໃຊ້ແຫຼ່ງຊັບພະຍາກອນທຳມະຊາດຢ່າງປະຢັດ, ມີປະສິດທິພາບ, ປະສິດທິຜົນ ຕາມທິດສີຂຽວ, ໝັ້ນຄົງ ແລະ ຍືນຍົງ.

ລັດ ຊຸກຍູ້, ສົ່ງເສີມ ໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ລົງທຶນເຂົ້າໃນການພັດທະນາວຽກງານ ຄວາມປອດໄພຂອງເຂື່ອນ ແລະ ເຂົ້າຮ່ວມໃນການປົກປັກຮັກສາໃຫ້ມີຄວາມປອດໄພ ແລະ ຍືນຍົງ.

ລັດ ຊຸກຍູ້, ສົ່ງເສີມ ໃຫ້ຜູ້ພັດທະນາເຂື່ອນ ສ້າງ, ພັດທະນາຊັບພະຍາກອນມະນຸດ, ບຸກຄະລະກອນໃຫ້ເປັນມືອາຊີບ ແລະ ຊຳນານງານ.

**ມາດຕາ 5 ຫຼັກການກ່ຽວກັບວຽກງານຄວາມປອດໄພຂອງເຂື່ອນ**

ການເຄື່ອນໄຫວວຽກງານຄວາມປອດໄພຂອງເຂື່ອນ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບແນວທາງ ນະໂຍບາຍ, ຍຸດທະສາດ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃນແຕ່ລະໄລຍະ;
2. ຮັບປະກັນຄວາມຖືກຕ້ອງ ແລະ ສອດຄ່ອງກັບມາດຕະຖານເຕັກນິກ ແລະ ລະບຽບການ ກ່ຽວກັບການຄຸ້ມຄອງຄວາມປອດໄພຂອງເຂື່ອນ, ແຜນຮັບມືສຸກເສີນ, ມີຄວາມໂປ່ງໃສ, ສາມາດກວດສອບ ແລະ ກວດ ກາໄດ້;
3. ຮັບປະກັນການນຳໃຊ້ເຕັກໂນໂລຊີທີ່ທັນສະໄໝ ເຂົ້າໃນການສຳຫຼວດ, ອອກແບບ, ກໍ່ສ້າງ, ດຳ ເນີນງານ ແລະ ການຄຸ້ມຄອງຄວາມປອດໄພຂອງເຂື່ອນ;
4. ມີການຕິດຕາມ ກວດກາ, ເຝົ້າລະວັງ, ແຈ້ງເຕືອນ ແລະ ມີມາດຕະການແກ້ໄຂໃນກໍລະນີສຸກເສີນ ແລະ ອຸບປະຕິເຫດຂອງເຂື່ອນ ໃຫ້ທັນເວລາ;
5. ຮັບປະກັນການບໍລິຫານຈັດການນ້ຳໃຫ້ເປັນລະບົບ, ມີປະສິດທິພາບ ແລະ ປະສິດທິຜົນ;
6. ຮັບປະກັນການປະສານສົມທົບ ແລະ ມີສ່ວນຮ່ວມຂອງປະຊາຊົນ ແລະ ພາກສ່ວນທີ່ກ່ຽວຂ້ອງ.

**ມາດຕາ 6 ພັນທະກ່ຽວກັບວຽກງານຄວາມປອດໄພຂອງເຂື່ອນ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພັນທະປະກອບສ່ວນ ແລະ ມີສ່ວນຮ່ວມໃນວຽກງານຄວາມປອດໄພຂອງເຂື່ອນ ເປັນຕົ້ນ ການລາຍງານ, ການປ້ອງກັນ, ການສະໜອງຂໍ້ມູນ ຂ່າວສານກ່ຽວກັບຄວາມປອດໄພຂອງເຂື່ອນ, ບໍ່ສ້າງຜົນກະທົບຕໍ່ສິ່ງແວດລ້ອມ ແລະ ຄວາມປອດໄພຂອງເຂື່ອນ ແນໃສ່ຮັບປະກັນໃຫ້ເຂື່ອນມີຄວາມປອດໄພ ແລະ ສາມາດນຳໃຊ້ຢ່າງຍາວນານ.

**ມາດຕາ 7 ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດທີ່ເຄື່ອນໄຫວ ແລະ ພົວພັນກັບວຽກງານຄວາມປອດໄພຂອງເຂື່ອນ.

ກົດໝາຍສະບັບນີ້ ນຳໃຊ້ສຳລັບເຂື່ອນທີ່ມີຄວາມສູງແຕ່ຫ້າແມັດ ແລະ ມີບໍລິມາດອ່າງເກັບນ້ຳແຕ່ໜຶ່ງແສນແມັດກ້ອນ ຂຶ້ນໄປ. ສຳລັບເຂື່ອນ ທີ່ມີລວງສູງ ຕ່ຳກວ່າ ຫ້າແມັດ ແລະ ມີບໍລິມາດອ່າງເກັບນ້ຳຕ່ຳກວ່າໜຶ່ງແສນແມັດກ້ອນ ໃຫ້ປະຕິບັດຕາມລະບຽບການຕ່າງຫາກ.

**ມາດຕາ 8 ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຄວາມປອດໄພຂອງເຂື່ອນ ດ້ວຍການປຶກສາຫາລື, ແລກປ່ຽນບົດຮຽນ, ຂໍ້ມູນ ຂ່າວສານ, ພັດທະນາຊັບພະຍາກອນມະນຸດ, ເຕັກນິກ, ວິທະຍາສາດ, ເຕັກໂນໂລຊີ, ປະຕິບັດຕາມສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

## ພາກທີ II ຂະໜາດ ແລະ ປະເພດຄວາມສ່ຽງຂອງເຂື່ອນ

**ມາດຕາ 9 ການຈັດຂະໜາດຂອງເຂື່ອນ**

ຂະໜາດຂອງເຂື່ອນ ໃຫ້ຈັດຕາມຄວາມສູງຂອງເຂື່ອນ ແລະ ບໍລິມາດຂອງອ່າງເກັບນ້ຳ.

ເຂື່ອນ ມີ ສອງຂະໜາດ ຄື:

ອ່ານຕໍ່ສະບັບໜ້າ




# ການສະແຫວງຫາ ແລະ ການໃຊ້ຈ່າຍຊັບ

# ຕົ້ນກົບເມກ



ຜູ້ຂຽນເຂົ້າໃຈວ່າ ຫຼາຍຄົນອາດຍອມຮັບເປັນສຽງດຽວກັນວ່າ ການຫາເງິນຫາຊັບເພື່ອລ້ຽງຊີບທຸກມື້ນີ້ຝືດເຄືອງ ຫຍຸ້ງຍາກ ຫຼື ບາງຄົນຫາຊັບໄດ້ ແຕ່ມີບັນຫາຂອດການໃຊ້ຈ່າຍບໍ່ເປັນ ຈຶ່ງພາໃຫ້ເກີດບັນຫາຕາມມາ ດັ່ງນັ້ນ, ການໃຊ້ຈ່າຍຊັບສິນເງິນຄຳ ກໍເປັນສິ່ງສຳຄັນເທົ່າກັບການຫາ ເພາະບົດຮຽນໃນອະດີດໄດ້ສອນໃຫ້ເຮົາໄດ້ເຫັນແລ້ວວ່າ ເຖິງຈະມີເງິນມະຫາສານ ຖ້າຈ່າຍບໍ່ເປັນ ກໍມີມື້ໝົດໂຕໄດ້.

ຜູ້ຂຽນຢາກນຳສະເໜີວິທີໃຊ້ຈ່າຍຊັບ ທາງພຸດທະສາສະໜາທີ່ພະພຸດທະເຈົ້າໄດ້ສອນໄວ້ ເລື່ອງໂພຄະວິພາກ (ການໃຊ້ຈ່າຍຊັບ) ໄດ້ແບ່ງຂັ້ນຕອນໄວ້ 5 ຫຼັກການຄື: (1) ເມື່ອຫາຊັບມາໄດ້ ຕ້ອງຮູ້ຈັກໃຊ້ຈ່າຍຊັບລ້ຽງຕົວເອງ-ພໍ່ແມ່ຄອບຄົວໃຫ້ມີຄວາມສຸກ (2) ໃຊ້ຈ່າຍຊັບບຳລຸງລ້ຽງຍາດມິດສະຫາຍ, ຜູ້ຮ່ວມວຽກຕາມຄວາມເໝາະສົມ (3) ໃຊ້ຈ່າຍຊັບເພື່ອປ້ອງກັນໄພອັນຕະລາຍຕ່າງໆທີ່ຈະເກີດຂຶ້ນກັບຊີວິດ (4) ຮູ້ຈັກໃຊ້ຈ່າຍຊັບ ເພື່ອສົງເຄາະສັງຄົມ-ຄົນອ້ອມຂ້າງເຊັ່ນ: ຈ່າຍບຳລຸງສົງເຄາະຍາດພີ່ນ້ອງ ຕ້ອນຮັບແຂກ; ຈ່າຍພາສີ; ຈ່າຍເຮັດບຸນອຸທິດແກ່ບັນພະຊົນ; ຈ່າຍຄ້ຳຊູສາສະໜາ.

ພວກເຮົາສັງເກດໄດ້ວ່າ ການແນະນຳໃຊ້ຈ່າຍຊັບ ເພື່ອມຸ່ງປະໂຫຍດຕົນ ແລະ ສັງຄົມ ບໍ່ໃຫ້ຝືດເຄືອງ. ດັ່ງນັ້ນ ການຮູ້ຈັກໃຊ້ຈ່າຍໃຫ້ເກີດປະໂຫຍດ ຈຶ່ງສຳຄັນເທົ່າກັບການຫາຊັບ, ພຸດທະສາສະໜາຍັງສອນໄວ້ລະອຽດວ່າ ການໃຊ້ຊີວິດ-ສ້າງຊັບໃຫ້ເກີດຂຶ້ນ ຕ້ອງປະກອບດ້ວຍ 4 ຫຼັກການ ດັ່ງນີ້: (1) ຜູ້ຈະຫາຊັບສົມບັດໄດ້ ຕ້ອງເປັນຜູ້ດຸໝັ່ນພາກພຽນ ຮູ້ຈັກໃຊ້ປັນຍາ ພິຈາລະນາທາງໄດ້-ທາງເສຍ (2) ເມື່ອຫາຊັບມາໄດ້ ຕ້ອງຮູ້ຈັກຮັກສາ-ໃຊ້ຈ່າຍໃຫ້ຖືກວິທີ (3) ຮູ້ຈັກຄົບມິດໝູ່ເພື່ອນ ເຊິ່ງຈະຊ່ວຍໃຫ້ຊີວິດຈະເລີນກ້າວໜ້າ (4) ຮູ້ຈັກໃຊ້ຈ່າຍຊັບໃຫ້ເກີດຄວາມສົມດູນ-ດຳເນີນຊີວິດບໍ່ຟຸມເຟືອຍ-ບໍ່ຝືດເຄືອງ.

ສັງລວມໄດ້ວ່າ: ການຫາຊັບ ມີຄວາມສຳຄັນພໍໆກັນກັບການໃຊ້ຈ່າຍຊັບ; ສຳຄັນເຮົາຕ້ອງມີສະຕິປັນຍາ ດຳເນີນຊີວິດໃຫ້ກ້າວໜ້າ-ຕັ້ງຢູ່ໃນສິນທຳ-ຄວາມດີ, ເລືອກອາຊີບສຸດຈະລິດ, ເວົ້າໃຫ້ສັ້ນຄື ເມື່ອຮູ້ຈັກຫາ ກໍຕ້ອງຮູ້ຈັກໃຊ້ໃຫ້ເປັນ.



## ຂຽນຄຳລາວໃຫ້ຖືກ

\# ຄູແສງ

| ຖືກ | ຜິດ |
|---|---|
| ກັບດີກວ່າເກົ້າ | ກັບດີກ່ອາເກົ້າ |
| ຂີ້ຕົກມັກໄດ້ | ຂີ້ຕົກມັກໃດ້ |
| ເຂົ້າຍາກໝາກແພງ | ເຂົ້າຢາກໝາກແພງ |
| ເຂັດຂວາງຫາງຫ້າມ | ເຂັດຂອາງຫາງຫ້າມ |
| ໂງ່ຈ້າຫຼ້າຫຼັງ | ໂງ່ຈ້າລ້າຫຼັງ |
| ຈຳກັດຂັດຂວາງ | ຈຳກັດຂັດຂອງ |
| ນ້ຳຕາເຊັດຫົວເຂົ່າ | ນ້ຳຕາເສັດຫົວເຄົ່າ |
| ໜ້າໄຫວ້ຫຼັງຫຼອກ | ໜ້າຫວ້າຍຫຼັງລອກ |
| ອຶດຢາກປາກແຫ້ງ | ອຶດຍາກປາກແຫ້ງ |

# ບຸນຫໍ່ເຂົ້າສະຫຼາກ



ບຸນຫໍ່ເຂົ້າສະຫຼາກ ເປັນບຸນປະເພນີສຳຄັນອັນໜຶ່ງ ໃນທາງພຸດທະສາສະໜາ ທີ່ມີມາຕັ້ງແຕ່ຄັ້ງພຸດທະການ ໂດຍໄດ້ມີການປະຕິບັດສືບທອດຕໍ່ກັນມາແຕ່ບູຮານນະການ ຮຸ່ນປູ່ຍ່າ, ຕາຍາຍ, ພໍ່ແມ່ ແລະ ລູກຫຼານຈົນມາເຖິງປັດຈຸບັນ ເຊິ່ງຈະຈັດຂຶ້ນໃນເດືອນ 10 ເພັງຂອງທຸກໆປີ ເຊິ່ງປີນີ້ ກົງກັບວັນສຸກທີ 29 ກັນຍາ; ຄຳວ່າ "ສະຫຼາກນັ້ນ" ໝາຍເຖິງເຈ້ຍນ້ອຍທີ່ພວກເຮົາຂຽນຕິດໃສ່ໃນກວຍສະຫຼາກ ຫຼື ວ່າບຸນທີ່ໃຫ້ພະພິກຂຸສົງ ສາມະເນນທັງໝົດພາຍໃນວັດ ຈັບສະຫຼາກແລ້ວຈຶ່ງໄດ້ຖວາຍທານຕາມລາຍຊື່ທີ່ພະພິກຂຸສົງ ສາມະເນນຈັບໄດ້ສະຫຼາກນັ້ນ.

ເພື່ອຈະເຮັດໃຫ້ເຂົ້າໃນນາທີ່ປັກດຳໄປນັ້ນງອກງາມ, ໄດ້ຮັບຜົນສົມບູນ ແລະ ເປັນການອຸທິດສ່ວນບຸນກຸສົນເຖິງຜູ້ທີ່ລ່ວງລັບໄປແລ້ວ ເຊິ່ງຄວາມເປັນມາຂອງບຸນເຂົ້າສະຫຼາກໃນບົດເທດສະໜາສະຫຼອງບຸນເຂົ້າສະຫຼາກໃນໜັງສືເທດສະໜາສະຫຼອງຕ່າງໆ 50 ກັນ ໄດ້ກ່າວໄວ້ວ່າ: ໃນສະໄໝກ່ອນ ຄັ້ງພຸດທະການ ຢູ່ໃນເມືອງຫົງສາວະດີມະຫານະຄອນທານີ ມີຜົວເມຍຄູ່ໜຶ່ງເປັນຄົນອະນາຖາເຂັນໃຈ ສະແຫວງຫາລ້ຽງຊີບດ້ວຍການຕັດຟືນຂາຍ ຕາມພາສາຄົນຍາກຈົນ ແຕ່ເປັນຜູ້ເຫຼື້ອມໃສໃນພຸດທະສາສະໜາ ຢູ່ມາມື້ໜຶ່ງ ຜູ້ເປັນຜົວມາຄົ້ນຄິດພິຈາລະນາການຫາລ້ຽງຊີບທີ່ຫຍຸ້ງຍາກຝືດເຄືອງ ອາດຈະເປັນຍ້ອນຕົນບໍ່ໄດ້ບຳເພັນບຸນກຸສົນ, ບໍ່ມີການໃຫ້ທານ-ຮັກສາສິນ, ບໍ່ໄດ້ຮັບຟັງທຳມະເທດສະໜາ ຈະເລີນເມດຕາພາວະນາໃນຊາດປາງກ່ອນ ເຮັດໃຫ້ຊາດນີ້ ຈຶ່ງເປັນຄົນຄອນແຄນຍາກຈົນເຂັນໃຈໄຮ້ຊັບອັບປັນຍາ ຈຶ່ງລະນຶກຈິດນ້ອມໄປສູ່ບຸນກຸສົນ ເກີດສັດທາເຈຕະນາ ມີຄວາມຮັກໄຄ່ ຈະໃຫ້ທານເພື່ອຈະເປັນຊັບສົມບັດວັດຖຸທຳຕິດຕາມໂຕໄປໃນປໍລະພົບເບື້ອງໜ້າ ເມື່ອຄິດໄດ້ດັ່ງນັ້ນ ຈຶ່ງປຶກສານຳເມຍ ແລ້ວເມຍກໍຕອບວ່າເຫັນດີ ວັນຕໍ່ມາ ຈຶ່ງໄດ້ພາກັນເຂົ້າປ່າເກັບຜັກຕັດຟືນມາຂາຍ ພໍໄດ້ເປັນມູນຄ່າ ແລ້ວກໍເອົາໄປຊື້ໝໍ້ເຂົ້າໜ່ວຍໜຶ່ງ, ໝໍ້ແກງໜ່ວຍໜຶ່ງ ອ້ອຍ 4 ລຳ, ກ້ວຍ 4 ໜ່ວຍ ນຳມາຈັດແຈງແຕ່ງເຄື່ອງໄທຍະທານສຳເລັດ ແລ້ວຈຶ່ງເຂົ້າໄປສູ່ອາຣາມ ເຮັດເປັນສະຫຼາກກະພັດທານພ້ອມກັນກັບຜູ້ຄົນອື່ນໆ ຜົວເມຍຄູ່ນັ້ນ ຈົກສະຫຼາກຖືກພະພິກຂຸຮູບໜຶ່ງ ມີຈິດໃຈຍິນດີເປັນອັນຍິ່ງ ຈຶ່ງໄດ້ນ້ອມເອົາສະຫຼາກກະພັດທານຂອງຕົນເຂົ້າໄປຖວາຍ ແລ້ວຢາດນ້ຳອຸທິດບຸນກຸສົນລົງສູ່ພື້ນດິນ ຕັ້ງຈິດປາຖະໜາວ່າ: ດ້ວຍຜົນບຸນກຸສົນຜົນທານດັ່ງກ່າວນີ້ ຂ້າພະເຈົ້າທັງສອງເກີດໃນພົບໃດໆ ໃນຊາດກຳເນີດໃດໆກໍດີ ຂໍຢ່າໄດ້ທຸກຍາກລຳບາກເຂັນໃຈ ໄຮ້ຊັບອັບປັນຍາເໝືອນດັ່ງຊາດນີ້ເທີ້ນ, ສອງຄົນຜົວເມຍດຳລົງຊີວິດຢູ່ພໍສົມຄວນແກ່ອາຍຸໄຂ ແລ້ວກໍດັບຂັນໄປຕາມສະພາບສັງຂານ ດ້ວຍອານິສົງສະຫຼາກພັດຕະທານ ຈຶ່ງໄດ້ໄປເກີດເປັນເທບພະບຸດເທບທິດາ ໃນສະຫວັນຊັ້ນດາວະດຶງສາ ສະເຫວີຍສົມບັດທິບໃນວິມານຄຳອັນຜຸດຜ່ອງ ອັນມີນາງເທບພະອັບປະສອນແວດລ້ອມເປັນບໍລິວານ ມີນາມວ່າສະຫຼາກພັດເທບພະບຸດເທບພະດາ ຄັນຈຸຕິຕາຍຈາກສະຫວັນແລ້ວ ກໍໄດ້ມາເກີດເປັນກະສັດສະເຫວີຍລາຊະສົມບັດຢູ່ໃນເມືອງພາຣານາສີ ຊື່ວ່າພະເຈົ້າສັດທາດົດ ສະເຫວີຍລາຊະສົມບັດຢູ່ 84,000 ປີເມື່ອເບື່ອໜ່າຍຈຶ່ງອອກບວດຈົນຕາຍ ແລະ ໄດ້ເອົາຕົນໄປເກີດໃນພົມມະໂລກ; ຕໍ່ມາກໍໄດ້ມາອຸບັດເປັນພະຕະຖາຄົດຂອງເຮົານີ້ເອງ ນີ້ຄືອານິສົງແຫ່ງການຖວາຍສະຫຼາກພັດນັບວ່າຍິ່ງໃຫຍ່ໄພສານ.

ພໍເມື່ອຮອດມື້ຂຶ້ນ 15 ຄ່ຳເດືອນສິບລາວຂອງທຸກໆປີ, ພໍ່ແມ່ປະຊາຊົນຊາວລາວ ໂດຍສະເພາະແມ່ນຜູ້ທີ່ນັບຖືສາສະໜາພຸດ ຈະພ້ອມກັນກຽມຈິດກຽມໃຈ ແລະ ຫາງຫາກະກຽມເຄື່ອງວັດຖຸທານ, ເຂົ້າ, ປາ, ອາຫານຄາວ-ຫວານ, ພືດຜັກ, ໝາກໄມ້, ຄຳໝາກ-ກອກຢາ ແລະ ອື່ນໆ (ຕາມແຕ່ຫາໄດ້ ) ແລ້ວນຳເອົາວັດຖຸທັງໝົດນັ້ນມາຫໍ່ເປັນຈຸກໃສ່ໃນໃບກ້ວຍ (ເປັນຫໍ່ໃຫຍ່ໆ) ພໍຮອດຕອນເຊົ້າຂອງມື້ຂຶ້ນ 15 ຄ່ຳ ກໍນຳເອົາວັດຖຸດັ່ງກ່າວໄປວັດ ພ້ອມທັງຂຽນຊື່ ແລະ ນາມສະກຸນຂອງຕົນເອງຢ່າງລະອຽດລົງໃສ່ໃນຫໍ່ດັ່ງກ່າວ ແລ້ວຈຶ່ງຖວາຍໃຫ້ແກ່ພະສົງ-ສາມະເນນ, ພ້ອມທັງໃສ່ບາດ-ຢາດນ້ຳແລະອຸທິດສ່ວນບຸນດັ່ງກ່າວໄປຫາພໍ່ແມ່, ຍາດຕິພີ່ນ້ອງ ແລະ ຜູ້ມີພະຄຸນຕ່າງໆທີ່ລ່ວງລັບໄປແລ້ວ, ສ່ວນຕອນຄ່ຳ ກໍມີການວຽນທຽນ ຫຼື ຟັງເທດສະໜາຕາມຮີດຄອງປະເພນີ ຈຶ່ງຖືວ່າສຳເລັດ. ພ້ອມດຽວກັນນີ້ ຫໍ່ສະຫຼາກນີ້ ເປັນປະເພນີທີ່ດີງາມ ເພື່ອປະຕິບັດບໍ່ໃຫ້ມີການແບ່ງຊົນຊັ້ນວັນນະໃນສັງຄົມ ເປີດໂອກາດໃຫ້ພະສົງສາມະເນນ ແລະ ຍາດໂຍມທົ່ວໄປໄດ້ມີໂອກາດໄດ້ສ່ຽງສະຫຼາກຕາມຄວາມເໝາະສົມຕາມບຸບພະກັມ ຫຼື ບຸບເພຈະກະຕະປຸນຍະຕາ ຄືເປັນຜູ້ທີ່ເຮັດບຸນຮ່ວມກັນມາແຕ່ຊາດປາງກ່ອນ ເພາະວ່າບາງຄົນກໍເຄີຍໄດ້ເປັນພີ່ ເປັນນ້ອງກັນມາແລ້ວນັບຊາດບໍ່ຖ້ວນ ອີກຢ່າງກໍເພື່ອໃຫ້ເກີດລະບົບທຳມາທິປະໄຕໄປໃນໂຕບໍ່ໃຫ້ມີຄວາມເຫຼື່ອມລ້ຳຕ່ຳສູງໃນສັງຄົມ.

ບຸນຫໍ່ເຂົ້າສະຫຼາກ ແມ່ນຮີດຄອງປະເພນີທີ່ພໍ່ແມ່ປະຊາຊົນລາວ ຊາວພຸດພວກເຮົາເຄີຍປະພຶດປະຕິບັດສືບທອດກັນມາແຕ່ບູຮານນະການຈົນເຖິງທຸກວັນນີ້ ແນວໃດກໍດີ ເພື່ອເປັນການອະນຸລັກຮັກສາ ແລະ ສືບທອດມູນເຊື້ອວັດທະນະທຳອັນດີງາມນີ້ໄວ້ໃຫ້ຢູ່ຄູ່ກັບຊາດລາວ, ຄົນລາວຕະຫຼອດໄປ ແລະ ຮຽກຮ້ອງມາຍັງທຸກພາກສ່ວນໃນສັງຄົມ ໂດຍສະເພາະແມ່ນຄົນຮຸ່ນໜຸ່ມ ຈຶ່ງພ້ອມກັນເອົາໃຈໃສ່ ແລະ ເສີມຂະຫຍາຍມູນເຊື້ອວັດທະນະທຳອັນດີງາມດັ່ງກ່າວນີ້ໃຫ້ຄົງຢູ່ສືບຕໍ່ໄປ.

**ໂດຍ: ທິດຕາ**




**ເພິ່ນວ່າ ຮັກໃດໃນໂລກນີ້ ຈະຍືນຍົງດັ່ງເສັ້ນສາຍສຳພັນຂອງມິດຕະພາບເໝືອນດັ່ງເສັ້ນໃຍທອງຄຳພັນກ້ຽວ ຖ້າຈະຂາດໄດ້ ກໍຕໍ່ເມື່ອຄວາມຕາຍມາພາກທີ່ນັ້ນແລ.**



## ສຸຂະພາບທາຍໂຣຄ

# ພຶດຕິກຳເດັກຕິດສື່ອອນລາຍ

ໂດຍ: ສາວແອ່ນ



ເນື່ອງຈາກໄລຍະນີ້ ຍັງຢູ່ໃນເທສະການເປີດສົກຮຽນໃໝ່. ດັ່ງນັ້ນ ຜູ້ຂຽນຈຶ່ງໄດ້ນຳເອົາບົດກ່ຽວກັບເດັກມານຳສະເໜີ ເພື່ອໃຫ້ເຂົ້າກັບບັນຍາກາດ ແລະ ບົດນີ້ ຈະໃຫ້ທ່ານຜູ້ອ່ານໄດ້ຮູ້ຈັກກັບພຶດຕິກຳການໃຊ້ຄຳບໍ່ສຸພາບ ຫຼື ຄຳຫຍາບຂອງເດັກ ອາດເປັນບັນຫາທີ່ຄູ ຫຼື ພໍ່ແມ່ຜູ້ປົກຄອງອາດກຳລັງວິຕົກກັງວົນ ໂດຍບໍ່ເຂົ້າໃຈເຖິງສາເຫດ ແລະ ວິທີປ້ອງກັນ ຫຼື ແກ້ໄຂ. ສະນັ້ນ, ເຮົາມາສຶກສາ ແລະ ຮຽນຮູ້ນຳກັນເບິ່ງວ່າ ມັນເກີດມາຈາກສາເຫດໃດ ແລະ ມີວິທີທາງແກ້ໄຂ ປ້ອງກັນຄືແນວໃດ

ການໃຊ້ຊີວິດໃນປັດຈຸບັນ ເຮົາຕ້ອງຍອມຮັບກ່ອນວ່າ ສື່ອອນລາຍເປັນປັດໃຈໜຶ່ງທີ່ມີບົດບາດສຳຄັນ ສັງຄົມໃນປັດຈຸບັນ ບໍ່ວ່າຈະເປັນເດັກນ້ອຍ ຫຼື ຜູ້ໃຫຍ່ ແລະ ມັນກໍເປັນປັດໄຈໜຶ່ງ ທີ່ມີອິດທິພົນເຮັດໃຫ້ເດັກເກີດການຮຽນແບບການໃຊ້ຄຳບໍ່ສຸພາບ ເພາະເດັກຄິດວ່າການໃຊ້ຄຳບໍ່ສຸພາບລະຫວ່າງໝູ່ເພື່ອນ ມັນບໍ່ແມ່ນເລື່ອງທີ່ຜິດ ແລະ ກໍເປັນທີ່ຍອມຮັບເມື່ອເວົ້າ ຫຼື ທັກທ້ວງກັນອອກມາເປັນຄຳຫຍາບຄືກັນ.

ກ່ອນອື່ນໝົດ ພໍ່ແມ່ຄວນເຂົ້າໃຈວ່າ ຄຳຫຍາບເປັນພຶດຕິກຳຕາມໄວອາຍຸຂອງເດັກນ້ອຍ ເຊິ່ງອາດຈະຮຽນແບບຈາກໝູ່ເພື່ອນ ຫຼື ຜູ້ມີອິດທິພົນໃນສື່ອອນລາຍ; ສະນັ້ນ, ລອງຫາໂອກາດສົນທະນາເຖິງຂໍ້ດີ ແລະ ຂໍ້ເສຍຂອງການໃຊ້ຄຳຫຍາບ ແລະ ແນະນຳໃຫ້ເດັກເຂົ້າໃຈວ່າ ສາມາດໄດ້ຮັບການຍອມຮັບຈາກຄົນອື່ນໄດ້ໂດຍບໍ່ມີຄຳຫຍາບ, ສະມາຊິກໃນຄອບຄົວຄວນເປັນຕົວຢ່າງທີ່ດີໃນການໃຊ້ຄຳສັບທີ່ເໝາະສົມໃນທຸກໆອະລິຍະບົດ, ພໍ່ແມ່ຄວນຊົມເຊີຍເມື່ອລູກໃຊ້ພາສາທີ່ເໝາະສົມ ໂດຍບໍ່ມີຄຳຫຍາບໃນສື່ອອນລາຍ, ຫຼຸດຜ່ອນການໃຊ້ສື່ອອນລາຍທີ່ມີເນື້ອໃນບໍ່ເໝາະສົມກັບອາຍຸຂອງເດັກນ້ອຍ ໂດຍສະເພາະຄວາມຮຸນແຮງ ແລະ ການໃຊ້ສັບພາສາ; ແນະນຳສື່ອອນລາຍ ຫຼື ຜູ້ທີ່ມີອິດທິພົນ (ເນັດໄອດໍ້) ທີ່ໃຊ້ຄຳຖືກຕ້ອງເໝາະສົມ; ຕັກເຕືອນເມື່ອມີການໂພສຂໍ້ຄວາມດ້ວຍຄຳເວົ້າທີ່ຫຍາບຄາຍ ເມື່ອເດັກນ້ອຍໃຈຮ້າຍ ຫຼື ບໍ່ພໍໃຈ ແລະ ອະທິບາຍໃຫ້ເດັກຮູ້ວ່າ ຂໍ້ຄວາມດັ່ງກ່າວຈະຢູ່ໃນອອນລາຍ ແລະ ອາດຈະມີຜົນກະທົບທາງລົບຕໍ່ກັບໂຕເຂົາໃນອະນາຄົດ.

**ຂໍ້ມູນຈາກ: www.sanook.com**

## ອາດ ກະວີລາວ

# ຈິ່ງທຳຕົວດັ່ງຝົນ

\# ຫຼານເຈົ້ານ້ອຍ

❉ ຍາມຝົນ ຝົນທັ່ງເທົ້ງ
ເທິງຖິ່ນແຖວພູຜາ
ຮວາຍຮອດທາລານ້ຳ
ລົງໃສ່ທາງບ່ອນບ້ານ

ເທຖອກລົງລົນ
ປ່າພະນາເຫວຫ້ວຍ
ໃນນາທາມທົ່ງ
ຄົນເຕົ້າອັ່ງອໍ

❉ ພວກພໍ່ນາເພິ່ນຜູ້
ກໍຄຶງຊົມເຊີຍຝົນ
ເພາະວ່ານາກຽມໄວ້
ບາດນີ້ ຝົນສົ່ງນ້ຳ

ຄອຍທ່າຝົນລົງ
ທີ່ລົນລົງໃຫ້
ນານດິນແຫ້ງເຫີບ
ລົງລົ້ນອັ່ງນາ

❉ ແຕ່ວ່າຄົນຢູ່ບ້ານ
ສ່ວນໃຫຍ່ທຽວໄປການ
ກໍລຳຄານຝົນຟ້າ
ເຮັດໃຫ້ທາງດຸ່ງດົ້ນ

ເມືອງໃຫຍ່ສີວິໄລ
ຫ່າງໄກເຮືອນຮ້ານ
ຊົນລະທາທຽວຖອກ
ເຕັມຕັ້ງແຕ່ຕົມ

❉ ໃຜຈະມາເດືອດຮ້ອນ
ໃຜຈະຍິນດີດອມ
ຝົນບໍ່ເຄີຍໂຮຮ້ອງ
ຕົກຫຼັ່ງລົນຢູ່ເລື້ອຍ

ປະຈານດ່າແນວໃດ
ຊື່ນຊົມເຊີຍຍ້ອງ
ເຄືອງໃຈໂຊມໂສກ
ຕາມໜ້າທີ່ຕົນ

❉ ຄົນທຳດີແຕ່ໄດ້
ຄົນອື່ນພາໂລທາ
ຫຼາຍຄົນດີເລີຍທໍ້
ຊີວິດມົວໝົ່ນໄໝ້

ຄຳດ່າຄືນມາ
ຕື່ມຄະດີເຕີມໃຫ້
ຖອຍໃຈໄປທຳຊົ່ວ
ພາຍຊ້ອຍມືດມົນ ກໍມີ

❉ ເກີດເປັນຄົນຈິ່ງໄດ້
ແມ່ນວ່າຄົນນິນທາ
ຫຼືວ່າຊົມເຊີຍຍ້ອງ
ໃຫ້ທຳດີທ່ຽງແທ້

ທຳດັ່ງດຽວຝົນ
ກ່າວພິຈານ ປະນາມໜ້າ
ແນວໃດກໍຕາມແຕ່
ໄປໜ້າຢ່າຖອຍ ເພື່ອນເອີຍ!






## ໜ້າຫາຍ ສະບາຍ

(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)

\# ສາວຈົ້ມ

❉ ພິທີເຊັນສັນຍາ**ການສຳຫຼວດອອກແບບ** ໂຄງການກໍ່ສ້າງ**ທາງລົດໄຟລາວ-ຫວຽດນາມ** ຈາກທ່າແຂກແຂວງຄຳມ່ວນ ທາງຊາຍແດນ **ລາວ-ຫວຽດ** ນາມ ໄລຍະທີ 1 ແລະ 2 ຈາກສົ້ນຂົວມິດຕະພາບແຫ່ງທີ 3 ຫາທ່າເຮືອຫວູງອ່າງ ມີຄວາມ**ຍາວ 250 ກິໂລແມັດ** ມູນຄ່າກໍ່ສ້າງ**ຫຼາຍກວ່າ 2 ຕື້ໂດລາສະຫະລັດ** ຈະເລີ່ມກໍ່ສ້າງໃນ**ທ້າຍປີ 2024 ແລະ ສຳເລັດໃນປີ 2028** ເຫັນຂ່າວ ໃຈຕື່ນເຕັ້ນ ເຊັນສັ່ນດີໃຈ **ເດບໍ່!** ລໍຊົມຄວາມຈະເລີນ ມໍ່ມາຫຍັບໃກ້ **ໃຫ້ຈະເລີນໄປໜ້າ** ພັດທະນາ ເຮືອງຮຸ່ງ **ລາວເອີຍ!** ຂໍຊົມເຊີຍ ພັກ-ລັດ ທັງການນຳທຸກຂັ້ນ ນຳພາສ້າງຊາດລາວ **ຊອບແລ້ວ!**

❉ **ບຸນ**ຫໍ່ເຂົ້າປະດັບດິນ **ຜ່ານພົ້ນໄປ** ຈາກນີ້ກໍກຽມຈິດ**ກຽມໃຈໃສ່ບຸນຫໍ່ເຂົ້າສະຫຼາກກາງພັນສາ** ເພື່ອສືບທາພົບບຸນ ໃຫ້ຄ້ຳຈູນໝູນຍູ້ ຊູຊ່ວຍທັງເສີມສ້າງບາລະມີແກ່ຊີວິດ ກຽມຈິດໃຈໃສ່ນີ້ ພັນສາພົ້ນເພີນ ຊ່ວງເຮືອ **ບັ້ນແລ້ວ!**

## ຊອບຍິ້ມ

\# ແອ່ນຕຸ້ງ

### ປະສົບການດຽວກັນ

ຫລັງຈາກເສຍຊີວິດ ທ້າວກີ ກໍໄປພົບຈ່າຍົມພິບານ ເລີຍຖືກຊັກຖາມເລື່ອງປະຫວັດ

**ຈ່າຍົມພິບານ:** ໃນຊີວິດເຄີຍມີບັນຫາໃຫ້ອຸກໃຈແຮງບໍ່?

**ທ້າວກີ:** ມີ

**ຈ່າຍົມພິບານ:** ເລື່ອງຫຍັງ?

**ທ້າວກີ:** ເມຍຕິດບ່າວນ້ອຍ

**ຈ່າຍົມພິບານ:** ເຈົ້າເຮັດແນວໃດ?

**ທ້າວກີ:** ຊິເຮັດແນວໃດ ໄດ້ແຕ່ໄຫ້

**ຈ່າຍົມພິບານ:** ຂ້ອຍກະເຄີຍພົບບັນຫານີ້ ຕອນເປັນມະນຸດ

**ທ້າວກີ:** ທ່ານເຮັດແນວໃດ

**ຈ່າຍົມພິບານ:** ຮ້າຍ ກູກະແປງພີໃນກ່າລະເອີຍ!

**ທ້າວກີ:** ???



## ຄະຕິເຕືອນໃຈ

\# ດອກຫຍ້າ

ຢູ່ໃກ້ເພິ່ນວ່າດີ ໜີໃກ້ເພິ່ນຄິດຮອດ




# ເຝິກ - ຝຶກ

ມີການຖົກຖຽງກັນເລື່ອງການໃຊ້ຄຳທີ່ມີຄວາມໝາຍວ່າ "ແອບ, ຫັດ, ເຮັດໃຫ້ເປັນ, ເຮັດໃຫ້ມີຄວາມຊຳນານຄ່ອງແຄ້ວ" ວ່າຄວນໃຊ້ຄຳໃດລະຫວ່າງ "ເຝິກ" ແລະ "ຝຶກ". ບາງຄົນກໍເວົ້າວ່າ ຕ້ອງໃຊ້ "ຝຶກ" ຈຶ່ງຖືກ ສ່ວນ "ເຝິກ ນັ້ນແມ່ນໃຊ້ກັບສັດປະເພດລາກແກ່ເທົ່ານັ້ນ. ແຕ່ບາງຄົນກໍວ່າຕ້ອງໃຊ້ "ເຝິກ" ເພາະເປັນຄຳລາວທີ່ໃຊ້ມາແຕ່ປາງປະຖົມບູຮານ. ເພື່ອຄວາມກະຈ່າງແຈ້ງຕໍ່ກັບບັນຫານີ້ ລຸງຄຳໄດ້ອະທິບາຍສູ່ຫຼານບຸນຍືນຟັງດັ່ງນີ້:

ຄຳທີ່ມີຄວາມໝາຍວ່າ "ແອບ, ຫັດ, ເຮັດໃຫ້ເປັນ" ນີ້, ແຕ່ດັ້ງເດີມຄົນລາວເຮົາມັກຈະໃຊ້ຄຳວ່າ "ເຝິກ". ສ່ວນຄຳວ່າ "ຝຶກ" ເລີ່ມປາກົດເຫັນໃຊ້ເປັນລາຍລັກອັກສອນຢູ່ໃນປຶ້ມແບບສອນອ່ານພາສາລາວ ປີ 1932 ເຊັ່ນ ບົດຝຶກຫັດ. ນັບແຕ່ນັ້ນມາກໍປາກົດເຫັນມີການໃຊ້ທັງ "ເຝິກ" ແລະ "ຝຶກ" ຢູ່ໃນບັນດາປຶ້ມຕ່າງໆ.

ຈົນຮອດປີ 1960 ວັດຈະນານຸກົມລາວ ສະບັບມະຫາສິລາ ວິລະວົງ ໄດ້ບັນທຶກຄຳ "ເຝິກ" ແລະ "ຝຶກ" ໂດຍນິຍາມຄຳ "ເຝິກ" ວ່າ "ແອບ, ຫັດ, ເຮັດໃຫ້ເປັນ", ສ່ວນຄຳ "ຝຶກ" ນັ້ນ ແມ່ນໃຫ້ເບິ່ງນິຍາມຢູ່ຄຳວ່າ "ເຝິກ" ເຊິ່ງກໍສະແດງວ່າ ທັງ "ເຝິກ" ແລະ "ຝຶກ" ມີຄວາມໝາຍດຽວກັນ ໃຊ້ຄຳໃດກໍໄດ້.

ນັບແຕ່ປີ 1962-1975 ຢູ່ໃນປຶ້ມແບບຮຽນຂອງກະຊວງສຶກສາທິການ ໄດ້ນຳໃຊ້ຄຳວ່າ "ເຝິກ" ເຊັ່ນ ບົດເຝິກຫັດ. ຄຽງຄູ່ກັນນັ້ນ ຄຳວ່າ "ຝຶກ" ກໍປາກົດເຫັນໃຊ້ໃນເອກະສານຈຳນວນໜຶ່ງ. ພາຍຫຼັງສ້າງຕັ້ງ ສປປ ລາວ ເປັນຕົ້ນມາ, ຢູ່ໃນປຶ້ມແບບຮຽນຂອງສະຖາບັນຄົ້ນຄວ້າວິທະຍາສາດການສຶກສາແຕ່ປີ 1976 - 2017 ກໍນຳໃຊ້ຄຳວ່າ "ເຝິກ" ດັ່ງ ບົດເຝິກຫັດ, ແຕ່ມາຮອດປີ 2020 ປຶ້ມແບບຮຽນພາສາລາວ ຊັ້ນ ປ.1 ແລະ ປ.2 ຊໍ້າພັດປ່ຽນມາໃຊ້ "ຝຶກ". ພ້ອມກັນນັ້ນ ຄຳວ່າ "ຝຶກ" ຍັງປາກົດເຫັນໃຊ້ຢູ່ໃນບາງເອກະສານ ແລະ ສື່ສິ່ງພິມ ບໍ່ວ່າໜັງສືພິມ ຫຼື ວາລະສານ.

ດ້ວຍເຫດນັ້ນ ຢູ່ໃນວັດຈະນານຸກົມພາສາລາວ ຫຼື ວັດຈະນານຸກົມລາວ-ພາສາອື່ນ ຫຼາຍສະບັບໄດ້ບັນຈຸ ທັງ "ເຝິກ" ແລະ "ຝຶກ" ເຂົ້າໃນປະມວນຄຳສັບຂອງຕົນ ເຊັ່ນ

- ວັດຈະນານຸກົມພາສາລາວ ສະບັບ ດຣ. ທອງຄຳ ອ່ອນມະນີສອນ ໄດ້ນິຍາມຄຳ "ເຝິກ" ວ່າ ເປັນຄຳກິລິຍາ ໝາຍເຖິງ "ແອບ, ຫັດ, ເຮັດໃຫ້ເປັນ, ຝຶກ" ແລະ ຍັງໄດ້ໃຫ້ຄຳນິຍາມ "ຝຶກ" ວ່າ ເປັນຄຳກິລິຍາ ໝາຍເຖິງ "ເຝິກ, ແອບ, ຫັດ ເຊັ່ນ ຝຶກງົວຝຶກຄວາຍໃຫ້ໃຊ້ປະໂຫຍດໄດ້".

- ວັດຈະນານຸກົມລາວ-ຫວຽດ ປີ 2016 ກໍໄດ້ບັນຈຸທັງສອງຄຳນີ້ ໂດຍແປຄຳວ່າ "ຝຶກ" ເປັນພາສາຫວຽດວ່າ **1. thực tập, tập luyện. 2. rèn, rèn luyện. 3. dạy, dạy dỗ, bảo ban, huấn luyện, đào tạo.** ແລະ ຢູ່ຄຳວ່າ "ເຝິກ" ກໍບອກວ່າຄືກັບ "ຝຶກ"

ຄຽງຄູ່ກັນນັ້ນ, ຢູ່ໃນວັດຈະນານຸກົມພາສາລາວ ສະບັບສະຖາບັນວິທະຍາສາດສັງຄົມແຫ່ງຊາດ ຊໍ້າພັດບັນຈຸແຕ່ຄຳວ່າ "ເຝິກ" ເທົ່ານັ້ນ ແລະ ໄດ້ໃຫ້ຄຳນິຍາມວ່າ ເຝິກ ເປັນຄຳກິລິຍາ ໝາຍເຖິງ "ແອບ, ຫັດ, ເຮັດໃຫ້ເປັນ, ເຮັດໃຫ້ມີຄວາມຊຳນານຄ່ອງແຄ້ວ ເຊັ່ນ ໃນແຕ່ລະແລງລາວໄດ້ໄປເຝິກການຟ້ອນເພື່ອຈະໄປປະກວດໃນງານປະກວດຟ້ອນງາມ"

ສະຫຼຸບແລ້ວ ທັງ "ເຝິກ" ແລະ "ຝຶກ" ລ້ວນແຕ່ໄດ້ຮັບການນຳໃຊ້ຢູ່ໃນສັງຄົມປັດຈຸບັນ ເຊິ່ງໃຊ້ໃນຄວາມໝາຍດຽວກັນ ຕ່າງແຕ່ "ເຝິກ" ເປັນຄຳທີ່ໃຊ້ມາແຕ່ເດີມດາ ສ່ວນ "ຝຶກ" ແມ່ນຄຳໃຊ້ຮ່ວມກັນກັບພາສາໄທ, ແລະ ທ່າອ່ຽງໃນການນຳໃຊ້ຫຼາຍກໍແມ່ນ "ຝຶກ" ເຊິ່ງມີຄວາມຖີ່ໃນການນຳໃຊ້ຢູ່ທາງອອນລາຍ 55 ເທື່ອໃຊ້ ສ່ວນ "ເຝິກ" ມີ 34 ເທື່ອໃຊ້. ພ້ອມດຽວກັນນັ້ນ ຢູ່ໃນປຶ້ມແບບຮຽນພາສາລາວ ຊັ້ນ ປ.1, ປ.2, ປ.3 ແລະ ປ.4 ສະບັບທີ່ຮຽບຮຽງຂຶ້ນໃໝ່ຫຼ້າສຸດ ກໍລ້ວນແຕ່ໃຊ້ "ຝຶກ".

#ຄວນເອົາໃຈໃສ່: ເວລາເຮົາຂຽນ ຫຼື ພິມເອກະສານ ຖ້າໃຊ້ຕົວໃດ ກໍໃຫ້ໃຊ້ຕົວນັ້ນຕັ້ງແຕ່ໜ້າທຳອິດຈົນເຖິງໜ້າສຸດທ້າຍ. ບໍ່ຄວນໃຊ້ທັງສອງ ເຝິກ ແລະ ຝຶກ ໃນເອກະສານດຽວກັນ.

ທ່ານເດ ເຄີຍໃຊ້ຄຳໃດລະຫວ່າງ "ເຝິກ" ແລະ "ຝຶກ"?

# IMF ຮຽກຮ້ອງໃຫ້ປະເທດ G20 ເພີ່ມແຫຼ່ງທຶນໂລກ ເພື່ອຊ່ວຍໃຫ້ພື້ນຖານເສດຖະກິດໂລກແຂງແຮງ ແລະ ໝັ້ນຄົງກວ່າເກົ່າ

ອີງຕາມການລາຍງານຂ່າວໃຫ້ຮູ້ວ່າ: ໃນວັນທີ 10 ກັນຍາຜ່ານມາ, ທ່ານ ນາງ ຄຣິສຕາລີນາ ຈໍເຈຍວາ ຜູ້ອຳນວຍການໃຫຍ່ກອງທຶນການເງິນສາກົນ (IMF) ເນັ້ນໜັກເຖິງຄວາມຈຳເປັນທີ່ຈະຕ້ອງເພີ່ມແຫຼ່ງທຶນໃຫ້ແກ່ອົງການກ່ອນທ້າຍປີ 2023. ພ້ອມດຽວກັນນັ້ນ ກໍຮຽກຮ້ອງໃຫ້ບັນດາສະມາຊິກຂອງກຸ່ມບັນດາພື້ນຖານເສດຖະກິດພັດທະນາ ແລະ ພົ້ນເດັ່ນແຖວໜ້າໂລກ (G20) ປະຕິບັດຄຳໝັ້ນສັນຍາສະໜອງທຶນ 100 ໂດລາສະຫະລັດຕໍ່ປີ ໃຫ້ແກ່ກອງທຶນເພື່ອຫຼຸດຜ່ອນຄວາມເສຍຫາຍຈາກການປ່ຽນແປງຂອງດິນຟ້າອາກາດ.

ທ່ານ ນາງ ຄຣິສຕາລີນາ ຈໍເຈວາ ຍັງເນັ້ນໜັກວ່າ: ບັນດາປະເທດຍັງຕ້ອງລະດົມແຫຼ່ງທຶນພາຍໃນປະເທດເພື່ອສະໜອງທຶນ ແລະ ຄຸ້ມຄອງຂະບວນການຫັນປ່ຽນສີຂຽວ ໂດຍຜ່ານການປະຕິຮູບນະໂຍບາຍພາສີ, ເພີ່ມປະສິດທິຜົນການໃຊ້ຈ່າຍສາທາລະນະ, ສ້າງຄວາມເຂັ້ມແຂງໃຫ້ບັນດາອົງການການເງິນ ແລະ ພັດທະນາຕະຫຼາດທຶນພາຍໃນຢ່າງເລິກເຊິ່ງ, ທ່ານຍັງຮຽກຮ້ອງໃຫ້ G20 ເສີມສ້າງເຄືອຂ່າຍຄວາມປອດໄພດ້ານການເງິນຂອງໂລກ ເພື່ອຊ່ວຍໃຫ້ພື້ນຖານເສດຖະກິດໂລກແຂງແຮງ ແລະ ໝັ້ນຄົງກວ່າເກົ່າ, ບັນດາປະເທດຕ້ອງບັນລຸໄດ້ຕົກລົງເພີ່ມທະວີແຫຼ່ງກຳລັງຊູກຍູ້ໃຫ້ IMF ກ່ອນທ້າຍປີນີ້.

ສົນທິສັນຍາດັ່ງກ່າວຈະຮັບປະກັນແຫຼ່ງທຶນທີ່ຈຳເປັນສຳລັບຄວາມພະຍາຍາມສະໜັບສະໜູນດ້ານການເງິນທີ່ບໍ່ມີດອກເບ້ຍຂອງ IMF ໃຫ້ແກ່ປະເທດທີ່ທຸກຍາກທີ່ສຸດ ໂດຍຜ່ານກອງທຶນເພື່ອການເຕີບໂຕ ແລະ ຫຼຸດຜ່ອນຄວາມທຸກຍາກ.

ໃນກອງປະຊຸມ, ບັນດາປະເທດສະມາຊິກ G20 ຍັງໃຫ້ຄຳໝັ້ນສັນຍາຈະເພີ່ມທະວີການປະຕິຮູບບັນດາທະນາຄານພັດທະນາຫຼາຍຝ່າຍ ແລະ ຮັບເອົາບັນດາຂໍ້ສະເໜີກ່ຽວກັບການຄຸ້ມຄອງເງິນດີຈິຕອນໃນທົ່ວໂລກ.

# ມຽນມາ ສົ່ງອອກສິນຄ້າກະສິກຳຫຼາຍກວ່າ 1,28 ຕື້ໂດລາ

ອີງຕາມການລາຍງານຂອງສຳນັກຂ່າວຊິນຮົວ ໄດ້ລາຍງານເມື່ອຕົ້ນເດືອນກັນຍາ 2023 ວ່າ: ກະຊວງການຄ້າມຽນມາ ໄດ້ເປີດເຜີຍບົດລາຍງານກ່ຽວກັບມຽນມາ ໄລຍະເກືອບ 5 ເດືອນ (1 ເມສາ-25 ສິງຫາ) ສາມາດສ້າງລາຍໄດ້ຈາກການສົ່ງອອກສິນຄ້າກະສິກຳໃນສົກງົບປະມານ 2023-2024 ຫຼາຍກວ່າ 1,28 ຕື້ໂດລາສະຫະລັດ.

ລາຍໄດ້ຈາກການສົ່ງອອກສິນຄ້າກະສິກຳຂອງມຽນມາໃນໄລຍະເວລາດັ່ງກ່າວ ຫຼຸດລົງຫຼາຍກວ່າ 1,45 ຕື້ໂດລາສະຫະລັດໃນໄລຍະເວລາດຽວກັນຂອງສົກງົບປະມານທີ່ຜ່ານມາ.ພ້ອມນັ້ນ, ມຽນມາສາມາດສ້າງລາຍໄດ້ຈາກການສົ່ງອອກທັງໝົດໃນໄລຍະເວລາເກືອບ 5 ເດືອນທຳອິດຂອງສົກປີງົບປະມານ 2023-2024 ຫຼາຍກວ່າ 6,16 ຕື້ໂດລາ.

ມຽນມາສົ່ງອອກສິນຄ້າກະສິກຳທີ່ຜະລິດຈາກສັດ ແລະ ທະເລ, ຜະລິດຕະພັນຈາກປ່າ ແລະ ສິນຄ້າອຸດສາຫະກຳໄປຍັງຄ້າຕ່າງປະເທດເຊັ່ນ: ຈີນ, ໄທ, ບັງກລາເທດ ແລະ ອິນເດຍ.

# ອາເມຣິກາ ແລະ ຫວຽດນາມ ປະກາດຍົກລະດັບການພົວພັນເປັນຄູ່ຮ່ວມຍຸດທະສາດຮອບດ້ານ

ໃນວັນທີ 11 ກັນຍານີ້ ມີລາຍງານວ່າ: ທ່ານ ນາງ ເໝົາໜິງ ໂຄສົກກະຊວງການຕ່າງປະເທດຈີນ ໄດ້ເປັນປະທານກອງປະຊຸມຖະແຫຼງຂ່າວ ເຊິ່ງມີນັກຂ່າວຖາມວ່າ, ອາເມຣິກາ ແລະ ຫວຽດນາມ ປະກາດຍົກລະດັບການພົວພັນລະຫວ່າງສອງປະເທດຂຶ້ນເປັນຄູ່ຮ່ວມຍຸດທະສາດຮອບດ້ານ, ຈະຮ່ວມມືໃນຂົງເຂດເຊມິຄອນດັກເຕີ, AI, ຊັບພະຍາກອນບໍ່ແຮ່ທີ່ສຳຄັນ ແລະ ອື່ນໆ. ຈີນມີຄວາມເຫັນຄືແນວໃດຕໍ່ກັບເລື່ອງນີ້?

ທ່ານ ນາງ ເໝົາໜິງ ຕອບວ່າ: ກ່ຽວກັບການພົວພັນລະຫວ່າງອາເມຣິກາ-ຫວຽດນາມ, ພວກຂ້າພະເຈົ້າໄດ້ເອົາໃຈໃສ່ເລື່ອງທີ່ຫວຽດນາມໄດ້ເນັ້ນໜັກຫຼາຍເທື່ອແລ້ວວ່າ: ການພັດທະນາການພົວພັນຄູ່ຮ່ວມມືຍຸດທະສາດຮອບດ້ານລະຫວ່າງຈີນ-ຫວຽດນາມແມ່ນທິດທາງບູລິມະສິດດ້ານການຕ່າງປະເທດຂອງຫວຽດນາມ ທັງແມ່ນບູລິມະສິດທຳອິດໃນການໄປມາຫາສູ່ກັນກັບຕ່າງປະເທດຂອງຫວຽດນາມ.

ທ່ານ ນາງ ເໝົາໜິງ ກ່າວຕື່ມວ່າ: ຈີນເຫັນວ່າ: ປະເທດຕ່າງໆຂະຫຍາຍການພົວພັນສອງຝ່າຍ ບໍ່ຄວນແນໃສ່ຝ່າຍທີສາມ, ບໍ່ຄວນທຳລາຍສັນຕິພາບ, ສະຖຽນລະພາບ, ການພັດທະນາ ແລະ ຄວາມຈະເລີນຮຸ່ງເຮືອງຂອງພາກພື້ນ.ເມື່ອປະຕິບັດການພົວພັນກັບປະເທດອາຊີ, ຈີນຮຽກຮ້ອງໃຫ້ອາເມຣິກາຕ້ອງເຄົາລົບຄວາມປາຖະໜາຮ່ວມຂອງປະເທດໃນພາກພື້ນເພື່ອສະແຫວງຫາສະຖຽນລະພາບ, ຊຸກຍູ້ການຮ່ວມມື ແລະ ພັດທະນາຮ່ວມກັນ, ເຄົາລົບຫຼັກການພື້ນຖານໃນການພົວພັນສາກົນ, ປະຖິ້ມແນວຄິດເຈົ້າອຳນາດ ແລະ ສົງຄາມເຢັນ.




# ວິທີເຮັດວຽກ

**ພາກທີ 4**

**ມາລະຍາດ ແລະ ຄຸນສົມບັດຂອງນັກປະຕິວັດ (ຕໍ່)**

ຕັ້ງແຕ່ກ່ອນ ມາຈົນເຖິງດຽວນີ້ ແມ່ນບໍ່ມີຈັກເທື່ອທີ່ປະຊາຊົນຈະຮ່າວໄປເຊື່ອຖື ແລະ ຮັກແພງຜູ້ທີ່ອວດອົ່ງ ອວດດີ ຜູ້ທີ່ມີແນວຄິດຢາກເປັນຜູ້ນຳ ອ້າງຕົວເອງວ່າເປັນວິລະຊົນ ແລະ ເປັນຜູ້ນຳ ດັ່ງນັ້ນ. ເມື່ອເອົາປຽບໃສ່ ວຽກການຂອງມະນຸດຊາດໃນທົ່ວໂລກແລ້ວ ເຫັນວ່າຜູ້ທີ່ເປັນວິລະຊົນທີ່ຍິ່ງໃຫຍ່ຂອງໂລກ ກໍຍັງເຮັດລ້ວນແຕ່ພຽງສ່ວນດຽວຂອງໜ້າທີ່ຂອງເພິ່ນທໍ່ນັ້ນ. ແຕ່ລະຄົນພວກເຮົານີ້ ຖ້າຫາກພະຍາຍາມເຮັດວຽກງານທີ່ພັກມອບໝາຍໃຫ້ຢ່າງຄົບຖ້ວນໄດ້ນັ້ນ ກໍແມ່ນພວກເຮົາເຮັດລ້ວນໜ້າທີ່ຂອງພວກເຮົາ ຄວາມດີໃຈຂອງພວກເຮົາ ທີ່ເຮັດໜ້າທີ່ລ້ວນມານັ້ນ ມັນຈະຊ່ວຍໃຫ້ພວກເຮົາກ້າວຂຶ້ນໄປເລື້ອຍໆ.

**6. ພະຍາດອື່ນໆອີກ.**

**ກ) ພະຍາດຮູບນອກ:**

ເຮັດວຽກບໍ່ຈິງໃຈ, ບໍ່ເຮັດຕັ້ງແຕ່ກົກແຕ່ເຄົ້າແຕ່ບ່ອນຕົ້ນມາ, ບໍ່ເຮັດຕັ້ງແຕ່ຕໍ່າໄປເຖິງສູງ, ເຮັດພໍແລ້ວເລື່ອງ, ເຮັດພໍໃຫ້ເຫັນວ່າໄດ້ເຮັດ, ເຮັດໄດ້ພຽງເລັກນ້ອຍກໍເວົ້າຍົກເວົ້າຍໍຂຶ້ນໃຫ້ເປັນຫຼາຍ ເພື່ອຈະໄດ້ເຮັດລາຍງານໃຫ້ໂກ້ໃຫ້ງາມ, ແຕ່ວ່າເມື່ອເບິ່ງຄັກກໍເຫັນວ່າເປັນຂອງເປົ່າຫວ່າງເນື້ອໃນ.

ຍົກຕົວຢ່າງຢູ່ທຸກບ້ານ, ທຸກເມືອງ, ທຸກແຂວງແລ້ວ : ຄົນຊັ້ນໃດກໍໄດ້ເອົາເຂົ້າໃນການຈັດຕັ້ງແລ້ວ, ນັບຈຳນວນບໍ່ມີເຖິງພັນເຖິງໝື່ນຄົນແລ້ວ, ແຕ່ເມື່ອຍົກເອົາແຕ່ລະຂໍ້ຂອງລາຍງານນັ້ນມາກວດກາເບິ່ງຄັກແນ່ ແລະ ຖາມເຂົ້າລາຍລະອຽດວ່າ ແຕ່ລະການຈັດຕັ້ງນັ້ນເຮັດວຽກຫຍັງ? ພະນັກງານໄດ້ໄປເຖິງທ້ອງຖິ່ນທີ່ດັ່ງນັ້ນຈັກເທື່ອ; ໄດ້ເຮັດຫຍັງຊ່ວຍອົງການຈັດຕັ້ງນັ້ນແລ້ວ. ດັ່ງນັ້ນກໍເລີຍບໍ່ເຫັນມີສິ່ງໃດເປັນຄວາມຈິງ.

ເຮັດແນວນັ້ນບໍ່ແມ່ນເຮັດລ້ວນໜ້າທີ່ຂອງຕົນ, ແມ່ນຂີ້ຕົວະ ແລະ ຫຼອກລວງພັກ, ການເຮັດວຽກບໍ່ແທດເຖິງຕົວຈິງ ແລະ ລາຍງານບໍ່ຈິງໃຈ ກໍເປັນພະຍາດທີ່ເປັນໄພອັນຕະລາຍທີ່ສຸດ.

ອ່ານຕໍ່ສະບັບໜ້າ...

ເຝົ້າໄວ້ ໄດ້ບົດຮຽນ

❖ ວິເສດ ສະແຫວງສຶກສາ

# ຮຽນຮູ້ກົດໝາຍຕ້ານການກໍ່ການຮ້າຍຂອງບາງປະເທດ

ຍ້ອນຄືນຫຼັງເມື່ອປະມານ 7 ປີຜ່ານມາ, **ອິນໂດເນເຊຍ,** ປະເທດສະມາຊິກອາຊຽນ ໄດ້ຮ່າງສຳເລັດ ແລະ ປະກາດໃຊ້ກົດໝາຍການຕ້ານການກໍ່ການຮ້າຍ ສະບັບປັບປຸງ ທີ່ມີຄວາມເຂັ້ມຂຸ້ນ ແລະ ເດັດຂາດຂຶ້ນກວ່າມາດຕະຖານທີ່ເຄີຍປະຕິບັດມາກ່ອນໜ້ານັ້ນ. ກົດໝາຍສະບັບນີ້ ໄດ້ໃຫ້ອຳນາດເຈົ້າໜ້າທີ່ໃນການກັກຕົວຜູ້ຖືກສົງໄສໂດຍບໍ່ຕ້ອງມີການສືບສວນ ໄດ້ສູງສຸດເຖິງ 3 ເດືອນ. ກົດໝາຍສະບັບເກົ່າໄດ້ໃຫ້ຄຳນິຍາມ "ການກໍ່ການຮ້າຍ" ແບບຫຼົມໆ ລວມໆ ບໍ່ລະອຽດຮັດກຸມ. ກົດໝາຍສະບັບປັບປຸງໄດ້ຕີຄວາມໝາຍຂອງການກໍ່ການຮ້າຍໄວ້ຢ່າງລະອຽດເລິກເຊິ່ງ ແລະ ກວ້າງຂວາງທີ່ສຸດຄື ກວມເອົາທັງການຄອບຄອງ, ການແຈກຢາຍ ແລະ ການຄ້າອາວຸດ ຫຼື ວັດຖຸທີ່ສາມາດນຳໃຊ້ເປັນອາວຸດເພື່ອກໍ່ການຮ້າຍ. ນອກຈາກນັ້ນ, ຍັງຂະຫຍາຍເວລາກັກຕົວຜູ້ຖືກສົງໄສໂດຍບໍ່ຕ້ອງສືບສວນໄດ້ສູງສຸດ 90 ວັນ ແລະ ສາມາດກັກຂັງເພື່ອຄວາມປອດໄພ ໄດ້ສູງສຸດ 120 ວັນ, ກົດໝາຍສະບັບເກົ່າ ອະນຸຍາດໃຫ້ກັກຂັງເພື່ອຄວາມປອດໄພໄດ້ພຽງ 1 ອາທິດເທົ່ານັ້ນ. ບຸກຄົນທີ່ມີສ່ວນຊັກຈູງຄົນອື່ນໃຫ້ໄປຮ່ວມມືກັບກຸ່ມກໍ່ການຮ້າຍຕິດອາວຸດ, ຜູ້ຂາຍຄວາມລັບຂອງຊາດ, ຜູ້ຮ່ວມມືໂດຍກົງດ້ວຍຕົນເອງກັບກຸ່ມກໍ່ການຮ້າຍ, ການອຳນວຍຄວາມສະດວກໃຫ້ກຸ່ມດັ່ງກ່າວສາມາດນຳໃຊ້ລະບົບສື່ສານເອເລັກໂຕຣນິກກໍ່ລ້ວນແລ້ວແຕ່ຈະຖືກລົງໂທດຢ່າງໜັກ ຕາມກົດໝາຍສະບັບປັບປຸງນີ້. ກົດໝາຍຍັງໄດ້ກຳນົດໂທດຍົກເລີກສັນຊາດສຳລັບພົນລະເມືອງອິນໂດເນເຊຍທີ່ເຂົ້າຮ່ວມການຝຶກແອບກັບກຸ່ມຕິດອາວຸດ ຫຼື ເຂົ້າຮ່ວມຂະບວນການກໍ່ການຮ້າຍຢູ່ຕ່າງປະເທດ.

ຢູ່**ປະເທດຝຣັ່ງ** ໄດ້ມີເຫດການກໍ່ການຮ້າຍຄັ້ງຮ້າຍແຮງທີ່ສຸດ ເກີດຂຶ້ນໃນທ້າຍປີ 2015 ເຊິ່ງເຮັດໃຫ້ມີຜູ້ເສຍຊີວິດຈຳນວນ 130 ຄົນ ແລະ ບາດເຈັບອີກຈຳນວນຫຼາຍຮ້ອຍຄົນ. ນັບແຕ່ເວລານັ້ນເປັນຕົ້ນມາ, ທາງການຝຣັ່ງໄດ້ສ້າງມາດຕະການປ້ອງກັນຄວາມປອດໄພ ໂດຍເນັ້ນກຳຈັດກຸ່ມຫົວຮຸນແຮງ-ກຸ່ມກໍ່ການຮ້າຍ. ຕໍ່ມາໃນວັນທີ 22 ມິຖຸນາ 2017, ທ່ານ ເອັມມານູແອນມາກຼົງ, ປະທານາທິບໍດີຝຣັ່ງ ກໍໄດ້ລົງລາຍເຊັນປະກາດໃຊ້ກົດໝາຍຕ້ານການກໍການຮ້າຍສະບັບໃໝ່ ທີ່ມີຄວາມເຂັ້ມແຂງເດັດຂາດ. ກົດໝາຍໄດ້ເພີ່ມອຳນາດໃຫ້ບັນດາອົງການປົກຄອງທ້ອງຖິ່ນໃນການຮັບປະກັນຄວາມສະຫງົບ ແລະ ແກ້ໄຂເຫດການວຸ້ນວາຍຕາມສະຖານທີ່ຕ່າງໆທີ່ເຫັນວ່າມີຄວາມສ່ຽງ ແລະ ເປັນອັນຕະລາຍຈາກການຖືກໂຈມຕີແບບກໍ່ການຮ້າຍ. ໃນກໍລະນີເຫດການບໍ່ສະຫງົບເກີດຂຶ້ນເຊິ່ງໜ້າ, ອົງການປົກຄອງທ້ອງຖິ່ນສາມາດແກ້ໄຂດ້ວຍມາດຕະການອັນຈຳເປັນໂລດ ໂດຍບໍ່ຈຳເປັນລໍຖ້າຄຳສັ່ງຈາກສານຄືໃນເມື່ອກ່ອນ. ອົງການປົກຄອງທ້ອງຖິ່ນຍັງມີສິດຕິດຕັ້ງຮົ້ວ ຫຼື ໃຊ້ວັດຖຸກີດກັນຄວາມປອດໄພໃນເຂດທີ່ມີເຫດການວຸ້ນວາຍ ເພື່ອບໍ່ໃຫ້ຄົນທາງນອກເຂົ້າໄປເຂດຫວງຫ້າມດັ່ງກ່າວ. ໃນເມື່ອກ່ອນມີພຽງເຈົ້າໜ້າທີ່ຕຳຫຼວດ ຫຼື ເຈົ້າໜ້າທີ່ຮັບຜິດຊອບ, ຄວາມໝັ້ນຄົງເທົ່ານັ້ນທີ່ສາມາດຕິດຕັ້ງເຄື່ອງມືປ້ອງກັນເຂດຫວງຫ້າມ. ພິເສດໄປກວ່ານັ້ນ, ພາຍໃຕ້ກົດໝາຍສະບັບນີ້, ອົງການປົກຄອງທ້ອງຖິ່ນຍັງສາມາດກວດກາເຄື່ອງປະດັບເອ້ຍ້ອງສ່ວນຕົວຂອງບຸກຄົນທີ່ຖືກສົງໄສ ແລະ ສາມາດປິດພື້ນທີ່ທາງສາສະໜາ ເປັນເວລາ 6 ເດືອນ ຖ້າມີຫຼັກຖານການພິສູດໄດ້ວ່າດ້ວຍຫຼັກຖານ ຫຼື ສະຖານທີ່ທາງສາສະໜາດັ່ງກ່າວ ມີສ່ວນສະໜັບສະໜູນ ລັດທິຫົວຮຸນແຮງກໍຄືກຸ່ມກໍ່ການຮ້າຍ.

ຢູ່**ປະເທດມາເລເຊຍ**ນັ້ນ ທາງການໄດ້ໃສ່ໃຈຕິດຕາມໂຮງຮຽນສອນສາສະໜາ ກໍ່ຄືຜູ້ນຳທາງສາສະໜາທີ່ມີສ່ວນປຸກລະດົມໃຫ້ຊາວໜຸ່ມນິຍົມໃຊ້ຄວາມຮຸນແຮງ ໂດຍອ້າງເຫດຜົນທາງສາສະໜາ. ຂ່າວບອກວ່າມີຊາວໜຸ່ມມາເລເຊຍຈຳນວນໜຶ່ງຖືກຂົນຂວາຍໃຫ້ເດີນທາງໄປເຂົ້າຮ່ວມຂະບວນການນັກຮົບໄອສິດ (ໄອເອສ) ຫົວຮຸນແຮງຢູ່ຕາເວັນອອກກາງ.




## ເລົ່າເລື່ອງຕະຫຼົກ

*#ບ່າວກະບື*

ພະຍາ ວິນລຽມ ທອມສັນ ເປັນຄົນຫູໜວກອື້ງທີ່ສຸດ ແຕ່ທ່ານບໍ່ຢາກໃຫ້ໃຜຮູ້ເລື່ອງນີ້. ແລງວັນໜຶ່ງ ທ່ານພະຍາເຊີນເພື່ອນໆມາຮັບປະທານອາຫານແລງ. ເມື່ອທຸກໆຄົນເຂົ້າໂຕະເປັນທີ່ຮຽບຮ້ອຍແລ້ວ ເພື່ອນຄົນໜຶ່ງເລີຍເລີ່ມເລົ່າເລື່ອງມ່ວນຊວນຫົວ. ຟັງແລ້ວ ທັງໝົດພາກັນຫົວ. ພະຍາວິນລຽມເອງ ກໍຫົວສຽງດັງສໍ່າກັບຄົນອື່ນ ທັງເວົ້າຂຶ້ນວ່າ: " ເລື່ອງນີ້ຕະຫລົກສຸດໆແຕ່ເຮົາຍັງມີເລື່ອງຄັກກວ່ານີ້ອີກ, ມີໃຜຢາກຟັງບໍ່ລະ? " ແຂກທຸກຄົນຕອບວ່າ ຢາກຟັງ. ດັ່ງນັ້ນ ພະຍາ ວິນລຽມ ຈຶ່ງເລີ່ມເລື່ອງຂອງເຂົາ. ພໍເລົ່າສຸດ, ທຸກໆຄົນພາກັນເປັ່ງສຽງຫົວອອກມາດັງກວ່າເກົ່າ. ພະຍາວິນລຽມ ຍິ້ມຢ່າງສຸກໃຈ. ແຕ່ທ່ານພະຍາບໍ່ຮູ້ເຫດຜົນໃນການຫົວຂອງແຂກ. ທີ່ແທ້... ທ່ານພະຍາເລົ່າຊໍ້າເລື່ອງທີ່ແຂກຄົນກ່ອນຫາກໍ່ເລົ່າສຸດນັ້ນເອງ.

## TELLING A JOKE

*#BAOKBU*

Sir William Thomson was very deaf but he did not like people to know this, One evening he had invited several friends to dinner, and while they were sitting at the table, one of the friends told a funny story.

Everyone laughed and sir William who had laughed as loud as anyone, said : " That was very funny joke, but I know a funnier one. Would you like to hear it ? " They all said that they would, so sir William began his story, When it ended, everyone laughed louder than ever and sir William smilled happily. But he didn't know the reason for their laughter. He had told the very same story that his friend had just told.




ຈອດລົດຮ່ວມກັບຫຼາຍຄັນຕ້ອງຕາມລະບຽບ

● ໂດຍ : ພູຜາ

ທະນາຄານພັດທະນາລາວ
LDB Bank

ບໍລິສັດ ຫຼວງພະບາງ ພາວເວີ ຈຳກັດ
LUANG PRABANG POWER COMPANY LIMITED

ກຸ່ມບໍລິສັດ ອີພີແອວ ຈຳກັດຜູ້ດຽວ
EPL GROUP SOLE CO.,LTD

**ຜູ້ຊີ້ນຳ :** ທ່ານ ສົງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ :** ທ່ານ ສີສຸພັນ ແສງສະຫວັນ; ທ່ານ ວິເສດ ສະແຫວງສຶກສາ; ທ່ານ ທອງດາ ສຸພາສິດ; ທ່ານ ຄຳຫວັນ ດາລາວົງ

**ຄະນະບັນນາທິການ :** ທ່ານ ປອ. ພົດສະໄໝ ບຸນວິໄລ ຫົວໜ້າ ບກ; ທ່ານ ອັນທະວີ ວົງພະຈັນ ຮອງ; ທ່ານ ເປຄຳ ລໍຄຳສອນ ຮອງ

**ກອງບັນນາທິການ :** ນາງ ກົງໃຈ ແສງອຳພັນ; ນາງ ສຸພາວັນ ທອມສະນິດ; ນາງ ປາກາລັກ ພົມມີໄຊ

**ອອກແບບ - ຈັດໜ້າ :** ນາງ ນິດຕາ ຄຸນປາກດີ